# <u>ກຸ່ມຜູ້ຈັດທຳ ການສຶກສາພຣະຄັມພີພາສາລາວ</u>

Copyright © 2002 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ.  ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ.  ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ:  ເດືອນ ມີນາ, ໒000

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office:  Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-6
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 7-9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7-9
Phaisane Somsith, Samakeetam Baptist Fellowship, Dallas, Texas

Bible Study Writer for Lessons 10-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10-13
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ບົດຮຽນທີ 1

## ຈົ່ງສາລະພາບວ່າພວກເຮົາຕ້ອງການພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອຊາຢາ 64:1-9
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອຊາຢາ 3:7-64:12
ຈຸດສຳຄັນສຳລັບບົດຮຽນນີ້: ການສເລີມສລອງຄຣິສມາດທີ່ແທ້ຈິງນັ້ນແມ່ນເລີ້ມຕົ້ນຢູ່ທີ່ຄວາມຮຽກຮ້ອງຕ້ອງການຂອງພວກເຮົາ.
ຄຳຖາມເພື່ອສຳຫລວດ: ດ້ວຍຈິດສຳນຶກທີ່ພວກເຮົາມີຢູ່, ພວກເຮົາຕ້ອງການພຣະເຈົ້າຢ່າງຈິງຈັງແທ້ບໍ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະສອນໃຫ້ທ່ານທັງຫລາຍ ສາລະພາບວ່າ ພວກເຮົາຕ້ອງການພຣະເຈົ້າຢ່າງແທ້ຈິງ.

### ຄຳນຳ

ພວກເຮົາຫມົດທຸກຄົນຕ້ອງການພຣະເຈົ້າ, ແຕ່ວ່າພວກເຮົາບໍ່ຮູ້ຕົວເຮົາເອງ ວ່າຕ້ອງການພຣະເຈົ້າ. ບໍ່ວ່າຍຸກໃດ ສມັຍໃດ ມະນຸດແມ່ນຕ້ອງການພຣະເຈົ້າ. ໃນທຸກວັນນີ້, ຄົນອະເມຣິກັນ, ຄົນໄທ, ຄົນລາວ, ຄົນວຽດນາມ, ແລະຊາດອື່ນໆ...... ເຫັນສິ່ງອື່ນສຳຄັນກວ່າພຣະເຈົ້າ, ເຫັນວ່າພຣະເຈົ້າ ບໍ່ມີຄວາມສຳຄັນ ແລະບໍ່ມີສ່ວນຮ່ວມໃນຊີວິດຂອງພວກເຂົາ. ເມື່ອຄາວກ່ອນ ຂ້າພະເຈົ້າເອງ ກໍບໍ່ມີຄວາມສົນໃຈໃນພຣະເຈົ້າ ຂ້າພະເຈົ້າມີຄວາມຮູ້ພໍທີ່ຈະລ້ຽງຕົວເອງແລະຄອບຄົວໄດ້. ແຕ່ເມື່ອໄດ້ມາສຶກສາ ຮຽນຮູ້ເທື່ອລະເລັກລະນ້ອຍ ຈຶ່ງໄດ້ຮູ້ວ່າມະນຸດແມ່ນຕ້ອງການພຣະເຈົ້າ. ພວກເຮົາທຸກຄົນຕ້ອງການພຣະເຈົ້າ ແຕ່ພວກເຮົາບໍ່ຮູ້ສຶກວ່າຕົວເອງຕ້ອງການ.

## ປະວັດຄວາມເປັນມາ:

ຄວາມເປັນມາຂອງເອຊາຢາ ໃນບົດທີ 56-66 ແມ່ນເຣື່ອງຄົນອິສຣາເອນ ຕອນເຄິ່ງຫລັງຂອງສັຕວັດທີ 6 ກຄສ (ກ່ອນຄຣິສຕສັກະຣາດ). ປະຊາຊົນຊາວບາບີໂລນ ທີ່ຖືກກວາດໄປເປັນຊະເລີຍ ໄດ້ສິ້ນສຸດລົງ ໃນປີ 538 ກຄສ ດ້ວຍການປະກາດຂອງປະເທດໄຊຣັດ. (ອ່ານ ເອສຣາ 1:2-3)

ປະຊາຊົນທີ່ຖືກກວດໄປເປັນຊະເລີຍໃນປີ 598 ແລະປີ 587 ນັ້ນ ກໍໄດ້ພາກັນຢ່າງລາກຂາກັບ ຄືໄປປາແລສໄຕ. (ເອຊາຢາ 64:11) ສ່ວນປະຊາຊົນຢູດາ ທີ່ເຄີຍໃຊ້ຊີວິດ ຢູ່ໃນບາລີໂລນນັ້ນ ບໍ່ຍອມກັບໄປ ເຢຣູຊາເລັມ. ພວກທີ່ມີອາຍຸ 50 ລົງມາ ບໍ່ຮູ້ເຣື່ອງຣາວຜ່ານມາອັນໃດທັງນັ້ນ. ສ່ວນພວກທີ່ກັບໄປກໍພາກັນສ້າງວິຫານ. ວິຫານທີ່ສ້າງຂຶ້ນມານັ້ນ ບໍ່ສົດສວຍງົດງາມເຫມືອນກັບວິຫານທີ່ຊາໂລໂມນສ້າງຂຶ້ນ ແຕ່ຖືກທຳລາຍໂດຍ ເນບູກັດເນັດຊາ ໃນປີ 587 ກຄສ. ພວກທີ່ເກີດໃຫມ່ໃຫຍ່ລຸນ ທີ່ບໍ່ເຄີຍເຫັນວິຫານຂອງຊາໂລໂມນກໍດີໃຈ ແຕ່ພວກທີ່ເຫັນຜ່ານມາ ກໍມີຄວາມໂສກເສົ້າ ສລົດໃຈ ເຖິງກັບຮ້ອງໄຫ້ ເພາະຖ້າທຽບໃສ່ກັບວິຫານຂອງຊາໂລໂມນແລ້ວແມ່ນໄກກັນຫລາຍ. (ເອສຣາ 3:10-13)

ຊ່ວງໄລຍະນີ້, ປະຊາຊົນມີຄວາມທໍ້ຖອຍ ແລະ ການສ້າງສາ ກໍຢຸດຊະງັກລົງເປັນເວລາ 2 ສັຕວັດ) ຍ້ອນມີການຂັດແຍ້ງໃນການຖວາຍ. ໃນປີ 520 ກຄສ ໄດ້ມີຜູ້ພະຍາກອນ 2 ທ່ານຄື ຮັກໄກ ແລະ ເຊຄາຣີຢາ ມານຳພາ, ການສ້າງສາຈຶ່ງສຳເຣັດໃນ 4 ປີຕໍ່ມາ. (ເອສຣາ 6:1-15)

## ຄຳສອນແລະຄຳອ້ອນວອນສຳລັບການສະເດັດມາ (64:1-5)

ຖ້າຈະເບິ່ງຄືນ ໃນເອຊາຢາ 63:15, ພວກເຮົາຈະເຫັນໄດ້ວ່າ ສຽງຮຽກຮ້ອງໃຫ້ ພຣະເຈົ້າແຫວກທ້ອງຟ້າສວັນແລ້ວຫລຽວແລເບິ່ງສະພາບທີ່ຫນ້າສົງສານຂອງຄົນໃນປາແລສໄຕ. ແລ້ວມາເບິ່ງ ໃນບົດ 64:1 "ໂອ, ເປັນຫຍັງພຣະອົງຈຶ່ງບໍ່ແຫວກທ້ອງຟ້າ ແລ້ວສະເດັດລົງມາ? ພູທັງຫລາຍຈະເຫັນພຣະອົງ ແລະຢ້ານກົວຈົນສັ່ນເຊັນ." ຜູ້ພະຍາກອນ ຮຽກຮ້ອງໃຫ້ພຣະເຈົ້າສະເດັດມາ. ຄຳວ່າ "ສະເດັດມາ" ຫມາຍຄວາມວ່າ ເຂົ້າມາຊ່ວຍກູ້ ອ່ານ ເອຊາຢາ 64: 1-5 ແລ້ວກໍຄິດລອງເບິ່ງ ໃນຄຳອ້ອນວອນຂອງເອຊາຢາ ແລະຄຳທູນຂໍໃຫ້ພຣະເຈົ້າ ສະເດັດມາ. ຫລັງຈາກນັ້ນກໍ ຄິດນຳກັນວ່າຈະເປັນການດີຫລາຍປານໃດ ທີ່ພຣະເຈົ້າເຂົ້າມາຊ່ວຍໂລກໃຫ້ມີການປ່ຽນແປງ. ພຣະເຈົ້າຜູ້ຊົງຣິດທານຸພາບ ສະເດັດມາເປັນມະນຸດ ແລະມາສະຖິດຢູ່ນຳພວກເຮົາ. ການສະເດັດມາຄັ້ງທີສອງ ພວກເຮົາຍັງບໍ່ທັນເຫັນເທື່ອ ເວລາໂປໂລຄິດເຖິງຄວາມດີຂອງພຣະເຈົ້າ, ລາວຈຶ່ງໄດ້ອີງໃສ່ ເອຊາຢາ 64:4 "ບໍ່ມີຜູ້ໃດເຄີຍເຫັນແລະຍິນເຖິງພຣະເຈົ້າ ດັ່ງພຣະອົງ ຄືອົງທີ່ໄດ້ທຳພາຣະກິດ ເຊັ່ນນີ້ ສຳລັບຄົນທີ່ມອບຄວາມຫວັງໄວ້ກັບຣະອົງ." (1ໂກຣິນໂທ 2:9) ໂປໂລອີງຕາມຄວາມຊົງຈຳ ຫລື ອີງຕາມພຣະຄັມພີເດີມ ຊຶ່ງເປັນພາສາກຣີກ.

ລໍຖ້າເປັນການເວົ້າທີ່ໃຊ້ເປັນປະຈຳຂອງອິສຣາເອນ
ລໍຖ້າເປັນສິ່ງນຶ່ງທີ່ຄົນສມັຍນີ້ບໍ່ມັກ
ລໍຖ້າພຣະເຈົ້າ ແມ່ນການຍອມຈຳນົນຢ່າງນຶ່ງ.

## ຈັດຕຽມເພື່ອການສະເດັດມາຂອງພຣະເຈົ້າ (64:5-7)

ພວກເຮົາເຮັດຫຍັງແດ່ ໃນເວລາທີ່ພວກເຮົາລໍຖ້າພຣະເຈົ້າ? ຄຳຕອບທີ່ດີທີ່ສຸດ ກໍຄື "ຈັດຕຽມ" ຈັດຕຽມຢ່າງໃດ? ເອຊາຢາ 64:5-7 ; ເອຊາຢາບອກພວກເຮົາ ວ່າການຈັດຕຽມນັ້ນກໍຄື ຈົ່ງສຳນຶກແລ້ວກໍສາລະພາບ ຄວາມຜິດບາບ. ໃນປີທີ່ກະສັດ ອຸດຊີຢາ ສິ້ນພຣະຊົນ, ເວລາທີ່ພຣະເຈົ້າປາກົດຕໍ່ເອຊາຢາໃນພຣະວິຫານ ລາວໄດ້ສາລະພາບຄວາມຜິດບາບຂອງລາວຕໍ່ພຣະເຈົ້າ "ຂ້າພຣະອົງຫມົດຫວັງສາແລ້ວ, ເຄາະກັມເປັນຂອງຂ້າພຣະອົງສາແລ້ວ ຍ້ອນຄຳເວົ້າທຸກຄຳທີ່ອອກຈາກປາກຂອງຂ້າພຣະອົງນັ້ນລ້ວນແຕ່ຊົ່ວມົວຫມອງ ...........ຂ້າພຣະອົງເອງແລ້ວ." (ລາວໃຫມ່) (ອຊຢ 6:5)

ຄຳວ່າ ສຳນຶກແລະສາລະພາບ ແມ່ນສິ່ງທີ່ເຫມາະສົມທີ່ສຸດ ໃນການຈັດຕຽມສຳລັບການສະເດັດມາຂອງພຣະເຈົ້າ. ຄວາມຈິງນີ້ ສາມາດເຫັນໄດ້ໃນພວງດອກໄມ້ຊຶ່ງເຮັດເປັນວົງມົນ ແລະສີຂອງທຽນໃຊ້ເປັນສີມ່ວງ. ສີມ່ວງ ແມ່ນສີທີ່ມີຄວາມຫມາຍເຖິງການສຳນຶກ ແລະ ສາລະພາບ.

"ພວກເຮົາທຸກຄົນເປັນດັ່ງແກະທີ່ໄດ້ເສັຍໄປ ແຕ່ລະຄົນເດີນຕາມທາງຂອງຕົນທັງນັ້ນ 53:6 "ດ້ວຍວ່າທຸກຄົນໄດ້ເຮັດບາບແລະຫ່າງໄກຈາກພຣະເຈົ້າຜູ້ຊ່ວຍເຂົາ" ຣມ 3:23

ມະນຸດທັງຫລາຍ ເຈີດເວີ່ນໄປຕາມທາງຂອງຕົນເອງ, ພວກເຂົາໄປກະທຳບາບ ແລ້ວກໍບໍ່ຫາທາງຄືນຫາພຣະເຈົ້າ. ພວກເຂົາຫລົງໄປວ່າ ການກະທຳດີຂອງເຂົາຈະເປັນຫົນທາງທີ່ນຳພວກເຂົາກັບມາຫາພຣະອົງ ແຕ່ເວລາ ເຮົາມາອ່ານໃນພຣະທັມຄັມພີແລ້ວ ຈະເຮັດຢ່າງໃດ ຈົນສຸດກຳລັງປານໃດ ພວກເຂົາກໍບໍ່ມີທາງ.

ພຣະເຈົ້າຊົງແປງທາງໃຫ້ພວກເຂົາແລ້ວຄື ສຳນຶກບາບ ແລ້ວກໍສາລະພາບ ແລ້ວກໍມອບການກະທຳທຸກຢ່າງເພື່ອພຣະອົງ. ໂປໂລໄດ້ກ່າວໃນ ໂຣມ 1:18-32 ເຖິງຄວາມຄຽດແຄ້ນຂອງພຣະເຈົ້າ. ບາບນຳມາຊຶ່ງການຕັດສິນ, ເປິະເປື້ອນໄປໝົດ ຖ້າຜູ້ໃດແຕະຕ້ອງຜູ້ນັ້ນກໍຈະຕ້ອງໄດ້ຮັບໂທດກັມຕາມການກະທຳນັ້ນ.

ເທສການຄຣິສມາດ ພວກເຮົາສເລີມສລອງ ໃນການສະເດັດມາຂອງພຣະເຈົ້າ ອິມມານູເອນ. "ພຣະເຈົ້າສະຖິດຢູ່ກັບເຮົາ" ພຣະເຈົ້າຊົງຄວາມສາມາດແຕ່ພຽງຜູ້ດຽວນັ້ນ ບໍ່ໄດ້ມາເພື່ອຈະມາສືບສາວລາວເຣື່ອງຂອງເຮົາ ແຕ່ມາເພື່ອຢາກໃຫ້ພວກເຮົາຮູ້ຈັກເຣື່ອງຂອງພຣະອົງ, ແລະກໍເຊື່ອໃນພຣະອົງ ຮັບເອົາພຣະອົງເຂົ້າໃນຊີວິດ. ພຣະເຈົ້າສະເດັດເຂົ້າມາໃນໂລກນີ້ເພື່ອເປັນເໝືອນພວກເຮົາ ແລະເພື່ອພວກເຮົາຈະໄດ້ເປັນເໝືອນພຣະອົງ.

ຍັງບໍ່ເປັນການພຽງພໍທີ່ພວກເຮົາຈະສເລີມສລອງ ແລະກໍຜ່ານໄປເສີຍໆ, ພວກເຮົາຍັງຕ້ອງຈັດຕຽມຫ້ອງໃນຈິດໃຈ ເພື່ອພຣະອົງຈະໄດ້ມີທີ່ຢູ່ນຳພວກເຮົາ. ອິມມານູເອນ ຖືກສົ່ງມາຈາກສວັນ ມາປະສູດທີ່ຮາງຫຍ້າ 2000 ປີ ຜ່ານມາ ຜູ້ນັ້ນລະ ຢາກເຂົ້າໄປໃນຈິດໃຈຂອງພວກເຮົາ ແລະໃຫ້ເຮົາມີພລັງໃນການດຳເນີນຊີວິດ.

## <u>ຄຳວິງວອນ ແລະ ການຖວາຍຕົວ</u>. (64: 8-9)

ໃນສ່ວນຕົ້ນຂອງ ອຊຢ 64:8 "ຂ້າແຕ່ພຣະເຈົ້າ ແຕ່ພຣະອົງຍັງເປັນພຣະບິດາ ຂອງຂ້າພຣະອົງ...." ປຶ້ມເອຊາຢາ ໄດ້ກ່າວວ່າ ແຕ່ພຣະອົງຍັງ ຊົງເປັນພຣະບິດາ ຄຳນີ້ ຖ້າພວກເຮົາຫາກພິຈາຣະນາເບິ່ງໃຫ້ດີກແລ້ວຈະ ວ່າມີຄຳສຳນຶກແລະສາລະພາບ ແລະພ້ອມແລ້ວ ທີ່ຈະຫັນຈາກຄວາມຜິດບາບ. ເພາະການຮຽກຮ້ອງຢ່າງນີ້ ແມ່ນການຍອມຖວາຍຕົວ. ຖ້າເບິ່ງຕໍ່ໄປໃນພຣະຄັມພີ ຈະເຫັນໄດ້ວ່າ ການສາລະພາບຍອມເປັນດິນໜຽວ ແລະ ເປັນຜົນຂອງການຊົງສ້າງຂອງພຣະອົງ.

ຍັງມີອີກ ສອງທ່ານທີ່ ຄ້າຍຄືກັນ-- ເຢເຣມີຢາ ໃນເຢເຣມີຢາ 18:1-6 ແລະ ໂປໂລ ໃນ ໂຣມ 9:19-21. ທັງສອງຕອນນີ້ ຈະເຫັນໄດ້ວ່າພຣະເຈົ້າ ເປັນຜູ້ຄຸ້ມຄອງທຸກຢ່າງໃນການຕັດສິນຄວາມບາບ.

ເອຊາຢາ 64:8-9, ປະຊາຊົນທັງຫລາຍ ໄດ້ຖິ້ມຕົວເອງເຂົ້າໃນຄວາມມືດ ແລ້ວກໍພາກັນຮຽກຮ້ອງຫາພຣະເຈົ້າ ວ່າຢ່າຈົດຈຳຄວາມຜິດບາບທ້ອນ. ພວກເຂົາຍັງຢູ່ໃນພຣະເຈົ້າຢູ່ ພວກເຂົາທູນພຣະເຈົ້າວ່າ ຂໍຢ່າຊົງຮ້າຍ, ຂໍຢ່າຊົງໂກດ, ຂໍຢ່າຊົງຈົດຈຳ ໂປດລະລຶກວ່າພວກຂ້ານ້ອຍຍັງເປັນຂອງພຣະອົງຢູ່. (ຂໍ້ 9)

## <u>ສິ່ງທີ່ໄດ້ຮັບເອົາໃນວັນນີ້:</u>

ທີ່ຈະໃຫ້ຈະແຈ້ງວ່າ ຄຣິສມາດມີຢູ່ໃນຈິດວິນຍານຢ່າງແທ້ຈິງນັ້ນ ຕ້ອງເຂົ້າໃຈວ່າ ພຣະເຈົ້າສະເດັດມາ ຍາມໃດ ແລະ ພຣະອົງມີພຣະປະສົງຢ່າງໃດ. ໂປໂລກ່າວວ່າ : "ແຕ່ເມື່ອຄົບກຳນົດແລ້ວ ພຣະເຈົ້າກໍຊົງໃຊ້ພຣະບຸດຂອງພຣະອົງມາ ຊົງປະສູດຈາກຜູ້ຍິງ ແລະ ຊົງຖືກຳເນີດຢູ່ໃຕ້ພຣະບັນຍັດ. ຄາລາເຕັຽ 4:4

ຄຳຖາມເພື່ອພວກເຮົາກໍຄື: ພວກເຮົາຕຽມພ້ອມເພື່ອພຣະເຈົ້າສະເດັດມາແລ້ວບໍ່? ເວລານີ້ເປັນໂອກາດທີ່ພວກເຮົາຄວນຈະປັບປຸງທາງຊີວິດໃຫ້ຊື່. ຄຣິສມາດນີ້ຮຽກຮ້ອງໃຫ້ພວກເຮົາມີຄວາມເຊື່ອ ແລະຕັກເຕືອນ

ຜູ້ຍັງບໍ່ທັນມີຄວາມເຊື່ອ, ຮຽກຮ້ອງໃຫ້ຜູ້ທີ່ຫລົງລືມໄປ ແລະຕັກເຕືອນ ຜູ້ທີ່ປະລະ, ຮຽກຮ້ອງໃຫ້ຜູ້ຕິດຕາມ ແລະຕັກເຕືອນຜູ້ທີ່ ຝືນໃຈຕິດຕາມ ໃຫ້ມາຮັບຜິດຊອບໃນການທີ່ພຣະເຈົ້າຊົງຮັກເຮົາ. ສິ່ງນີ້ກໍແມ່ນກ່ຽວກັບຄວາມລອດພົ້ນ ທີ່ເນັ້ນໃສ່ ການສະເດັດມາຂອງ ອິມມານູເອນ

ເອຊາຢາ ອະທິຖານໃນການສະເດັດມານີ້. ເອຊາຢາລໍຖ້າ. ເປັນຫຍັງລາວຈຶ່ງລໍຖ້າ ກໍເພາະລາວຕຽມຕົວໃນການ ສໍານຶກ ແລະ ສາລະພາບຈາກຄວາມຜິດບາບ. ຫລັງຈາກນັ້ນລາວກໍຖວາຍຕົວ ໃຫ້ເປັນໄປຕາມພຣະປະສົງຂອງພຣະເຈົ້າ- ເຫມືອນຝຸ່ນດິນທີ່ຊົງປັ້ນ. ຜູ້ພະຍາກອນເຮັດຢ່າງໃດ ພວກເຮົາກໍຄວນເອົາເປັນຕົວຢ່າງ.

<u>ຄໍາຖາມ:</u>

1. ພຣະເຈົ້າຄວນຈະອວຍພຣະພອນຜູ້ທີ່ບໍ່ຕ້ອງການພຣະເຈົ້າຫລືບໍ່?

2. ພວກເຮົາຈະຢູ່ໃນສະພາບໃດ ຈຶ່ງຈະຮູ້ສຶກວ່າຕ້ອງການພຣະເຈົ້າ?

3. ຖ້າເຮົາຫາກຍັງ ຄິດວ່າເຮົາຊ່ວຍຕົວເອງໄດ້ຫມົດທຸກຢ່າງ, ພຣະເຈົ້າຈະເຂົ້າມາໃນຊີວິດຂອງເຮົາຢ່າງໃດ?

4. ການລໍຖ້າພຣະເຈົ້າ ແມ່ນຕ້ອງຂຶ້ນກັບພຣະເຈົ້າຫລືຂຶ້ນກັບມະນຸດ?

## ບົດຮຽນທີ 2

## ຈົ່ງຮັບຂ່າວປະເສີດຈາກພຣະເຈົ້າ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ເອຊາຢາ 40:1-11
ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ເອຊາຢາ 40:1-11
ຈຸດສໍາຄັນສໍາລັບບົດຮຽນນີ້: ຄຣິສມາດທີ່ແທ້ຈິງ ຮຽກຮ້ອງໃຫ້ເຮົາຕ້ອນຮັບ ແລ້ວ ຮັບຜິດຊອບ ຕໍ່ຂ່າວປະເສີດຂອງພຣະເຈົ້າ.
ຄໍາຖາມເພື່ອສໍາຫລວດ: ທຸກວັນນີ້ ພວກເຮົາມີຂ່າວປະເສີດບໍ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະສອນໃຫ້ທ່ານທັງຫລາຍ ຮູ້ວ່າຂ່າວປະເສີດຂອງພຣະເຈົ້າ ຄວນຈະມີການຮັບຜິດຊອບໃນຊີວິດຂອງພວກເຮົາເອງ.

### ຄໍານໍາ

ສາມີພັຣຍາ ຄູ່ນຶ່ງ ພະຍາຍາມຈະມີລູກດ້ວຍ ເປັນເວລານານຫລາຍປີ, ແຕ່ບໍ່ປະສົບຜົນສໍາເຣັດຈັກເທື່ອ. ພວກເຂົາເຈົ້າໄດ້ພາກັນໄປປຶກສາຫມໍ. ໃນທີ່ສຸດ, ຄວາມພະຍາຍາມ ແລະ ເງິນທີ່ມີກໍຫມົດໄປ. ດ້ວຍເຫດໃດກໍບໍ່ຊາບ, ພາຍລຸນມາ ການຖືພາກໍເກີດມີຂື້ນໃນພວກເຂົາ. ນີ້ເປັນຂ່າວດີ. ພວກເຂົາດີໃຈບອກຫມູ່ຄູ່ ເພື່ອນຝູງ ຜູ້ຢູ່ໃກ້ ແລະ ຢູ່ໄກ. ເອີ້ນຄອບຄົວຜູ້ທີ່ໃກ້ສິດທີ່ສຸດມາກິນລ້ຽງ ທຸກຄົນກໍດີໃຈ ໃນຜົນຂອງການຄົ້ນຄວ້າເຫັນວ່າ ເຂົາມີລູກແທ້ຈິງ. ແຕ່ຕໍ່ມາ ປະມານ 6 ອາທິດທີ່ຖືພາຢູ່ນັ້ນ, ເຂົາກໍໄດ້ຮັບບັນຫາຄື ແທ້ງລູກ. (ອອກກ່ອນກໍານົດ)

ເຂົາທັງສອງເສັຽໃຈຫລາຍ ເພາະພວກເຂົາຄິດວ່າຄົງບໍ່ມີໂອກາດອີກແລ້ວ. ແຕ່ຄັນຖ້າມີອີກ, ບາດນີ້ຈະບໍ່ບອກຜູ້ໃດຈົນກວ່າຈະເຫັນຫນ້າລູກເສັຽກ່ອນ. 6 ເດືອນຜ່ານມາ, ພວກເຂົາກໍຖືພາອີກ. ຄັ້ງນີ້ພວກເຂົາບໍ່ຍອມບອກໃຜທັງສິ້ນ ເຖິງແມ່ນວ່າຈະສ່ອງໄຟຟ້າເຫັນເປັນໂຕລູກແລ້ວກໍຕາມ. ເຖິງຈະອົດກັ້ນປານໃດກໍຕາມ ຄວາມພະຍາຍາມຂອງພວກເຂົາກໍບໍ່ພຽງພໍ່, ພວກເຂົາໄດ້ບອກແຕ່ຄອບຄົວທີ່ໃກ້ສິດ ໃນເມື່ອສອງສາມຄົນຮູ້ຈັກແລ້ວ ຂ່າວກໍແຜ່ໄປອີກເຫມືອນຄັ້ງທີ່ຜ່ານມາ.

ເອຊາຢາ 40:1-11 ແມ່ນຂ່າວປະເສີດສໍາລັບຄົນຂອງພຣະອົງ. ຄວາມທຸກ ຄວາມເຈັບປວດ ຄວາມຊອກຊໍ້າຄວາມທໍຣະມານ ທີ່ເຄີຍຜ່ານມາ ຖືກລົບລ້າງໄປແລ້ວ. ຮູບພາບຊຶ່ງເປັນກະຈົກເງົາ ຂອງພຣະເຢຊູຈະສະເດັດມານັ້ນ ແມ່ນໃກ້ແລ້ວ. 400 ປີ ເປັນປີທີ່ມີດວງຮູບສວັດໄດ້ຜ່ານພົ້ນໄປໃນເວລາທີ່ໂຢຮັນບັບຕິສໂຕປ່າວປະກາດເຖິງພຣະເມຊີອາ ແລະ ວັນຂອງພຣະເຈົ້າ. (ມທ 3:1-3; ລກ 3:1-6; ມກ 1:1-4)

## ຂ່າວປະເສີດ-ການປົດປ່ອຍຢູ່ບໍ່ໄກ (40:1-5)

" ຈົ່ງເລົ້າໂລມ, ຈົ່ງເລົ້າໂລມ " (ອຊຢ 40:1) ນີ້ແມ່ນຄໍາທີ່ຍໍ້າກັນເຖິງສອງເທື່ອ ທີ່ພຣະເຈົ້າກ່າວແກ່ຜູ້ປະກາດພຣະທັມ ໃຫ້ເລົ້າໂລມ. ຕາມທັມມະດາແລ້ວ ພຣະເຈົ້າຈະບອກຜູ້ປະກາດພຣະທັມ ກ່າວວ່າ ຈົ່ງຫັນກັບ ຖ້າບໍ່ດັ່ງນັ້ນເຮົາຈະທໍາລາຍ, ຫລາຍຄັ້ງ ຜູ້ປະກາດພຣະທັມ ຈະກ່າວວ່າ ພຣະເຈົ້າຈະທໍາລາຍ....

ໃນສມັຍທີ່ ປະຊາຊົນທັງຫລາຍຖືກກວາດຕ້ອນໄປກຸງບາບີໂລນ ເຖິງ 70 ປີ ແລ້ວ ພຣະເຈົ້າຊົງກ່າວ

ວ່າ: " ເຮົາຈະຢ້ຽມຢາມເຈົ້າ ແລະຈະໃຫ້ຄໍາສັນຍາຂອງເຮົາສໍາເຣັດເພື່ອເຈົ້າແລະຈະນໍາເຈົ້າກັບມາສະຖານທີ່ນີ້." ຢຣມ 29:10. ພາຍຫລັງມາເອຊາຢາກໍໄດ້ຮັບຂ່າວການປະເລົ້າປະໂລມຈາກ ພຣະເຈົ້າ ເພື່ອນໍາຂ່າວນີ້ ໄປເຖິງປະຊາຊົນຂອງພຣະອົງ. ຄວາມທຸກຍາກທໍຣະມານຂອງພວກເຂົາໄດ້ຫມົດໄປແລ້ວ ແລະທີ່ໄດ້ເຮັດບາບນັ້ນກໍໄດ້ຮັບອະພັຍແລ້ວ. (40:2)

ເວລາປະຊາຊົນຖືກຢູ່ໃນການເປັນຊະເລີຍ ພວກເຂົາກໍມີສິ່ງນຶ່ງທີ່ເປັນອັນນຶ່ງອັນດຽວກັນຄືມີພຣະເຈົ້າ. ຈະບໍ່ມີຄໍາວ່າ ພຣະເຈົ້າອົງອື່ນໃນພວກເຂົາ ນອກຈາກພຣະເຈົ້າອົງທ່ຽງແທ້ຄື " ຢາເວ " ເມື່ອມີໂອກາດໄດ້ອອກຈາກ ກຸງບາບີໂລນ ພວກເຂົາຈຶ່ງມີຄວາມຊາບຊຶ້ງ ໃນຄວາມສັມພັນໃນພຣະເຈົ້າ (ຢາເວ) ຢ່າງດູດດື່ມ.

"ສຽງນຶ່ງຮ້ອງຂຶ້ນວ່າ" ເອຊາຢາກ່າວ ໃນ 40:3. ການປັບປຸງປ່ຽນແປງ ທີ່ອິສຣາເອນມີປະສົບການບໍ່ແມ່ນຄວາມພະຍາຍາມຂອງມະນຸດ. ແມ່ນພຣະຄຸນອັນສູງສົ່ງທີ່ມາຈາກພຣະເຈົ້າສູ່ມວນມະນຸດ. ຜູ້ທໍານວາຍ ເຊຄາຣີຢາ ໄດ້ກ່າວໄວ້ວ່າ "ການປົດປ່ອຍບໍ່ແມ່ນມາຈາກຄວາມເກັ່ງກ້າສາມາດ ບໍ່ແມ່ນມາຈາກອໍານາດບາດໃຫຍ່ ແຕ່ມາຈາກວິນຍານຂອງເຮົາ" ເຊຄາຣີຢາ 4:6

ເອຊາຢາຈຶ່ງຮຽກຮ້ອງໃຫ້ຈັດຕຽມທາງຂອງພຣະເຈົ້າ. (40:3) ໃນພຣະທັມຄັມພີໃຫມ່ກໍໄດ້ປາກົດເຫມືອນກັນ ຊຶ່ງໂຢຮັນກ່າວວ່າ "ຝ່າຍເຮົາເປັນສຽງຂອງຜູ້ທີ່ຮ້ອງປະກາດໃນປ່າວ່າ" ຢຮ 1:23. ມັດທາຍ ແລະລູກາ ຈຶ່ງປຽບໂຢຮັນເປັນເຫມືອນ ເອຊາຢາ (ມທ 3:1-3; ລກ 3:2-4) ເຊັ່ນກັນ ໃນລູກາ 7:21-28, ພຣະເຢຊູໄດ້ເຊື່ອມໂຍງ ການປະກາດຂອງຕົນເອງແລະໂຢຮັນ ກັບມາລາກີ (ມາລາກີ 3:1) ແລະກັບ ເອຊາຢາ (40:3)

"ທະເລຊາຍ" ເຂົ້າໃຈວ່າ ບໍ່ແມ່ນແຕ່ທະເລຊາຍ ທີ່ຂັ້ນປະເທດປາແລສໄຕ ແລະ ບາບີໂລນເທົ່ານັ້ນ. ທະເລຊາຍໃນທີ່ນີ້ ເປັນຮູບພາບ ຂອງການເປັນທາດ, ການຝຶກຝົນແລະການລົງໂທດຄວາມບາບ. ແຕ່ວ່າຄໍາທີ່ວ່າ ແປງທາງໃຫ້ຊື່ນັ້ນ ກໍຄືວ່າໃຫ້ໄດ້ເຫັນທຸກໆຄົນ ແລະກໍໄດ້ເຫັນພ້ອມໆກັນ. (40:5)

## <u>ຂ່າວປະເສີດ- ໃຜແດ່ຄວນຈະໄດ້ຮັບ?</u> (40:6-8)

ບາງຂ່າວປະເສີດກໍປະເສີດຫລາຍເຫລືອເກີນ ຈົນວ່າເກີນຄວາມເຊື່ອຂອງພວກເຮົາ. ລອງມາຄຶດເຖິງຂ່າວປະເສີດ ທີ່ຈະມີພຣະຜູ້ໄຖ່ລົງມາຊ່ວຍໃນການລົບລ້າງຄວາມຜິດບາບຂອງພວກເຮົາ. ຈະບໍ່ແມ່ນຂ່າວປະເສີດບໍ່? ຫລາຍຄົນອາດຈະມີຄວາມເຊື່ອຍາກ ແຕ່ມັນກໍເປັນຄວາມຈິງ. ພວກເຮົາເປັນຄົນບາບແມ່ນບໍ່? ໃນພຣະຄັມພີ ໂຣມ 3:23 " ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະ ຂາດຈາກພຣະຣັສມີຂອງພຣະເຈົ້າ." ນີ້ກໍເປັນຫນ້າເຊື່ອຍາກແມ່ນບໍ່? ຂ່າວປະເສີດນັ້ນ ກໍແມ່ນພວກເຮົາຄວນຢູ່ໃນຄວາມຊອບທັມຂອງພຣະເຈົ້າ. ບໍ່ແມ່ນຄວາມຊອບທັມຂອງເຮົາເອງ ນີ້ກໍຫນ້າເຊື່ອຍາກແມ່ນບໍ່?

ຂ່າວປະເສີດຂອງເອຊາຢາ ເບິ່ງແລ້ວກໍເປັນຫນ້າເຊື່ອຍາກ, "ສຽງນຶ່ງຮ້ອງຂຶ້ນອີກວ່າ" (40:6) ຮ້ອງຂຶ້ນກ່ຽວກັບຫຍັງ ປະກາດກ່ຽວກັບຫຍັງ ພວກເຮົາຍັງມີຄວາມຫວັງຢູ່ບໍ່? ມາຟັງ ຜູ້ພະຍາກອນໄດ້ກ່າວໄວ້ ພວກເຮົາເປັນເຫມືອນກົກຫຍ້າ ອາຍຸກໍບໍ່ຫມັ້ນຍືນໄປກວ່າດອກໄມ້ປ່າ. ເມື່ອພຣະເຈົ້າຊົງໃຫ້ລົມພັດມາ ຫຍ້າກໍຫ່ຽວແຫ້ງແລະດອກໄມ້ກໍຮ່ວງໂຣຍ ແລະມະນຸດກໍບໍ່ແຂງແຮງໄປກວ່າຫຍ້າ. (40:7)

ແຕ່ພຣະເຈົ້າຊົງຕອບໃນຂໍ້ທີ 8 "ແມ່ນແລ້ວ, ຫຍ້າກໍຫ່ຽວແຫ້ງແລະດອກໄມ້ກໍຮ່ວງໂຣຍ ແຕ່ພຣະທັມແຫ່ງພຣະເຈົ້າ ຂອງເຮົາຈະມີຢູ່ຕລອດໄປ." ຄວາມຫວັງຂອງພວກເຮົາແມ່ນຢູ່ໃນພື້ນຖານຂອງພຣະຄໍາຂອງພຣະເຈົ້າ ບໍ່ແມ່ນຢູ່ໃນຄວາມສາມາດຂອງມະນຸດ.

## ຂ່າວປະເສີດ-ໃຜຈະເປັນຜູ້ປະກາດ (40:9-11)

" ຊາວເຢຣູຊາເລັມເອີຍ! ຈົ່ງຂຶ້ນໄປເທິງພູສູງ ປ່າວປະກາດຂ່າວດີນັ້ນ ຊາວຊີໂອນເອີຍ! ຈົ່ງຮ້ອງດັງໆ ຈົ່ງປະກາດຂ່າວດີນັ້ນ! ແລະເວົ້າເຖິ່ນວ່າ ຢ່າຢ້ານເລີຍ ຈົ່ງບອກຫົວເມືອງຂອງຢູດາວ່າ ພຣະເຈົ້າຂອງເຂົາຈະສະເດັດມາ." ໃນພາສາຄຣິສຕຽນພວກເຮົາຫລາຍຄົນກໍຮູ້ແລ້ວວ່າ ຄໍາວ່າ ເຢຣູຊາເລັມແມ່ນປະຊາກອນຂອງພຣະເຈົ້າ ຊຶ່ງເປັນຂອບເຂດຂອງພຣະເຈົ້າ. ຜູ້ທີ່ຢູ່ໃກ້ໆເຢຣູຊາເລັມຈົ່ງໃຫ້ເຂົາຮູ້ຈັກກັນທົ່ວທຸກຄົນ. ການປ່າວປະກາດນີ້ແມ່ນການປ່າວປະກາດທົ່ວທຸກເມືອງໃກ້ເຢຣູຊາເລັມ (40:9-10)

ພຣະເຈົ້າຈະສະເດັດມາ ດ້ວຍ "ຣິດທານຸພາບ" ມາດ້ວຍ "ລາງວັນ" ແລະ "ສິ່ງຊົດເຊີຍ" (40:10) ຫລາຍຄົນກໍຮູ້ດີວ່າ ມີແຕ່ພຣະເຈົ້າເທົ່ານັ້ນ ທີ່ສາມາດນໍາລາງວັນມາໃຫ້ຄົນທັງຫລາຍ ເພາະ ພຣະເຈົ້າເທົ່ານັ້ນ ຈະເປັນຜູ້ສະເດັດມາ. ພຣະຄໍາອາດຈະໝາຍໄປເຖິງ ຄວາມຊອບທັມໃນການຕັດສິນ ແລະ ມອບລາງວັນໃຫ້ແກ່ຜູ້ທີ່ພຣະອົງຊົງພໍພຣະທັຍ. ຫລືຈະເວົ້າອີກຢ່າງນຶ່ງວ່າ ລາງວັນແລະເຄື່ອງຊົດເຊີຍແມ່ນຂອງຄົນອິສຣາເອນເທົ່ານັ້ນບໍ່? ຄົນຂອງພຣະເຈົ້າທັງຫລາຍທີ່ໄດ້ກັບໄປຫາດິນແດນເດີມ, ນະມັສການພຣະເຈົ້າພຽງຜູ້ດຽວ. ລາງວັນທີ່ພຣະເຈົ້າມອບໃຫ້ພວກເຂົາເຈົ້າ ກໍແມ່ນການປົດປ່ອຍອອກຈາກກຸງບາບີໂລນ. ທ່ານຄິດວ່າຢ່າງໃດ?

ເມື່ອຜູ້ລ້ຽງແກະ ນໍາຝູງແກະມາຫາເຕັນ ແລະຮອບຮອມໄວ້ໃນການຮັກສາ ບາງຕົວກໍຖືກອູ້ມໄວ້ໃນວົງແຂນ. (40:11) ຈະເປັນການດີຫລາຍເທົ່າໃດເວລາພຣະເຢຊູຊົງສອນເຣື່ອງການຮັກສາລູກແກະ ພຣະອົງຊົງອູ້ມໄວ້. (ລູກາ 15:4-7)

## ແນະນໍາເຂົ້າໃນຊີວິດຈິງ

ເອຊາຢາເຜີຍແຜ່ຂ່າວປະເສີດ, ເພື່ອປະເລົ້າປະໂລມໃຈຄົນຂອງພຣະເຈົ້າ: ການເປັນຊະເລີຍ ຂອງທ່ານໄດ້ ສິ້ນສຸດລົງໄປແລ້ວ. ຄ່າຈ້າງຂອງຄວາມບາບໄດ້ຖືກຊໍາຣະໝົດແລ້ວ. ຈົ່ງຈັດຕຽມຫົນທາງເພື່ອພຣະເຈົ້າຈະສະເດັດມາ.

ຖ້ອຍຄໍາຂອງເອຊາຢາເປັນການເຊື່ອຍາກ ແຕ່ວ່າເປັນຖ້ອຍຄໍາອັນປະເສີດສໍາລັບພວກເຮົາ. ມະນຸດພວກເຮົາເປັນເໝືອນກົກຫຍ້າ ເກີດມາບໍ່ນານເທົ່າໃດກໍຕາຍໄປແລ້ວ. ຈະອອກຈາກແອກຂອງບາບີໂລນໄດ້ຢ່າງໃດ? ຄໍາຕອບກໍມີຢູ່ວ່າ ພຣະເຈົ້າຈະຊົງມີແຜນການປົດປ່ອຍຂອງພຣະອົງເອງ.

ຄຣິສມາດແມ່ນກ່ຽວກັບຂ່າວປະເສີດ ຂອງການລອດພົ້ນຈາກບາບ. ດັ່ງນັ້ນຂ່າວປະເສີດຕ້ອງໄດ້ແບ່ງປັນໃຫ້ທຸກຄົນຮູ້ຈັກ. "ເຂົາກໍຮີບໄປແລ້ວພົບມາຣີອາກັບໂຢເຊບ ແລະເຫັນພຣະກຸມມານນັ້ນນອນຢູ່ໃນຮາງຫຍ້າ ເມື່ອເຂົາໄດ້ເຫັນແລ້ວກໍເລົ່າເຣື່ອງທີ່ເຂົາໄດ້ຍິນເຖິງພຣະກຸມມານນັ້ນ. ຄົນທັງປວງທີ່ໄດ້ຍິນກໍປລາດໃຈ ດ້ວຍຖ້ອຍຄໍາທີ່ພວກລ້ຽງແກະໄດ້ບອກແກ່ເຂົາ." ລູກາ 2: 16-18

ຂ່າວປະເສີດ---ຈຶ່ງໃຫ້ພວກເຮົາຮັບຟັງ, ເຊື່ອວ່າເປັນຄວາມຈິງ, ແລະແບ່ງປັນໃຫ້ແກ່ຄົນອື່ນດ້ວຍ.

<u>ຄໍາຖາມ:</u>

1. ເປັນຫຍັງຄົນສະໄໝນີ້ ຈຶ່ງເຊື່ອຂ່າວປະເສີດຄຣິສມາດຍາກ?

2. ແມ່ນຫຍັງຄືຄວາມສັມພັນ ຣະຫວ່າງ ຮູ້ວ່າຕ້ອງການພຣະເຈົ້າ ກັບ ເປີດໃຈຮັບເອົາພຣະເຈົ້າ?

3. ແມ່ນຫຍັງຄືອຸປສັກໃນການປະກາດຂ່າວປະເສີດ ຢູ່ເລື້ອຍໆ?

## ບົດຮຽນທີ 3
## ຈົ່ງຍິນດີໃນພຣະພອນຂອງພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອຊາຢາ 61
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອຊາຢາ 61
ຈຸດສຳຄັນສຳລັບບົດຮຽນນີ້: ສເລີມສລອງຄຣິສມາດທີ່ແທ້ຈິງ ແມ່ນຮຽກຮ້ອງໃຫ້ຍອມຮັບ ແລະຊື່ນຊົມຍິນດີໃນພຣະພອນຂອງພຣະເຈົ້າ.
ຄຳຖາມເພື່ອສຳຫລວດ: ພຣະເຈົ້າອວຍພຣະພອນທ່ານຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຮວບຮວມພຣະພອນທີ່ເອຊາຢາໄດ້ອະທິບາຍ ແລະໄດ້ບອກເສັ້ນທາງຢ່າງຄັກແນ່ແລ້ວວ່າ ລາວໄດ້ຮັບພຣະພອນດ້ວຍມີຄວາມສັມພັນກັບພຣະເຈົ້າ.

### ຄຳນຳ

ທ່ານຄົງໄດ້ຍິນມາຫລາຍຄັ້ງຫລາຍຄາວແລ້ວ, ກ່ຽວກັບການສ້າງຕັ້ງແຜ່ນດິນໃຫມ່ທີ່ອະເມຣິກາ. ທັນຄືນໄປຫາ ປີ 1620 ພວກ ປູຣິຕັນ (Puritans) ເປັນພວກທີ່ສແວງຫາສິດເສລີພາບໃນການນັບຖືສາສນາ ໄດ້ພະຍາຍາມຈະມຸ້ງເຂົ້າສູ່ຣັດເວີຈິເນັຍ (Virginia) ໂດຍເຮືອໃຫຍ່ ເມຟລາວເວີ້ (Mayflower). ແຕ່ດ້ວຍອາກາດຫນາວຫລາຍ ແລະ ລົມກໍພັດແຮງ, ພວກເຂົາຈຶ່ງໄປຕົກທີ່ ແຄັບຄອດ (Cap Cod) ຣັດ Massachusetts. ຍ້ອນອາກາດຫນາວຫລາຍເກີນໄປຊຶ່ງພວກເຂົາບໍ່ເຄີຍພົບມາກ່ອນ ເຄິ່ງນຶ່ງຂອງພວກທີ່ໄປດ້ວຍກັນໄດ້ເສັຽຊີວິດ. ( 102 ຄົນ ຍັງເຫລືອ 50 ຄົນ )

ບໍ່ແມ່ນແຕ່ຄອບຄົວທີ່ໄດ້ຮັບເຄາະກັມເທົ່ານັ້ນ, ຄອບຄົວທີ່ບໍ່ໄດ້ຮັບເຄາະກັມກໍມີຈິດໃຈທໍ້ຖອຍໄປຕາມໆກັນ. ເມື່ອຍາມຫນາວຜ່ານໄປແລ້ວ ພວກເຂົາເຈົ້າກໍຢາກຈະກັບໄປຫາບ່ອນເກົ່າ. ແຕ່ວ່າຕົ້ນໄມ້ກໍເລີ້ມເປັນຫມາກອອກມາຢ່າງຫນ້າພໍໃຈ, ແລະການຫາປາກໍປາກົດວ່າໄດ້ຫລາຍຜິດປົກກະຕິ, ພືດຜົນທຸກຢ່າງກໍອຸດົມສົມບູນ. ພວກເຂົາກໍເກັບກ່ຽວໄວ້ໃນເລົ້າເພື່ອໄວ້ກິນໃນລະດູຫນາວຈະມາເຖິງ.

ເມື່ອລະດູຫນາວມາເຖິງອີກ, ເຂົາເຈົ້າກໍພົບບັນຫາອີກເພາະຂາດອຸປກອນບາງຢ່າງເທົ່ານັ້ນ. ຫລາຍຄົນມີອາການໄຂ້ແລະຈ່ອຍຜອມແດ່. ຍັງສົງສັຍວ່າພວກອິນເດັຽແດງຈະເປັນເພື່ອນທີ່ດີຫລືບໍ່?

ເມື່ອຕົກມາເຖິງທ້າຍປີ 1621 ພວກເຂົາເຈົ້າກໍມາປຶກສາກັນວ່າຈະສລອງວັນຄົບຮອບນຶ່ງປີຢ່າງໃດ. ບາງຄົນກໍຢາກສລອງວັນລະລຶກເຖິງຄົນທີ່ຕາຍໄປ, ແຕ່ອີກສ່ວນນຶ່ງກໍເວົ້າວ່າໃຫ້ເພວກເຮົາມາສລອງໃຫ້ກັບພວກເຮົາເອງ, ພວກເຮົາຍັງມີອາຫານ, ພວກອິນເດັຽແດງກໍເຫັນວ່າເປັນມິດແທ້. 50 ຄົນ ພວກເຮົາກໍເຫລືອຕາຍ. ທ່ານຜູ້ປົກຄອງ ແບຣດ ຟອດ (Governor Bradford ) ກ່າວວ່າ : " ໃຫ້ພວກເຮົາມາຂອບພຣະຄຸນກັນເທາະ!! "

ການຮູ້ສຶກຂອບພຣະຄຸນພຣະເຈົ້າ ທີ່ພຣະອົງອວຍພຣະພອນໃຫ້ພວກເຮົານັ້ນ ແມ່ນປະຕິເສດບໍ່ໄດ້.

## ປະວັດຄວາມເປັນມາ

ປວັດຄວາມເປັນມາເບື້ອງຫລັງ ຂອງເອຊາຢາ 56-66 ແມ່ນຄົນປາແລສໄຕຫລັງຈາກໄປຢູ່ຕ່າງຖິ່ນມາແລ້ວ, ໃນປີ 539 ກຄສ (ເອສຣາ 1:2-3) ໃນບົດຮຽນນີ້ ກໍຢາກຄ້າຍຄືກັບສອງບົດຮຽນທີ່ຜ່ານມາ. ຂໍ້ຄວາມໄດ້ສະທ້ອນເຖິງຊີວິດການເປັນຢູ່ໃນ ປາແລສໄຕ ໃນຊ່ວງຕອນປາຍຂອງສັຕວັດ ທີ ຫົກ. ປະຊາຊົນສ້າງ ພຣະວິຫານບໍ່ສຳເລັດ ແລະກຳແພງເມືອງກໍຖືກທຳລາຍ.

ເອຊາຢາ 61:1-11 ໄດ້ປະກອບດ້ວຍຂ່າວປະເສີດ ກ່ຽວກັບພຣະພອນຂອງພຣະເຈົ້າ.

## ຂ່າວຂອງການເຈີມຜູ້ສືບຕະກຸນ (61:1-3)

ຜູ້ພະຍາກອນໄດ້ກ່າວຕໍ່ປະຊາຊົນທັງຫລາຍວ່າ ພຣະເຈົ້າໄດ້ເຈີມຂ້າພະເຈົ້າໄວ້ເພື່ອນຳຂ່າວດີມາຫາຜູ້ທຸກໄຮ້ເຂັນໃຈ. ປະຊາຊົນທີ່ຮັບຟັງແມ່ນປະຊາຊົນຊາວເມືອງຊີໂອນ, (ຂໍ້ 3) ພຣະເຈົ້າຢາກຫນູນໃຈ ແລະຢາກເລົ້າໂລມຜູ້ທີ່ມີຄວາມທຸກ.

ຜູ້ພະຍາກອນໄດ້ປ່າວປະກາດວ່າຜູ້ທີ່ທຸກໃນຊີໂອນຈະໄດ້ພວງມາລັຍ, ບັນດາຜູ້ທີ່ຖືກຈອງຈຳກໍຈະໄດ້ເປັນອິສລະ. ຄົນຕາບອດກໍຈະຖືກເປີດອອກ. (ໃນຕອນທ້າຍຂອງຂໍ້ທີ 1 ອ່ານວ່າການເປີດເຮືອນຈຳອອກ ໃນພາສາເຮັບເຣີແມ່ນການເປີດຕາ) . ນີ້ແມ່ນການປ່ຽນແປງພິດຕິກັມຂອງມະນຸດມາຫາຄວາມລອດພົ້ນ, " ປີແຫ່ງຄວາມໂປດປານຂອງພຣະເຈົ້າ ແລະປີແຫ່ງການແກ້ແຄ້ນແຫ່ງພຣະເຈົ້າ." (61:2)

ຂໍ້ຄວາມນີ້ ສະທ້ອນເຖິງປີແຫ່ງການສລອງກົດຫມາຍ (ເລວີນິຕິ 25:10-17) ໃນນີ້ຜູ້ທີ່ເປັນຊະເລີຍຕ້ອງມີສິດເສລີພາບ ແລະດິນແດນທີ່ຂາຍໄປແລ້ວກໍໃຫ້ສົ່ງເຈົ້າຂອງເດີມ. ຄົນອິສຣາເອນໃນບາບີໂລນກໍເຫມືອນກັນ ບໍ່ໄດ້ເປັນຊະເລີຍຕໍ່ໄປອີກແລ້ວ ແລະດິນແດນປາແລສໄຕ ກໍຕ້ອງໄດ້ສົ່ງໃຫ້ພວກອິສຣາເອນຄືນໃຫ້ຫມົດ.

ໃນສມັຍພຣະເຢຊູເລີ້ມຕົ້ນປ່າວປະກາດ, ພຣະອົງຊົງອ່ານ ເອຊາຢາ 61:1-2 ໃນພຣະວິຫານ ນາຊາເຣັດ. (ລູກາ 4:18-19) ພຣະເຢຊູປະກາດໃຫ້ຜູ້ທີ່ນະມັສການທັງຫລາຍ ໃນບ້ານເດີມຂອງພຣະອົງ. (ລູກາ 4:21; ເບິ່ງຮອດ 4: 16-21) ເອຊາຢາ 61 ນີ້ໄດ້ຖືກນຳມາໃຊ້ຫລາຍໃນຕອນທ້າຍຂອງສັຕວັດທີ 6.

ພວກເຮົາຍັງເຫັນເສັ້ນຂນານ ທີ່ສາວົກຂອງໂຢຮັນໄດ້ເຂົ້າມາຖາມ ພຣະເຢຊູວ່າ ທ່ານແມ່ນພຣະເມຊີອາບໍ່? ຫລືຈະໃຫ້ພວກເຮົາລໍຖ້າຜູ້ອື່ນອີກ. ພຣະເຢຊູຊົງຕອບວ່າ: ຈົ່ງໄປແຈ້ງແກ່ໂຢຮັນຕາມທີ່ທ່ານໄດ້ເຫັນແລະໄດ້ຍິນ ຄືວ່າຄົນຕາບອດກໍຫາຍບອດ ຄົນລ່ອຍຍ່າງໄດ້ ຄົນເປັນຂີ້ທູດກໍດີສະອາດ ຄົນຫູຫນວກໄດ້ຍິນ ຄົນຕາຍແລ້ວເປັນຄືນມາ ແລະຂ່າວປະເສີດກໍປະກາດແກ່ຄົນທຸກ. (ລກ 7:20-22)

ຄຳແນະນຳ ແລະຄຳອະທິບາຍຂອງພຣະກິດຕິຄຸນເປັນສິ່ງທີ່ຊ່ວຍໃຫ້ເຮົາເຂົ້າໃຈດີທີ່ສຸດໃນຊ່ວງເທສການນີ້. ນີ້ລະຄືເປັນປີແຫ່ງພຣະເຈົ້າຊົງໂປດປານ ແລະເປັນວັນທີ່ພຣະເຈົ້າຊົງແກ້ແຄ້ນ. (61:2 ) ໃນນີ້ພວກເຮົາຈະເຫັນຄວາມແຕກຕ່າງລະຫວ່າງປີແລະວັນ. ພຣະຄຸນແມ່ນພຣະເຈົ້ານຳມາສູ່ມວນມະນຸດ. ການແກ້ແຄ້ນແມ່ນການຕັດສິນແກ່ໄຂອຸປສັກຕ່າງໆທີ່ກີດກັ້ນພຣະຄຸນ.

## ປະຊາຊົນທີ່ໄດ້ຮັບພຣະພອນຈາກພຣະເຈົ້າ (61: 4-9 )

ຊາວປາແລສໄຕຫລັງຈາກເປັນຄົນອົພຍົບມາແລ້ວ, ກໍມີຄວາມອ່ອນກຳລັງໃຈເພາະຫລີງເຫັນຄວາມຫວັງໃນອານາຄົດຫນ້ອຍເຕັມທີ. ພຣະເຈົ້າໄດ້ສົ່ງຂ່າວສານຊຶ່ງເປັນຂ່າວປະເສີດມາເຖິງພວກເຂົາ. ຜູ້ປະກາດພຣະທັມເອຊາຢາກໍແມ່ນຜູ້ນຶ່ງທີ່ນຳຂ່າວປະເສີດມາຫາພວກເຂົາ.

ໃນ 61:4 ໄດ້ບັນລະຍາຍອອກເຖິງສິ່ງທີ່ປະຊາຊົນທັງຫລາຍຈະພາກັນສ້ອມແປງ. ພວກເຂົາທັງຫລາຍກໍຈະກາຍເປັນຜູ້ທີ່ອຸດົມສົມບູນຮັ່ງມີ ແລະຈະເປັນຜູ້ປະກາດພຣະທັມທັງຫມົດ. ພວກຄົນຕ່າງຊາດກໍຈະມາເປັນຜູ້ຮັບໃຊ້ພວກເຂົາທັງຫມົດ.

ເມື່ອຫັນມາຫາຊາວອິສຣາເອນ, ພວກນີ້ແມ່ນພວກທຳອິດທີ່ຈະໄດ້ຮັບພຣະພອນຫລາຍກວ່າຫມູ່. ພວກນີ້ເປັນພວກລູກຫົວປີ (61:7) ແລະ (ມາຣະໂກ 10: 28-31)

ເອຊາຢາ 61:8-9 ໄດ້ບັນລະຍາຍເຖິງຄວາມສົມບູນຂອງພຣະເຈົ້າຕໍ່ຊາວຊີໂອນ. ພຣະເຈົ້າຈະວາງຄຳສັນຍາຮ່ວມກັບຄົນຂອງພຣະອົງ (61:9) ແຕ່ຢ່າງໃດກໍຕາມອິສຣາເອນກໍຍັງເປັນລູກຫົວປີຢູ່ ແລະພຣະພອນອັນໃດກໍຕາມອິສຣາເອນກໍຄວນຈະໄດ້ຮັບຫລາຍກວ່າ.

ເຢເຣມີຢາ 29:10-14 ແມ່ນສ່ວນນຶ່ງທີ່ຂຽນຂຶ້ນໃນສມັຍຖືກກວາດໄປເປັນຊະເລີຍໃຫມ່ໆ. ລາວຂຽນວ່າ: " ເມື່ອ 70 ປີ ແຫ່ງບາບີໂລນຄົບແລ້ວເຮົາຈະຢ້ຽມຢາມເຈົ້າ ແລະຈະໃຫ້ຄຳສັນຍາຂອງເຮົາສຳເຣັດເພື່ອເຈົ້າ ແລະຈະນຳເຈົ້າກັບມາສູ່ສະຖານທີ່ນີ້. ພຣະເຈົ້າຕັດວ່າ ເພາະເຮົາຮູ້ແຜນງານທີ່ເຮົາມີໄວ້ສຳລັບເຈົ້າ ເປັນແຜນງານເພື່ອສວັດດີພາບບໍ່ແມ່ນເພື່ອທຸຂພາບ ເພື່ອໃຫ້ອານາຄົດແລະຄວາມຫວັງແກ່ເຈົ້າ. ແລ້ວເຈົ້າຈະທູນຂໍຕໍ່ເຮົາແລະມາອະທິຖານຕໍ່ເຮົາ ແລະເຮົາຈະຟັງເຈົ້າ ເຈົ້າຈະສແວງຫາເຮົາແລະພົບເຮົາເມື່ອເຈົ້າສແວງຫາເຮົາດ້ວຍສິ້ນສຸດໃຈຂອງເຈົ້າ. ພຣະເຈົ້າຕັດວ່າ ເຮົາຈະໃຫ້ເຈົ້າພົບເຮົາແລະເຮົາຈະໃຫ້ເຈົ້າກັບສູ່ສະພາບດີ ແລະຮວບຮວມເຈົ້າມາຈາກບັນດາປະຊາຊາດ ແລະມາຈາກທຸກທີ່ ທີ່ເຮົາຂັບໄລ່ເຈົ້າໃຫ້ໄປຢູ່ນັ້ນ ພຣະເຈົ້າກ່າວດັ່ງນີ້ແຫລະ ແລະເຮົາຈະນຳເຈົ້າກັບມາຍັງທີ່ເຮົາເນຣະເທດເຈົ້າໃຫ້ຈາກໄປນັ້ນ."

## ສຽງຮ້ອງຂອບພຣະຄຸນ. (61: 10-11)

ສຽງສັຣເສີນ ແລະຄຳຂອບພຣະຄຸນ ແມ່ນສິ່ງນຶ່ງທີ່ສະແດງເຖິງຄວາມຍິນດີຂອງຊາວຊີໂອນ. ພວກເຂົາເຈົ້າດີໃຈຫລາຍທີ່ພຣະເຈົ້າຍັງບໍ່ຫລົງລືມພວກເຂົາເຈົ້າ, ແລະຍັງມີພຣະສັນຍາຕໍ່ພວກເຂົາເຈົ້າ. ສິ່ງທີ່ເຮັດໃຫ້ຄຣິສຕຽນເປັນລ່ອຍຢູ່ທຸກວັນນີ້ກໍເພາະພວກເຮົາບໍ່ຄິດເຖິງຄວາມດີຂອງພຣະເຈົ້າ ບໍ່ຄິດເຖິງພຣະສັນຍາຂອງພຣະອົງ.

ໃນການຈັດຕຽມຄຳສັນຍາຕໍ່ຊີວິດອັນຕລອດໄປເປັນນິດນີ້ ຫລືອີກຢ່າງນຶ່ງວ່າຄວາມລອດພົ້ນ. ເອຊາຢາໄດ້ໃຊ້ສຳນວນຄຳເວົ້າອີກຢ່າງນຶ່ງວ່າເສື້ອຜ້າແຫ່ງຄວາມລອດ, ເສື້ອແຫ່ງຄວາມຊອບທັມ, ເຈົ້າບ່າວແຕ່ງຕົວດ້ວຍພວງມາລັຍ ແລະເຈົ້າສາວຕົກແຕ່ງດ້ວຍເພັດນິນຈິນດາ. ສິ່ງທັງຫມົດນີ້ແມ່ນການລອດພົ້ນທີ່ມາຈາກພຣະເຈົ້າ. (ຂໍ້ 10)

ໃນຂໍ້ 11 ໜາມແຫນງຂອງຊີໂອນຄືໜາມແຫນງຂອງການຊົງໄຖ່ ຈະງອກຂຶ້ນຕໍ່ໜ້າປະຊາຊາດຕ່າງໆ ການປັບປຸງຄວາມຊອບທັມ ກໍຈະງອກຂຶ້ນຕໍ່ບັນດາປະຊາຊາດ.

## ສິ່ງທີ່ໄດ້ຮັບເອົາໃນວັນນີ້:

ນິທານເກົ່າໆ ເລົ່າກັນມາວ່າ: ມີຄົນສອງຄົນໄປຢ້ຽມຢາມສາງມ້ຽນເຄື່ອງຂອງພະຍາມານ. ຢູ່ໃນເລົ້າຮັກສາແນວປູກນັ້ນ ມີຖົງນຶ່ງທີ່ມານມັນຮັກສາໄວ້ຫວ່ານໃສ່ໃນຫົວໃຈຂອງມະນຸດ. ຖົງນັ້ນຂຽນໝາຍໄວ້ວ່າ ຊັງ, ຂີ້ຢ້ານ, ສົງສັຍ, ສິ້ນຫວັງ, ອວດຕົວ, ໂລບມາກໂລພາ.

ຄົນນຶ່ງອະທິບາຍວ່າ ສິ່ງເຫລົ່ານີ້ປູກງ່າຍຫລາຍ, ແລະມັນກໍໃຫຍ່ໄວໃນຈິດໃຈຂອງມະນຸດ. ອີກຄົນຜູ້ນຶ່ງຖາມວ່າ ມີຈິດໃຈປະເພດໃດບໍ່ ທີ່ເມັດພືດພວກນີ້ ໃຫຍ່ບໍ່ໄດ້? ມີຢູ່!!! ຖ້າຢ່າງນັ້ນ ແມ່ນຈິດໃຈປະເພດໃດ? ສິ່ງທີ່ເມັດພືດພວກນີ້ເກີດບໍ່ໄດ້ນັ້ນກໍແມ່ນ ຈິດໃຈທີ່ມີພຣະເຈົ້າແລະສັຣເສີນຢູ່ຕລອດເວລາ.

ຈົ່ງໃຫ້ພວກເຮົາສັຣເສີນພຣະເຈົ້າຕໍ່ພຣະພອນທີ່ພຣະອົງຊົງນຳມາສູ່ພວກເຮົາ ແລະດ້ວຍການຮູ້ບຸນຄຸນທຸກຢ່າງເຖີ້ນ.

## ຄຳຖາມ:

1. ພຣະເຈົ້າໄດ້ອວຍພອນທ່ານບໍ່? ອວຍພອນຢ່າງໃດ?

2. ໃນຄຣິສຕະຈັກຂອງພວກທ່ານ ພຣະເຈົ້າອວຍພຣະພອນຄົນປະເພດໃດ?

3. ຄົນທີ່ເຂົາຮູ້ສຶກວ່າພຣະເຈົ້າອວຍພຣະພອນເຂົານັ້ນ ເຂົາມີທ່າທີຢ່າງໃດ? ເຂົາປະຕິບັດຕົວຢ່າງໃດ?

4. ທ່ານເຫັນການເຫນັງຕີງຢ່າງໃດ ຕໍ່ຄຣິສມາດຈະມາເຖິງນີ້? ເຫັນການຈັດຕຽມຈິດໃຈຫລືບໍ່?

## ບົດຮຽນທີ 4

## ເທສການວັນເກີດຂອງພຣະກຸມມານ

---

ຂໍ້ພຣະຄັມພີສຳລັບບົດຮຽນ: ເອຊາຢາ 9:1-7
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອຊາຢາ 8:21-9:7
ຈຸດສຳຄັນຂອງບົດຮຽນນີ້: ເທສການວັນຄຣິສມາດເປັນວັນຮຽກຮ້ອງໃຫ້ລະນຶກເຖິງການສະເດັດມາຂອງພຣະຜູ້ເປັນເຈົ້າທີ່ມາບັງເກີດໃນຄາບຂອງພຣະເຢຊູຄຣິດ.
ຄຳຖາມເພື່ອການສຳຫລວດ: ກຸມມານນີ້ມີຄວາມສຳຄັນຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ປະກາດບອກເຖິງຄວາມໝາຍຂອງການມາບັງເກີດຂອງພຣະຄຣິດ

## ບົດຮຽນ

### ຄຳນຳ

ເທສການວັນເກີດຂອງພຣະຄຣິດ! ການມາບັງເກີດຂອງພຣະອົງໄດ້ນຳການປ່ຽນແປງມາສູ່ພວກເຮົາ. ຄວາມໂສກເສົ້າຂອງພວກເຮົາຈະກາຍເປັນຄວາມຍິນດີ. ຄວາມມືດຂອງພວກເຮົາຈະກາຍເປັນແສງສວ່າງ. ສົງຄາມພາຍໃນຈິດໃຈຂອງພວກເຮົາຈະໄດ້ຮັບສັນຕິສຸກຈາກພຣະສັນຍາຂອງພຣະຄຣິດ.

### ປະຫວັດສາດເບື້ອງຫລັງ

ເຄິ່ງນຶ່ງສ່ວນກຶກຂອງປື້ມພຣະທັມເອຊາຢາ (ບົດທີ 1-39) ແມ່ນກ່ຽວພັນກັບອານາຈັກອັດຊີເຣັຽ. ອານາຈັກອັດຊີເຣັຽເປັນປະເທດມະຫາອຳນາດໃນຂ້ອນຫລັງຂອງສັດຕະວັດທີ 8 ກ່ອນຄຣິສຕະສັກຣາດ.

ໃນປີ 735 ກ່ອນຄຣິສຕະສັກຣາດ, ກອງທັບອັດຊີເຣັຽມາບຄູ່ວ່າຈະຢຶດເອົາຫົວເມືອງຕ່າງໆໃນຕາເວັນອອກກາງ. ອານາຈັກພາກເຫນືອ (ອິສຣາເອນ) ແລະ ອານາຈັກ ຊີເຣັຽພະຍາຍາມຜັກດັນໃຫ້ ກະສັດ ອາກາເຊ ອານາຈັກພາກໃຕ້ (ຢູດາ)ເຂົ້າຮ່ວມສັມພັນທະມັຍຕິຕໍ່ກັນ ເພື່ອພວກເຂົາຈະໄດ້ຕໍ່ຕ້ານກອງທັບອັດຊີເຣັຽດ້ວຍກັນ (ປະຫວັດກະສັດທີສອງ 16:5-9; ເອຊາຢາ 7). ເອຊາຢາ ຜູ້ປະກາດພຣະທັມໄດ້ໃຫ້ຄຳປຶກສາແກ່ກະສັດ ອາກາເຊບໍ່ໃຫ້ເຂົ້າຮ່ວມໃນການເຊັນສັນຍານີ້. ກະສັດ ອາກາເຊຢ້ານກະສັດ ເປກາຂອງອານາຈັກພາກເຫນືອ ແລະກະສັດ ເຣຊີນຂອງອານາຈັກຊີເຣັຽຫລາຍພະອົງຈຶ່ງຂໍຮ້ອງໃຫ້ ກະສັດຂອງອັດຊີເຣັຽປ້ອງກັນ. ພະອົງໄດ້ເສັຽຊ່ວຍໃຫ້ກະສັດອັດຊີເຣັຽເພື່ອເປັນຄ່າປ້ອງກັນ. ໃນປີ 721 ກ່ອນຄຣິສຕະສັກຣາດ ກອງທັບອັດຊີເຣັຽໄດ້ເຂົ້າກວດລ້າງທຳຮ້າຍ ເມືອງຊາມາເຣັຽ ຊຶ່ງເປັນເມືອງຫລວງຂອງອານາຈັກພາກເຫນືອ ແລະກວດເອົາປະຊາຊົນອິສຣາເອນໄປເປັນຊະເລີຍ.

ກະສັດອັດຊີເຣັຽໄດ້ປົກປ້ອງກະສັດ ອາກາເຊ ແລະອານາຈັກຂອງພະອົງຈາກການນາບຂູ່ຂອງ ອານາຈັກຊີເຣັຽແລະອານາຈັກພາກເຫນືອ. ພຣະອົງໄດ້ເສັຽຄ່າປົກປ້ອງເປັນຣາຄາສູງຫລາຍ. ກໍຍ້ອນວ່າພຣະອົງບໍ່ເຊື່ອຟັງພຣະຜູ້ເປັນເຈົ້າ, ໄພ່ຟ້າປະຊາຊົນໄດ້ຮັບແຕ່ຄວາມທຸກຍາກຢູ່ໃຕ້ອຳນາດຂອງກະສັດອັດຊີເຣັຽ. ພວກເຂົາຈະໄດ້ຮັບຄວາມປິຕິຍິນດີເມື່ອມີຜູ້ນຶ່ງທີ່ມີຄຸນສົມບັດສະເດັດມາ: "ເດັກນ້ອຍຜູ້ນຶ່ງໄດ້ເກີດມາໃຫ້ເຮົາແລ້ວ, ຊົງປະທານລູກຊາຍຜູ້ນຶ່ງໃຫ້ເຮົາ, ແລະພຣະອົງຈະຊົງເປັນຜູ້ປົກຄອງຂອງເຮົາ" (ເອຊາຢາ 9:6).

ພຣະກຸມມານຈະປ່ຽນຄວາມມືດໃຫ້ກາຍເປັນແສງສວ່າງ (9:1-2)

ເມື່ອກອງທັບອັດຊີເຣັຽໄດ້ເຂົ້າຍຶດເອົາອານາຈັກພາກເໜືອຂອງອິສຣາເອນ. ປະຊາຊົນເກີດຄວາມອຶດຫິວຍ້ອນການຂາດແຄນອາຫານ. ຄວາມອຶດຫິວໄດ້ນຳຄວາມໂກດຮ້າຍ. ຊາວອິສຣາເອນຈະຈົ່ມທຸກແລະຕິຕຽນກະສັດຂອງພວກເຂົານັ້ນຖືກຕ້ອງ, ແຕ່ບໍ່ຖືກຕ້ອງທີ່ຈະຈົ່ມທຸກແລະຕິຕຽນພຣະເຈົ້າຂອງພວກເຂົາ: "ປະຊາຊົນຈະຊັດເຊພະເນຈອນໄປທົ່ວທັງປະເທດດ້ວຍຄວາມໝົດຫວັງແລະອຶດຢາກ ເມື່ອເຂົາຫິວຢາກກິນ ເຂົາຈະຄຽດແຄ້ນແລະປ້ອຍດ່າກະສັດກັບພຣະເຈົ້າຂອງຕົນ ເຂົາອາດຈະເງີຍໜ້າຂຶ້ນຟ້າຫລືກົ້ມລົງດິນ ແຕ່ຈະບໍ່ທັນເຫັນຫຍັງຈະມີແຕ່ຄວາມທຸກໃຈແລະຄວາມມືດ ເຂົາຈະຖືກຂັບໄລ່ເຂົ້າໄປໃນຄວາມມືດອັນໜ້າຢ້ານນັ້ນ ຈະໜີໄປໃຫ້ພົ້ນຈາກເວລາຍາກລຳບາກນີ້ບໍ່ໄດ້" (8:21-22).

"ປະຊາຊົນຜູ້ດຳເນີນຢູ່ໃນຄວາມມືດ" (9:2) ໄດ້ບັນລະຍາຍເຖິງປະຊາຊົນສມັຍຂອງຜູ້ປະກາດພຣະທັມ ເອຊາຢາ. ກະສັດຂອງພວກເຂົາບໍ່ວາງໃຈເຊື່ອໃນພຣະຜູ້ເປັນເຈົ້າ, ແຕ່ກັບໄປສ້າງສຳພັນທະມັຍຕີທາງດ້ານການເມືອງກັບກະສັດອື່ນ ຄິດວ່າການກະທຳຢ່າງນັ້ນຈະນຳຄວາມປອດພັຍມາສູ່ປະເທດຊາດຂອງພວກເຂົາ. ແຕ່ພວກເຂົາໄດ້ຮັບຜົນກັມຍ້ອນວ່າກະສັດຂອງພວກເຂົາບໍ່ຍອມຮັບຄຳແນະນຳຈາກເອຊາຢາ ຜູ້ປະກາດພຣະທັມຂອງອົງພຣະຜູ້ເປັນເຈົ້າ. ເຖິງແມ່ນວ່າ ອານາຈັກຢູດາໄດ້ຮັບຄວາມປອດພັຍຈາກການນາບຂູ່ຂອງອານາຈັກພາກເໜືອແລະຊີເຣັຽ ໂດຍການເສັຽຊ່ວຍຄ່າປົກປ້ອງໃຫ້ກັບກະສັດອັດຊີເຣັຽ, ແຕ່ຄວາມປອດພັຍບໍ່ໄດ້ໝັ້ນຄົງຕລອດໄປ.

"ປະຊາຊົນຜູ້ດຳເນີນຢູ່ໃນຄວາມມືດ" (9:2) ໝາຍເຖິງຊາວຢິວທີ່ຢູ່ໃຕ້ການກົດຂີ່ຂົ່ມເຫງຂອງຈັກກະພັດໂຣມັນ ໃນສັຕວັດທີ່ນຶ່ງຂອງຄຣິສຕະສັກຣາດກໍໄດ້. ມັດທາຍ ຜູ້ບັນທຶກພຣະສັນຍາໃໝ່ຮູ້ດີກັບຄຳທຳນາຍຂອງຜູ້ປະກາດພຣະທັມ ເອຊາຢາ ບົດທີ 9:1-2. ລາວພົບວ່າພຣະທັມຕອນນີ້ໄດ້ສຳເຣັດໃນອົງພຣະເຢຊູ ເມື່ອພຣະອົງໄດ້ຍ້າຍທີ່ປະທັບໄປຢູ່ເມືອງຄາລີເລ: "ຄັນພຣະເຢຊູຊົງຊາບຂ່າວວ່າໂຢຮັນຖືກຈັບໄວ້ແລ້ວ ພຣະອົງກໍສະເດັດອອກໄປຍັງເມືອງຄາລີເລ, ແລ້ວຍ້າຍທີ່ປະທັບຈາກເມືອງນາຊາເຣັດໄປຢູ່ເມືອງກາເປນາອູມ ຊຶ່ງຢູ່ຮີມທະເລສາບໃນເຂດແດນຊາບູໂລນ ແລະເນັບທາລີ, ເພື່ອພຣະທັມທີ່ຊົງກ່າວໄວ້ດ້ວຍເອຊາຢາຜູ້ປະກາດພຣະທັມຈະໄດ້ສຳເຣັດ: 'ແຂວງຊາບູໂລນແລະແຂວງນັບທາລີ, ຕາມທາງທະເລຟາກແມ່ນ້ຳຢໍດາເນພຸ້ນ, ຄືແຂວງຄາລີເລແຫ່ງບັນດາປະຊາຊາດ, ພົລເມືອງຜູ້ທີ່ນັ່ງຢູ່ໃນຄວາມມືດ, ໄດ້ເຫັນຄວາມສວ່າງອັນໃຫຍ່, ແລະຜູ້ທີ່ນັ່ງໃນແດນແລະເງົາແຫ່ງຄວາມຕາຍ, ແສງສວ່າງກໍສ່ອງຂຶ້ນເທິງເຂົາແລ້ວ' " (ມັດທາຍ 4:12-16).

ໃນພຣະທັມ ເອຊາຢາບົດທີ 9:2 ແລະຂໍ້ຕໍ່ໆໄປໄດ້ກ່າວເຖິງເຫດການທີ່ຜ່ານມາ ແລະເຫດການທີ່ຈະເກີດຂຶ້ນໃນອະນາຄົດຕາມອົງພຣະຜູ້ເປັນເຈົ້າໄດ້ເປີດເຜີຍໃນຄຳທຳນວາຍຢ່າງແນ່ນອນ. ຄຳທຳນວາຍອັນສົມບູນຊຶ່ງໄດ້ປະທານຄວາມຫວັງຈຶ່ງໃຫ້ມີຄວາມໝັ້ນໃຈໃນສິ່ງທີ່ຫວັງໄວ້ ("ອັນນຶ່ງ, ຄວາມເຊື່ອຄືຄວາມແນ່ນອນໃຈໃນສິ່ງທີ່ເຮົາຫວັງໄວ້ ເປັນຄວາມຕາຍໃຈເຖິງສິ່ງທີ່ຍັງບໍ່ເຫັນກັບຕາ" ເຮັບເຣີ 11:1).

<u>ພຣະກຸມມານຈະປ່ຽນຄວາມໂສກເສົ້າໃຫ້ກາຍເປັນຄວາມປິຕິຍິນດີ</u> (9:3-5)
ຄຳອຸປມາສອງເຣື່ອງທີ່ບັນລະຍາຍເຖິງຄວາມປິຕິຍິນດີຂອງໄພ່ພົນຂອງພຣະຜູ້ເປັນເຈົ້າ. ປະຊາຊົນຈະໄດ້ຮັບຄວາມປິຕິຍິນດີໃນຍາມເກັບກ່ຽວຫລືເໝືອນຄາວທີ່ພວກເຂົາແບ່ງປັນຂອງທີ່ຍຶດມາໄດ້ (9:3).

ຄວາມປິຕິຍິນດີອັນທຳອິດແມ່ນພຣະຜູ້ເປັນເຈົ້າຊົງຫັກແອກຈາກຜູ້ຂົ່ມເຫງພວກເຂົາ ແລະພວກເຂົາຈະບໍ່ຕ້ອງແບກແອກນັ້ນອີກຕໍ່ໄປ. ເປັນຄຳເວົ້າປະກອບພາບທີ່ໃຫ້ເຫັນ ເໝືອນກັບງົວຫລືຄວາຍທີ່ຖືກປົດແອກອອກຈາກຫລັງຂອງມັນ ເພື່ອໃຫ້ມັນໄປຫາກິນຕາມຄວາມປະສົງຂອງມັນ. ຄຳເວົ້າຕອນນີ້ ເປັນຄຳທຳນວາຍເຖິງເຫດການທີ່ຈະມາໃນອະນາຄົດ.

ໃນຄຳທຳນວາຍນັ້ນ ພຣະຜູ້ເປັນເຈົ້າຈະທຳຮ້າຍອຳນາດຂອງຊົນຊາດທີ່ກົດຂີ່ຂົ່ມເຫັງພວກເຂົາ ເຫມືອນກັບເຄີຍທຳຮ້າຍຊາວມາດີອານມາກ່ອນ. ພຣະຜູ້ເປັນເຈົ້າຊົງໃຫ້ກີເດໂອນເປັນຜູ້ນຳພາປົດແອກຊາວອິສຣາເອນຈາກການກົດຂີ່ຂົ່ມເຫັງ, ສະນັ້ນ ພຣະຜູ້ເປັນເຈົ້າຈະໃຫ້ພວກເຂົາໄດ້ຮັບຊັຍຊະນະຈາກກຳລັງອັນນ້ອຍໆ.

ສາຍເຫດທີສອງທີ່ພວກເຂົາໄດ້ຮັບຄວາມປິຕິຍິນດີນັ້ນແມ່ນສົງຄາມໄດ້ສິ້ນສຸດລົງ. ເຄື່ອງໃຊ້ໃນສນາມຣົບ (ເກີບທຸກຄູ່ຂອງທະຫານທີ່ຮຸກຮານ ພ້ອມທັງເສື້ອທຸກຕົວທີ່ເປື້ອນດ້ວຍເລືອດ) ຈະຖືກເຜົາໄຟທຳລາຍຖິ້ມຫມົດ (9:5). ໃນຂໍ້ທີ 5 ໄດ້ກ່າວເຖິງຣາຊການການປົກຄອງດ້ວຍຄວາມສງົບສຸກ.

<u>ເດັກຜູ້ນີ້ເປັນເດັກຢ່າງໃດ?</u> (9:6-7)

ຄຳທຳນວາຍໄດ້ກ່າວເຖິງຄວາມມືດມົວຂອງການເປັນຂ້າທາດຈະກາຍເປັນແສງສວ່າງຂອງຄວາມອິສຣະ ແລະຄວາມໂສກເສົ້າຈະກາຍເປັນຄວາມປິຕິຍິນດີຂອງຄວາມສັນຕິສຸກ ເມື່ອກະສັດອົງໃຫມ່ໄດ້ຮັບການຫົດສົງ. ມີບາງຄົນຄິດວ່າ ເຫດການດັ່ງກ່າວຈະເລີ້ມເກີດຂຶ້ນເມື່ອກະສັດຂຶ້ນຄອງຣາຊບັນລັງ ບໍ່ແມ່ນໃນຂະນະທີ່ພຣະອົງເກີດ. ເພງສັຣເສີນ ບົດທີສອງໄດ້ບັນລະຍາຍເຖິງການຂຶ້ນຄອງຣາຊບັນລັງຂອງກະສັດອິສຣາເອນ: "ເຮົາໄດ້ແຕ່ງຕັ້ງເຈົ້າຊີວິດຂອງເຮົາໄວ້ເທິງຊີໂອນຄືຜູ້ສັກສິດຂອງເຮົາ. ຂ້າພະເຈົ້າຈະບອກເຖິງຄຳທີ່ພຣະຜູ້ເປັນເຈົ້າຊົງບັນຍັດໄວ້: ພຣະຜູ້ເປັນເຈົ້າຊົງກ່າວແກ່ຂ້າພະເຈົ້າວ່າ 'ມື້ນີ້ເຮົາໄດ້ຮັບເຈົ້າເປັນລູກຊາຍຂອງເຮົາ ເຮົາເປັນພໍ່ຂອງເຈົ້າ' " (ເພງສັຣເສີນ 2:6-7).

ໃນສມັຍບູຮານ ເມື່ອກະສັດຂຶ້ນຄອງຣາຊບັນລັງ ພຣະອົງຈະໄດ້ຮັບພຣະນາມບັນລັງ (Throne names). ພຣະຜູ້ເປັນເຈົ້າໄດ້ໃຫ້ກະສັດອົງນີ້ມີສີ່ພຣະນາມຕາມລັກສະນະພິເສດແລະຕຳແຫນ່ງຂອງພຣະອົງ.

ນາມຊື່ທີນຶ່ງ "ຜູ້ປຶກສາທີ່ສລາດສ້ຽມແຫລມ" ມີຄວາມຫມາຍວ່າ <u>ຜູ້ວາງແຜນອັນປະເສີດ</u>. ນາມຊື່ນີ້ໄດ້ກ່າວເຖິງຄວາມສາມາດໃນດ້ານການບໍຣິຫານ. ນາມຊື່ທີສອງ "ພຣະເຈົ້າຜູ້ຊົງຣິດ" ຊົງເນັ້ນເຖິງກຳລັງຣິດທານຸພາບເຫນືອສັດຕູຂອງພຣະອົງ. ນາມຊື່ທີສາມ "ພຣະບິດາຕລອດໄປ" ຊົງຊີ້ໃຫ້ເຫັນວ່າພຣະອົງເຝົ້າເບິ່ງແຍງໄພ່ພົນຂອງພຣະອົງຕລອດເວລານາມຊື່ທີ່ສຸດທ້າຍ "ອົງສັນຕິຣາດ" ໄພ່ພົນຂອງພຣະອົງຈະຢູ່ດ້ວຍຄວາມສັນຕິສຸກ.

ຄຳວ່າ "ເລີ້ມແຕ່ບັດນີ້ຈົນເຖິງອາວະສານ" (9:7) ຊີ້ໃຫ້ເຫັນວ່າພຣະອົງຈະປົກຄອງດ້ວຍອຳນາດຢ່າງຖືກຕ້ອງແລະຍຸດຕິທັມຕລອດໄປ. ພາສາລາວໃຊ້ຄຳວ່າ <u>ອາວະສານ</u> ແຕ່ພາສາອັງກຣິດໃຊ້ຄຳວ່າ <u>No end</u>. ຜູ້ປະກາດພຣະທັມ ເອຊາຢາ ຄາດຫມາຍວ່າກະສັດອົງນີ້ຈະເປັນອົງສຸດທ້າຍປົກຄອງສືບຕໍ່ກະສັດດາວິດ, ຈະບໍ່ເປັນເຫມືອນກະສັດອົງອື່ນໆທີ່ມາສືບທອດກະສັດອົງຕໍ່ໄປ.

ສະນັ້ນແລ້ວ ກະສັດອົງທີ່ໃຫ້ຄວາມຫວັງວ່າຈະນຳຄວາມລອດພົ້ນມາສູ່ປະຊາຊາດ ທີ່ເອຊາຢາກ່າວເຖິງນີ້ແມ່ນຜູ້ໃດ? ຕາມຄວາມເຂົ້າໃຈຂອງຊາວຢິວ ພວກເຂົາເຫັນວ່າແມ່ນກະສັດເຮເຊກີອາຄືຜູ້ທີ່ເອຊາຢາໄດ້ທຳນວາຍໄວ້. ກະສັດ ເຮເຊກີຢາເປັນບຸດຊາຍຂອງກະສັດ ອາກາເຊ ແລະພຣະອົງໄດ້ຂຶ້ນຄອງບັນລັງແທນພໍ່ຂອງພຣະອົງ. ຜູ້ບັນທຶກພຣະທັມປະຫວັດກະສັດທີສອງໄດ້ບັນທຶກໄວ້ວ່າ ກະສັດເຮເຊກີຢາເປັນກະສັດດີ ( "ບໍ່ມີກະສັດອົງໃດເທົ່າທຽມພຣະອົງ" ປະຫວັດກະສັດທີ ສອງ 18:5). ໃນພຣະທັມປະຫວັດກະສັດ 1 ແລະ 2 ມີພຽງແຕ່ ກະສັດເຮເຊກີຢາແລະກະສັດໂຢເຊອາເທົ່ານັ້ນ ຈາກເຫນືອຕລອດໃຕ້ທີ່ຢູ່ໃນຄວາມຊອບທັມ ແລະເຊື່ອຟັງພຣະບັນຍັດຂອງອົງພຣະຜູ້ເປັນເຈົ້າ.

ຕັ້ງແຕ່ສມັຍພຣະສັນຍາໃຫມ່ມາຈົນຮອດປະຈຸບັນນີ້ ທາງຄຣິສຕະຈັກໄດ້ກ່າວວ່າ ຜູ້ປະກາດພຣະທັມ ເອຊາຢາໄດ້ກ່າວ

ເຖິງຜູ້ໃດທີ່ເໝືອນກັບກະສັດເຮເຊກີຢາ ເພື່ອໃຫ້ສຳເຣັດໄປຕາມຄຳທຳນາຍຂອງລາວ ໃນກ່ອນຄຣິສຕະສັກຣາດທີ ແປດ. ຄຳທຳນາຍເຖິງການມາບັງເກີດຂອງພຣະເມຊີອານັ້ນຈະພົບໄດ້ໃນພຣະເຢຊູ ຊຶ່ງເປັນພຣະກຸມມານທີ່ສະເດັດມາ ບັງເກີດກັບນາງມາຣີອາແລະທ່ານໂຢເຊບ ບ້ານເບດເລເຮັມ.

<u>ຂໍ້ຄວາມທີ່ນຳໄປໃຊ້ປະຈຳວັນ</u>

ເມື່ອພຣະເຢຊູສະເດັດມາບັງເກີດໃນເບດເລເຮັມ, ໂລກນີ້ເລີ້ມມີການປ່ຽນແປງ. ການປ່ຽນແປງຈະເຫັນໄດ້ຫລາຍທາງ. ຕົວຢ່າງທີ່ນຶ່ງຈະເຫັນໄດ້ ຄື ເທສການຣະດູໜາວ, ງານຊາເທີນາລີອາ (Saturnalia). ຊາວໂຣມັນຈະສເລີມສລອງ ເທສການນີ້ເປັນເວລາເຈັດວັນ, ຕັ້ງແຕ່ ເດືອນ 12 ຂອງວັນທີ 17 ໄປຈົນຮອດວັນທີ 23. ຮ້ານຄ້າຮ້ານຂາຍປິດ, ພວກ ຂ້າທາດໄດ້ຮັບອິສຣະພາບຊົ່ວຄາວ, ມີການແລກປ່ຽນຂອງຂວັນ, ແລະມີການລົ້ນເລີງມ່ວນຊື່ນ. ໃນສັຕວັດທີສີ່ ເທສ ການນີ້ໄດ້ປ່ຽນຈາກເທສການອັນດີງາມໄປເປັນເທສການທີ່ຕ່ຳຊ້າ ແລະອະນຸຍາດທາງເຣື່ອງເພດ. ເທສການນີ້ໄດ້ທຳ ຮ້າຍເອກລັກຂອງຄອບຄົວແລະຈິກຄອບຄົວຂອງຊາວໂຣມັນບໍ່ນ້ອຍ.

ຕໍ່ມາ ໃນປີ 336 ຄຣິສຕະສັກຣາດ, ທາງຄຣິສຕະຈັກໄດ້ສເລີມສລອງເທສການຄ້າຍວັນບັງເກີດຂອງພຣະຄຣິດ ໃນ ເດືອນ12 ຂອງວັນທີ 25 - ຄຣິສມາດ. ໃຫ້ສັງເກດເບິ່ງວັນເທສການໃນປະຈຸບັນນີ້ທີ່ມີຄວາມກ່ຽວພັນກັບຄອບຄົວ. ເທສການຄຣິສມາດ ຖັດຈາກວັນຂອບຄຸນພຣະເຈົ້າ ເປັນວັນທີ່ທ້ອນໂຮມຄອບຄົວໃຫ້ມາຢູ່ນຳກັນ. ຕ່າງຄົນຢູ່ຕ່າງແດນ ກໍໄດ້ມາເຫັນໜ້າເຫັນຕາກັນ ພົບພໍ້ສັງສັນກັນດ້ວຍຄວາມປິຕິຍິນດີ. ພຣະຄຣິດໄດ້ສະເດັດມານຳຄົນບາບໃຫ້ກັບຄືນ ເຂົ້າມາສູ່ຄອບຄົວຂອງພຣະຜູ້ເປັນເຈົ້າອີກຄັ້ງນຶ່ງ.

<u>ພຣະເມຊີອາ</u>

ຄຳວ່າ <u>ພຣະເມຊີອາ</u> ແມ່ນມາຈາກພາສາເຮັບເຣີ ມີຄວາມໝາຍວ່າ <u>ຜູ້ທີ່ຖືກຫົດສົງ</u>. ກະສັດທຸກໆອົງຂອງອິສຣາເອນ ຈະຕ້ອງໄດ້ຮັບການຫົດສົງ. ເລີ້ມແຕ່ກະສັດຊາອູນ ແລະກະສັດດາວິດ ຊາມູເອນເປັນຜູ້ຫົດສົງ (ຊາມູເອນທີ 10:1; 16:10-13). ປະຊາຊົນກ່ອນສມັຍແລະສມັຍຂອງພຣະເຢຊູເຊື່ອວ່າຜູ້ທີ່ຈະມາປົກຄອງໄພ່ພົນຂອງພຣະຜູ້ເປັນເຈົ້າຈະ ຕ້ອງມາຈາກຣາຊວົງຂອງກະສັດດາວິດຊຶ່ງຈະເປັນຜູ້ທີ່ພຣະຜູ້ເປັນເຈົ້າຫົດສົງ.

ຄຳວ່າ <u>ພຣະເມຊີອາ</u> ໃນພາສາກຣີກໃຊ້ຄຳວ່າ <u>ຄຣິສໂຕ</u>, ມີຄວາມໝາຍວ່າຜູ້ທີ່ຖືກຫົດສົງ. ສຳລັບພາສາອັງກຣິດ ໃຊ້ຄຳວ່າ <u>ຄຣິດ</u>. ຄຳພະຍານຂອງພຣະສັນຍາໃໝ່ນັ້ນແມ່ນ ພຣະເຢຊູ ໄທນາຊາເຣັດເປັນພຣະຄຣິດ-ພຣະເມຊີອາ- ເປັນຜູ້ທີ່ຖືກຫົດສົງ.

<u>ຄຳຖາມ</u>

1. ທ່ານຜໍຈະຄິດອອກບໍ່ວ່າ ຄວາມມືດມົວໃນທີ່ໃດໄດ້ປ່ຽນແປງກັບກາຍມາເປັນສວ່າງເມື່ອພຣະເຢຊູສະເດັດມາບັງ ເກີດ?
2. ຜູ້ປະກາດພຣະທັມເອຊາຢາໄດ້ໃຫ້ນາມຊື່ບັນລັງຂອງພຣະເຢຊູສີ່ນາມ. ມີນາມຊື່ໃດແດ່ຂອງພຣະເຢຊູທີ່ຮູ້ກັນດີ?
3. ຊີວິດຂອງທ່ານມີການປ່ຽນແປງອັນໃດແດ່ ຫລັງຈາກພຣະຄຣິດໄດ້ມາບັງເກີດ ໃນຮາງຫຍ້າໃນບ້ານເບດເລເຮັມ?

# ບົດຮຽນທີ 5
# ໄວ້ວາງໃຈໃນພຣະສັນຍາຂອງພຣະຜູ້ເປັນເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນ: ເອຊາຢາ 62
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ເອຊາຢາ 62
ຈຸດສຳຄັນຂອງບົດຮຽນນີ້: ການສເລີມສລອງເທສການວັນຄຣິສມາດອັນແທ້ຈິງແມ່ນການໄວ້ວາງໃຈໃນພຣະສັນຍາຂອງພຣະຜູ້ເປັນເຈົ້າທີ່ໃຫ້ຄວາມຫວັງໃນອະນາຄົດ.
ຄຳຖາມເພື່ອການສຳຫລວດ: ແມ່ນຫຍັງທີ່ຈະຄ້ຳຊູອະນາຄົດໄດ້?
ຈຸດປະສົງຂອງບົດຮຽນນີ້: ບັນລະຍາຍເຖິງວິທີທາງການປະເຊີນກັບອະນາຄົດດ້ວຍຄວາມໝັ້ນໃຈ.

## ບົດຮຽນ

### ຄຳນຳ

"ຜູ້ໃຫ້ຄຳສັນຍາ" ຍ່ອມຈະຍຶດຖືໃນຄຳໝັ້ນສັນຍາຂອງຕົນ. ບາງຄັ້ງບາງຄາວພວກເຮົາເກີດມີຄວາມທໍ້ຖອຍ ພວກເຮົາຕ້ອງການໃຫ້ມີຜູ້ໃດຜູ້ນຶ່ງມາໜູນຈິດໃຈພວກເຮົາ, "ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າໃນເຣື່ອງພຣະສັນຍາຂອງພຣະອົງ" (2 ເປໂຕ 3:9), ແລະ "ແຕ່ພວກທີ່ຮັກເອີຍ, ຢ່າລືມຂໍ້ນີ້ວ່າ ຕໍ່ພຣະພັກຂອງອົງພຣະຜູ້ເປັນເຈົ້າວັນດຽວກໍເໝືອນກັບພັນປີ ແລະພັນປີກໍເໝືອນກັບວັນດຽວ" (2 ເປໂຕ 3:8). ພຣະສັນຍາຂອງອົງພຣະຜູ້ເປັນເຈົ້າເປັນທີ່ໄວ້ວາງໃຈໄດ້.

### ປະຫວັດສາດເບື້ອງຫລັງ

ໃນຣະຫວ່າງປີ 587-538 ກ່ອນຄຣິສຕະສັກຣາດ, ເອຊາຢາ ບົດທີ 40-55 ຜູ້ປະກາດພຣະທັມໄດ້ ທຳນວາຍໄວ້ວ່າ ພຣະຜູ້ເປັນເຈົ້າຈະນຳຊາວອິສຣາເອນທີ່ເປັນຊະເລີຍທີ່ຢູ່ໃນປະເທດບາບີໂລນກັບມາບ້ານເກີດເມືອງນອນຂອງພວກເຂົາ. ຕາມຄວາມຈິງແລ້ວ ຊື່ກະສັດ ໄຊຣັດຂອງເປີເຊັຽໄດ້ຖືກກ່າວເຖິງ. ພະອົງຈະເປັນຜູ້ທີ່ດຳເນີນງານໃຫ້ສຳເຣັດຕາມໂຄງການຂອງອົງພຣະຜູ້ເປັນເຈົ້າໄດ້ວາງໄວ້ (ເອຊາຢາ 44:28; 45:1, 13).

ໃນປີ 539 ກ່ອນຄຣິສຕະສັກຣາດ, ກະສັດໄຊຣັດໄດ້ຍຶດເອົາອາບີໂລນ. ປີຕໍ່ມາ 538 ກ່ອນຄຣິສຕະສັກຣາດ, ພຣະອົງໄດ້ອອກຄຳສັ່ງອະນຸຍາດໃຫ້ຊາວອິສຣາເອນກັບເມືອບ້ານເກີດເມືອງນອນຂອງຕົນ ແລະສ້າງພຣະວິຫານໃໝ່ (ເອັຊຣາ 1:1-4). ບາງຄົນກໍຕັດສິນໃຈກັບສ້າງບ້ານແປງເມືອງທີ່ເພພັງຢູ່ ຫລັງຈາກພັດບ້ານມາໄດ້ຫ້າສິບປີ. ພວກເຂົາມີຄວາມຫວັງສູງຢາກຈະສ້າງເມືອງເຢຣູຊາເລັມ ແລະພຣະວິຫານຂຶ້ນໃໝ່. ພວກເຂົາຈະໄດ້ປະຕິບັດຕາມຮີດຄອງປະເພນີທີ່ເຄີຍຖືມາກ່ອນດ້ວຍຄວາມຊົມຊື່ນຍິນດີ.

ເມື່ອພວກເຂົາໄປຮອດເຢຣູຊາເລັມ, ພວກເຂົາໄດ້ວາງພື້ນສ້າງພຣະວິຫານຂຶ້ນໃໝ່ (ເອັຊລາ 5:14-16). ພວກເຂົາກໍເລີ້ມການນະມັສການຖວາຍເຄື່ອງບູຊາຕາມທີ່ເຄີຍປະຕິບັດກັນມາ. ພວກຄົນໜຸ່ມທີ່ເກີດໃໝ່ໃນສມັຍເປັນຊະເລີຍ ບໍ່ເຄີຍເຫັນພຣະວິຫານເກົ່າຂອງກະສັດໂຊໂລໂມນສ້າງ ແຕ່ພວກເຂົາພໍໃຈກັບພຣະວິຫານໃໝ່ ພວກເຂົາກໍມີຄວາມປິຕິຍິນດີ. ແຕ່ວ່າພວກຜູ້ເຖົ້າມີຄວາມໂສກເສົ້າເສັຽໃຈ ເພາະວ່າພຣະວິຫານຫລັງໃໝ່ທີ່ສ້າງຂຶ້ນນັ້ນ ຈະຫາຄວາມງາມແລະຄວາມຮຸ່ງເຮືອງເຫລືອງເຫລື້ອມເໝືອນຫລັງເກົ່າກໍບໍ່ໄດ້ ອ່ານ (ເອັຊຣາ 3:10-12).

ເມື່ອເປັນດັ່ງນັ້ນ ການສ້າງພຣະວິຫານຈຶ່ງມີການຊັກຊ້າລົງ. ໃນປີ 520 ກ່ອນຄຣິສຕະສັກຣາດ ຜູ້ປະກາດພຣະທັມຮັກກາຍ ແລະເສກາຣີຢາໄດ້ຣະດົມໜູນຈິດໃຈພວກເຂົາໃຫ້ສ້າງພຣະວິຫານຂອງອົງພຣະຜູ້ເປັນເຈົ້າ. ໃນທີ່ສຸດພຣະວິຫານກໍໄດ້ສຳເຣັດລົງໃນປີ 516 ກ່ອນຄຣິສຕະສັກຣາດ (ເອັຊຣາ 6:1-15).

<u>ນາມຊື່ໃໝ່ສຳລັບເຢຣູຊາເລັມ ແລະຢູດາ</u> (62:1-5)
ເມື່ອຊາວຢິວທີ່ຖືກນຳໄປເປັນຊະເລີຍໃນປະເທດບາບີໂລນຊຸດທຳອິດທີ່ກັບມາເຢຣູຊາເລັມໄດ້ພົບວ່າທຸກສິ່ງທີ່ພຣະຜູ້ເປັນເຈົ້າຊົງສັນຍາໄວ້ນັ້ນຍັງບໍ່ສຳເຣັດເທື່ອ, ຜູ້ປະກາດພຣະທັມຈຶ່ງປະກາດວ່າ ລາວຈະບໍ່ຍອມມິດງຽບໄປຈັກເທື່ອ. ລາວຈະອ້ອນວອນທູນຂໍຢູ່ຕລອດໄປຈົນກວ່ານະຄອນເຢຣູຊາເລັມໄດ້ມີຊັຍແລະພົ້ນພັຍ ຄືມີຊັຍສ່ອງແຈ້ງດັ່ງ "ໂຄມໄຟຍາມຄ່ຳມືດ" (62:1).

ເຢຣູຊາເລັມຖືກສັດຕູຂອງນາງທຳຮ້າຍຮ່າງກາຍແລະຈິດໃຈ ຊັບສິນເງິນທອງ ເຂົ້ານ້ຳອາຫານ ແລະຊັພຍາກອນຫານັບບໍ່ໄດ້. ນາງຖືກທອດຖິ້ມເປັນເໝືອນ "ຜູ້ຖືກປະຖິ້ມ" ແລະນາງເປັນເໝືອນກັບ "ເມືອງທີ່ຜືອໜືປະ".

ຜູ້ປະກາດພຣະທັມ ເອຊາຢາໄດ້ປະກາດວ່າ ເຢຣູຊາເລັມແລະຢູດາຈະໄດ້ຮັບນາມຊື່ໃໝ່. ໃນຊົ່ວອາຍຸຄົນທີ່ຈະມານີ້ ນາມຊື່ຂອງເຢຣູຊາເລັມແລະຢູດາຈະໄດ້ປ່ຽນຊື່ຈາກ "ຜູ້ຖືກປະຖິ້ມ" ແລະ "ເມືອງທີ່ຜືອໜືປະ" ໃຫ້ເປັນ "ພຣະເຈົ້າພໍໃຈນຳນາງ" ແລະ "ຜູ້ແຕ່ງງານທີ່ມີຄວາມສຸກ".

ການປ່ຽນຊື່ຂອງຜູ້ໃດຜູ້ນຶ່ງໃນພຣະຄັມພີມີຄວາມສຳຄັນ ເນື່ອງຈາກວ່າມີການປ່ຽນແປງໃນຊີວິດຂອງບຸກຄົນນັ້ນ. ທ່ານຄົງຈຳຢາໂຄບໄດ້ ຊື່ເກົ່າຂອງລາວມີຄວາມໝາຍວ່າ <u>ຂີ້ຫລັກ, ຫລອກລວງ, ແຍ້ງຊີງເອົາຂອງຄົນອື່ນ</u>, ລາວເປັນຄົນຢ່າງນັ້ນໃນຊີວິດຂອງລາວ. ຊື່ຂອງລາວໄດ້ຖືກປ່ຽນໃໝ່ ຫລັງຈາກລາວໄດ້ຕໍ່ສູ້ກັບຜູ້ຕາງໜ້າຂອງພຣະຜູ້ເປັນເຈົ້າທີ່ເປນີເອນ (ອ່ານປະຖົມມະການ 32:28). ນາມຊື່ <u>ອິສຣາເອນ</u> ມີຄວາມໝາຍວ່າ <u>ຜູ້ທີ່ໄດ້ຕໍ່ສູ້ກັບພຣະຜູ້ເປັນເຈົ້າ</u>. ກ່ອນຊື່ຂອງລາວຈະຖືກປ່ຽນນັ້ນ ລາວໄດ້ລໍ້ລວງເອົາສິດທິເປັນອ້າຍມາເປັນຂອງລາວ ແລະລາວໄດ້ຕົວະເອົາພຣະພອນຂອງອ້າຍລາວມາເປັນຂອງລາວດ້ວຍກົນອຸບາຍຫລອກລໍ້ພໍ່ຂອງລາວ. ຫລັງຈາກນາມຊື່ຂອງລາວໄດ້ຖືກປ່ຽນ ລາວກັບເປັນຄົນທີ່ມີຄວາມສັມພັນກັບພຣະຜູ້ເປັນເຈົ້າ. ລາວບໍ່ເປັນຄົນຫລອກລໍ້ຕົວະຕົ້ມອີກຕໍ່ໄປ. ເຢຣູຊາເລັມແລະຢູດາຄິດວ່າ ພຣະຜູ້ເປັນເຈົ້າໄດ້ປະຖິ້ມຕົວເຂົາໄປ. ໂດຍຜ່ານທາງຜູ້ປະກາດພຣະທັມ ເອຊາຢາ, ພຣະຜູ້ເປັນເຈົ້າຊົງສັນຍາວ່າ ພວກເຂົາຈະຖືກປ່ຽນຊື່ໃຫ້ວ່າ "<u>ພຣະເຈົ້າພໍໃຈນຳນາງ</u>" ແລະ "<u>ຜູ້ແຕ່ງງານທີ່ມີຄວາມສຸກ</u>".

ຈາກການປ່ຽນແປງໃນນາມຊື່ໃໝ່, ເຢຣູຊາເລັມແລະຢູດາຈຶ່ງເປັນ "ດັ່ງມົງກຸດອັນງົດງາມ ເຊິ່ງວາງຢູ່ໃນມືສຳລັບພຣະຜູ້ເປັນເຈົ້າ" (ເອຊາຢາ 62:3).

ຄຳອຸປມາເຣື່ອງການແຕ່ງງານໄດ້ເລີ້ມແຕ່ຂໍ້ ທີ4 ໄປຈົນຮອດຂໍ້ທີ 5 ໃນຄຳເວົ້າວ່າ ພຣະຜູ້ເປັນເຈົ້າມີຄວາມຊົມຊື່ນຍິນດີກັບເຢຣູຊາເລັມ "... ເຈົ້າບ່າວຊົມຊື່ນຍິນດີນຳເຈົ້າສາວຂອງຕົນສັນໃດ, ພຣະເຈົ້າຂອງເຈົ້າກໍຊົມຊື່ນຍິນດີນຳເຈົ້າສັນນັ້ນ" (ເອຊາຢາ 62:5). ບໍ່ມີຄຳເວົ້າອັນໃດຈະເໜືອໄປກວ່ານີ້ອີກໃນພຣະສັນຍາເດີມ ແລະສະແດງໃຫ້ເຫັນວ່າພຣະຜູ້ເປັນເຈົ້າຊົງມີຄວາມເປັນຫ່ວງຕໍ່ໄພ່ພົນຂອງພຣະອົງ.

<u>ຄຳອ້ອນວອນຂອງຄົນຍາມຢູ່ເທິງກຳແພງເມືອງເຢຣູຊາເລັມ</u> (62:6-9)
ພຣະຜູ້ເປັນເຈົ້າຊົງຕັດຜ່ານທາງຜູ້ປະກາດພຣະທັມ ເອຊາຢາວ່າ ພຣະອົງໄດ້ວາງ "ຄົນຍາມຫລາຍໆຄົນ" ຢູ່ເທິງກຳ

ແພງເມືອງຂອງເຢຣູຊາເລັມ.  ຄົນຍາມພວກນີ້ມີໜ້າທີ່ຢ່າງດຽວເທົ່ານັ້ນ ຄືເຂົ້າຮ່ວມປະຊາຊົນອ້ອນວອນຢູ່ບໍ່ຂາດ. ສະນັ້ນຄົນຍາມພວກນີ້ຈຶ່ງຖືກແຍກອອກຈາກຄົນຍາມກຸ່ມອື່ນ.

ພວກເຂົາມີໜ້າທີ່ "ບອກພຣະຜູ້ເປັນເຈົ້າໃຫ້ຈື່ຈຳເລື້ອຍໆ" (62:6)  ເຖິງຄຳສັນຍາຂອງພຣະອົງທີ່ມີຕໍ່ໄພ່ພົນຂອງພຣະອົງ ແລະ "ຈະບໍ່ໃຫ້ພຣະອົງພັກຜ່ອນຫລັບນອນຈົນກວ່າພຣະອົງໄດ້ເຮັດໃຫ້ກຸງນີ້ກາຍເປັນນະຄອນເຊິ່ງເປັນທີ່ຍົກຍໍຂອງຄົນທົ່ວທຸກມຸມໂລກ" (62:7). ພວກເຂົາຈະອ້ອນວອນຢູ່ຕລອດຈົນບໍ່ພັກຜ່ອນພຣະຜູ້ເປັນເຈົ້າກໍຈະບໍ່ໄດ້ພັກຜ່ອນ.

ຈາກຄຳກອນຕອນນີ້  ໄດ້ຊັກຊວນໃຫ້ລະນຶກເຖິງຄຳອຸປມາຂອງພຣະເຢຊູທີ່ພຣະອົງໄດ້ກ່າວຕໍ່ພວກສາວົກຂອງພຣະອົງ "ເພື່ອສັ່ງສອນພວກເຂົາວ່າຈຳເປັນຕ້ອງຫມັ່ນອ້ອນວອນຢູ່ສເມີແລະບໍ່ໃຫ້ທໍ້ຖອຍຈັກເທື່ອ" (ລູກາ 18:1). ໃນພຣະທັມລູກາ 18:1-8,  ພຣະເຢຊູໄດ້ເລົ່າຄຳອຸປມາໃຫ້ສາວົກຂອງພຣະອົງຟັງ ກ່ຽວກັບເຣື່ອງແມ່ຫມ້າຍແລະຕຸລາການ. ຕຸລາການຄົນນີ້ເປັນຄົນບໍ່ຢຳເກງພຣະເຈົ້າແລະບໍ່ນັບຖືມະນຸດ. ມີແມ່ຫມ້າຍຜູ້ນຶ່ງມາຮ້ອງທຸກຕໍ່ລາວ ເພື່ອຂໍຄວາມເປັນທັມຢູ່ບໍ່ຂາດມື້. ແມ່ຫມ້າຍຜູ້ນັ້ນລົບກວນຈິດໃຈລາວຫລາຍ, ໃນທີ່ສຸດ ລາວກໍເລີຍໃຫ້ຄວາມຍຸດຕິທັມແກ່ນາງ. ພຣະເຢຊູໄດ້ກ່າວຕໍ່ສາວົກຂອງພຣະອົງວ່າ, "ຈົ່ງຟັງຄຳທີ່ຕຸລາການຜູ້ບໍ່ຍຸດຕິທັມຄົນນີ້ໄດ້ເວົ້າ.  ຝ່າຍຄົນທັງຫລາຍທີ່ພຣະເຈົ້າໄດ້ຊົງເລືອກໄວ້ ຊຶ່ງຮ້ອງຫາພຣະອົງທັງກາງເວັນແລະກາງຄືນນັ້ນ  ເຖິງແມ່ວ່າພຣະອົງຊົງຈະຊ້ານານໃນການຂອງເຂົາກໍຕາມ ພຣະອົງຈະບໍ່ຊົງໂຜດຄວາມຍຸດຕິທັມແກ່ເຂົາຫລື. ເຮົາບອກທ່ານທັງຫລາຍວ່າພຣະອົງຈະຊົງໂຜດຄວາມຍຸດຕິທັມໃຫ້ແກ່ເຂົາໂດຍໄວ" (ລູກາ 18:6-8).

ໃນພຣະທັມຂໍ້ນີ້ຈຶ່ງກໍ່ໃຫ້ເກີດຄຳຖາມກ່ຽວກັບການອ້ອນວອນເພື່ອກັນແລະກັນ (Intercessory prayer). ຖ້າພຣະຜູ້ເປັນ
ເຈົ້າຊົງຮູ້ທຸກຢ່າງ, ເປັນຫຍັງພຣະອົງຍັງຕ້ອງການໃຫ້ເຕືອນພຣະອົງໃນຄຳສັນຍາຂອງພຣະອົງຢູ່ບໍ່ຂາດ? ຖ້າພຣະອົງຊົງ ດີແທ້ແລະມີອຳນາດແທ້,  ເປັນຫຍັງພຣະອົງຍັງຈຳເປັນຕ້ອງໃຫ້ອ້ອນວອນຫາ  ພຣະອົງຈຶ່ງຈະມາປິ່ນປົວຄວາມເຈັບປວດຂອງມະນຸດໃຫ້ຫາຍດີ ແລະເຮັດໃຫ້ຄວາມບໍ່ດີເປັນຄວາມດີ?

ຄຳຕອບນັ້ນມີຢູ່ວ່າ ອາດຈະເປັນນຳການໃຊ້ຂອງຄຳເວົ້າເພື່ອໃຫ້ສອດຄ່ອງ. ພຣະຜູ້ເປັນເຈົ້າຈະໃຊ້ຄຳເວົ້າທີ່ໃຫ້ພວກເຮົາສາມາດເຂົ້າໃຈແລະເຄີຍເຫັນຢູ່ເລື້ອຍໆ.   ເຊັ່ນຕົວຢ່າງ ໃນພຣະທັມ ເພງສັຣເສີນ 44:23, "ຈົ່ງຕື່ນຂຶ້ນມາເຖີດ ພຣະຜູ້ເປັນເຈົ້າຂ້າ  ນົວຫລັບຢູ່ເຮັດຫຍັງ?  ໂຜດມາຊ່ອຍກູ້ເອົາດ້ວຍ!  ຈົ່ງຕື່ນຂຶ້ນມາເຖີດ ພຣະຜູ້ເປັນເຈົ້າຂ້າ! ຢ່າປະປ່ອຍພວກຂ້າພຣະອົງເລີຍເທາະ! " ປະຊາຊົນມີຄວາມຮູ້ສຶກວ່າພຣະຜູ້ເປັນເຈົ້າຊົງນອນຫລັບຢູ່ແລະປ່ອຍປະພວກເຂົາ.  ພວກໃຊ້ ຄຳ "ນົວຫລັບຢູ່" ເປັນຄຳອຸປມາ ເພື່ອບັນລະຍາຍເຖິງຄວາມຮູ້ສຶກຂອງພວກເຂົາວ່າ  ພຣະຜູ້ເປັນເຈົ້າບໍ່ຊົງຕອບພວກເຂົາ.

ເອຊາຢາ 62:8-9 ເປັນພຣະຄຳໃຫ້ຄວາມຫມັ້ນໃຈແກ່ການອ້ອນວອນຂອງຊາວອິສຣາເອນ. ພຣະຜູ້ເປັນເຈົ້າໄດ້ຊົງສັນຍາຢ່າງຫນັກແຫນ້ນ. ພຣະອົງຈະທຳຕາມຄຳສັນຍາດ້ວຍຄວາມສັດຊື່.

ປະຫວັດສາດຂອງອິສຣາເອນໄດ້ບັນທຶກໄວ້ວ່າ ເຢຣູຊາເລັມຖືກສັດຕູທຳຮ້າຍ ປຸ້ນຈີ້ເອົາສັບສິນເງິນທອງແລະອາຫານຫລືບໍ່ ກໍຖືກນາບຂູ່ຈາກປະເທດທີ່ມີອຳນາດໃຫ້ເສັຽຊ່ວຍຕລອດມາ.   ພຣະຜູ້ເປັນເຈົ້າໄດ້ເຕືອນເຢຣູຊາເລັມວ່າ ຍ້ອນການໄຫວ້ພຣະທຽມ ພວກເຂົາຈຶ່ງໄດ້ຮັບການລົງໂທດ.  ແຕ່ນີ້ຕໍ່ໄປ ຍ້ອນພຣະຄຸນແລະຄວາມຮັກອັນຫມັ້ນຄົງຂອງອົງພຣະຜູ້ເປັນເຈົ້າ (62:1).  ພຣະຜູ້ເປັນເຈົ້າຊົງສັນຍາວ່າ ການລົງໂທດຢ່າງນັ້ນຈະບໍ່ເກີດຂຶ້ນອີກຕໍ່ໄປ. ເດີ່ນຂອງພຣະວິຫານຈະເປັນບ່ອນພວກທີ່ເຂົ້າມານະມັສການ  ໄດ້ນຳເຄື່ອງຖວາຍຊຶ່ງເປັນຜົລປູກຫົວປີຈາກການເກັບກ່ຽວມາຖວາຍ

ໃຫ້ແກ່ອົງພຣະຜູ້ເປັນເຈົ້າດ້ວຍຄວາມຊົມຊື່ນຍິນດີ.

<u>ຜູ້ໃຫ້ຄຳສັນຍາໄດ້ສະເດັດມາພ້ອມກັບລາງວັນ</u> (62:10-12)
ຊາວຢິວທີ່ຖືກນຳໄປເປັນຊະເລີຍໃນປະເທດບາບີໂລນຊຸດທຳອິດທີ່ກັບມາ ແລະປະຊາຊົນບາງສ່ວນທີ່ຄ້າງຄາຢູ່ໃນເມືອງເຢຣູຊາເລັມໄດ້ອອກໄປຈັດແຈ່ງແປງທາງ ເພື່ອໃຫ້ປະຊາຊົນທັງຫລາຍທີ່ຈະກັບມາບ້ານເກົ່າເມືອງເດີມຂອງພວກເຂົາ. ລູກຊາຍແລະລູກສາວຂອງອິສຣາເອນທີ່ແຕກກະຈັດກະຈາຍໄປໃນຂົງເຂດເມໂຊໂປຕາເມັຽ (ປະຈຸບັນແມ່ນ ອີຣັກ, ຈໍແດນ, ແລະຊີເຣັຽ) ພວກເຂົາຈະມາຊີໂອນ.

"ພວກເຈົ້າຈະມີຊື່ 'ຄົນຜູ້ບໍຣິສຸດຂອງພຣະເຈົ້າ'" (6:12). ເມື່ອພຣະຜູ້ເປັນເຈົ້າໄດ້ນຳຊາວອິສຣາເອນອອກມາຈາກປະເທດເອຢິບ ພຣະອົງໄດ້ຮ້ອງພວກເຂົາວ່າໄພ່ພົນບໍຣິສຸດຂອງພຣະອົງ (ອົບພະຍົບ 19:6). ປະຈຸບັນນີ້ພຣະຜູ້ເປັນເຈົ້າໄດ້ຮ້ອງພວກເຂົາວ່າ ໄພ່ພົນບໍຣິສຸດຂອງພຣະເຈົ້າ ໃນຂະນະທີ່ພຣະອົງໄດ້ຮ້ອງໃຫ້ພວກເຂົາອອກມາຈາກການເປັນຊະເລີຍຂອງປະເທດບາບີໂລນ.

"ພວກເຈົ້າຈະມີຊື່ ... 'ປະຊາຊົນທີ່ພຣະຜູ້ເປັນເຈົ້າໄດ້ຊ່ອຍກູ້ເອົາໄວ້'" (ເອຊາຢາ 62:12). ຕາມກົດລະບຽບຂອງອິສຣາເອນ ພີ່ນ້ອງໃກ້ຊິດມີຫນ້າທີ່ຮັບຜິດຊອບແກ້ແຄ້ນຜູ້ທີ່ທຳຜິດຕໍ່ຍາດພີ່ນ້ອງຂອງຕົນ ຫລືຊື້ດິນແດນທີ່ຂາຍໄປແລ້ວຄືນມາໃຫ້ມາເປັນຊັບສົມບັດຂອງຄອບຄົວຜູ້ຕາຍໄປນັ້ນຕໍ່ໄປ. ລະບຽບພວກເລວີ ບົດທີ 25 ໄດ້ບັນລະຍາຍເຖິງກົດລະບຽບການກູ້ຄືນ. ເມື່ອຊາຍຜູ້ນຶ່ງຕາຍໄປ ລາວບໍ່ມີລູກແລະບໍ່ມີນ້ອງຊາຍສືບແທນມູນຂອງລາວ ພີ່ນ້ອງໃກ້ຊິດມີຫນ້າທີ່ຮັບຜິດຊອບແຕ່ງງານກັບຍິງຫມ້າຍ ແລະລ້ຽງລູກຂອງຜູ້ທີ່ຕາຍໄປແລ້ວສືບແທນຊື່ຂອງລາວຕໍ່ໄປ. ພີ່ນ້ອງໃກ້ຊິດຜູ້ນີ້ຈຶ່ງເອີ້ນກັນວ່າ <u>ພີ່ນ້ອງໃກ້ຊິດ-ຜູ້ຊ່ອຍກູ້ເອົາໄວ້</u>. ໃນກໍຣະນີດຽວກັບ ທ່ານໂບອາບແລະນາງຣຸດ (ໃຫ້ອ່ານພຣະທັມຣຸດ3:1-4:14). ໃນພຣະທັມເອຊາຢາ 62:12 ຈຶ່ງມີຄວາມຫມາຍຢ່າງນີ້ ພຣະຜູ້ເປັນເຈົ້າໄດ້ໃຫ້ພຣະອົງເອງເປັນ "ພີ່ນ້ອງໃກ້ຊິດ" ທີ່ຈະຊ່ອຍກູ້ເອົາອິສຣາເອນທີ່ແຕກກະຈັດກະຈາຍໄປທົ່ວຂົງເຂດເມໂຊໂປຕາເມັຽໄວ້ ແລະໄດ້ຮ້ອງພວກເຂົາວ່າ "ປະຊາຊົນທີ່ພຣະຜູ້ເປັນເຈົ້າໄດ້ຊ່ອຍກູ້ເອົາໄວ້ ".ຄວາມພົ້ນໄດ້ມາເຖິງໃນບັ້ນປາຍ."ພຣະຜູ້ສັນຍາ" ໄດ້ມາໄຖ່ຕາມຄຳສັນຍາຂອງພຣະອົງ.

## <u>ຂໍ້ຄວາມທີ່ນຳໄປໃຊ້ປະຈຳວັນ</u>
ປະຊາຊົນຢູດາໃນສມັຍສັຕວັດທີ 6 ກ່ອນຄຣິສຕະສັກຣາດ ຕ້ອງມີຄວາມໄວ້ວາງໃນພຣະຜູ້ເປັນເຈົ້າສຳລັບອະນາຄົດຂອງພວກເຂົາ. ພຣະຜູ້ເປັນເຈົ້າຊົງສັນຍາວ່າຈະຊ່ອຍກູ້ພວກເຂົາ. ເມື່ອພວກເຂົາເຫັນວ່າພຣະຜູ້ເປັນເຈົ້າຊົງຊັກຊ້າຕາມຄວາມຄາດຫມາຍຂອງພວກເຂົາ ພວກເຂົາຄິດວ່າພຣະອົງຊົງປ່ອຍປະພວກເຂົາແລ້ວ. ພວກເຂົາສົງສັຍວ່າພຣະອົງຈະລົງໂທດພວກເຂົາອີກຕໍ່ໄປບໍ ຈຶ່ງໄດ້ທວງຖາມຄຳຫມັ້ນສັນຍາຂອງພຣະອົງ. ພວກເຂົາຈຳເປັນຕ້ອງໄວ້ວາງໃຈໃນຄຳຫມັ້ນສັນຍາຂອງພຣະອົງ.

ພວກເຮົາກໍເຊັ່ນດຽວກັນໃນສມັຍປະຈຸບັນນີ້. ພວກເຮົາບໍ່ຮູ້ວ່າອະນາຄົດຈະເປັນຢ່າງໃດ ເຖິງແມ່ນວ່າພວກເຮົາຄິດວ່າພວກເຮົາຮູ້. ພວກເຮົາຈຳເປັນຕ້ອງໄວ້ວາງໃຈໃນຄຳຫມັ້ນສັນຍາຂອງພຣະຜູ້ເປັນເຈົ້າຜູ້ຊົງມີຄວາມຮັກແລະເປັນຫ່ວງພວກເຮົາຢູ່ຕລອດມາ. ເມື່ອພວກເຮົາບໍ່ຮູ້ເຫດການລ່ວງຫນ້າຂອງອະນາຄົດ ພວກເຮົາຈະຕ້ອງຮຽນຮູ້ຈັກການໄວ້ວາງໃຈເຊື່ອໃນພຣະອົງຜູ້ຊົງເປັນພຣະຜູ້ເປັນເຈົ້າໃນອະດີດ, ປັດຈຸບັນ, ແລະອະນາຄົດຕະການ.

ຄຳຖາມ

1. ເປັນຫຍັງພຣະຜູ້ເປັນເຈົ້າຕ້ອງການໃຫ້ໄພ່ພົນຂອງພຣະອົງອ້ອນວອນ?
2. ເມື່ອພວກເຮົາລໍຄອຍຕາມເວລາຂອງພຣະຜູ້ເປັນເຈົ້າ ຄວາມສັມພັນກັບພຣະອົງຈະເປັນຢ່າງໃດ?
3. ມີຄຳອ້ອນວອນອັນໃດທີ່ທ່ານຂໍໄປແລະທ່ານຍັງລໍຄອຍຄຳຕອບຢູ່?

# ບົດຮຽນທີ 6
# ແສງສວ່າງໄປເຖິງປະຊາຊາດ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u> ເອຊາຢາ 42:1-4; 49:1-6; 50:4-11
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ເອຊາຢາ 42:1-9; 49:1-6; 50:4-11
<u>ຈຸດສຳຄັນຂອງບົດຮຽນນີ້:</u> ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າໄດ້ທຳຕາມພຣະບັນຊາ ຄືໄດ້ນຳຄວາມຍຸດຕິທັມ ແລະຄວາມລອດພົ້ນມາສູ່ໂລກມະນຸດຊຶ່ງໄດ້ສຳເຣັດຢ່າງສົມບູນໃນພຣະເຢຊູ.
<u>ຄຳຖາມເພື່ອການສຳຫລວດ:</u> ພວກເຮົາຈະເພິ່ງຜູ້ໃດຫລືສິ່ງໃດທີ່ຈະມາຊ່ອຍມວນມະນຸດໃນໂລກຂອງເຮົານີ້ໄດ້?
<u>ຈຸດປະສົງຂອງບົດຮຽນນີ້:</u> ອະທິບາຍໃຫ້ເຫັນວ່າພຣະເຢຊູຊົງສຳເຣັດຕາມພຣະບັນຊາໂດຍການເປັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ ແລະຊີ້ໃຫ້ເຫັນຄວາມຈິງເພື່ອການມອບໝາຍທີ່ຂ້າພະເຈົ້າໄດ້ຮັບແລະຄຣິສຕະຈັກທີ່ຂ້າພະເຈົ້າສັງກັດຢູ່ດ້ວຍ.

## ບົດຮຽນ

<u>ຄຳນຳ</u>

ພຣະເຢຊູຊົງສຳເຣັດຕາມຄຳທຳນວາຍຈາກ "ເພງຂອງຜູ້ຮັບໃຊ້" ແລະບໍ່ມີມະນຸດຄົນໃດ ຫລືກຸ່ມໃດທີ່ຈະມາທຽມແອກໄດ້. ໃນຖານະເປັນຜູ້ຮັບໃຊ້ ພຣະອົງໄດ້ນຳຄວາມຍຸດຕິທັມ ແລະຄວາມຫວັງມາສູ່ຜູ້ທີ່ມີຄວາມເຊື່ອໝົດທຸກຄົນ.

<u>ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ</u> (42:1-4)

ໃນພຣະຄັມພີພາສາເຮັບເຣີໃຊ້ຄຳວ່າ "ນີ້ແມ່ນ" ເປັນການປະກາດເຖິງຄວາມສຳຄັນຂອງນິມິດຈາກພຣະຜູ້ເປັນເຈົ້າ. ຜູ້ປະກາດພຣະທັມ ເອຊາຢາໄດ້ເຫັນຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າ (42:1) ແລະລັກສະນະຂອງລາວ (42:2-4).

ໃຜເປັນ "ຜູ້ຮັບໃຊ້ " ຄົນນີ້? ເປັນຄຳຖາມທີ່ຕອບຍາກ ບໍ່ວ່າຄົນສາມັນທັມດາຫລືວ່າສາສນາຈານ. ມີຢູ່ດ້ວຍກັນສາມຄວາມເຫັນທີ່ບົ່ງບອກເຖິງເອກລັກຂອງ "ຜູ້ຮັບໃຊ້ " ຄົນນີ້.

ຄວາມເຫັນທີນຶ່ງ ພວກທີ່ຖືສາສນາຢິວ ເຫັນວ່າ "ຜູ້ຮັບໃຊ້ " ຄົນນີ້ເປັນເຫມືອນຊາດອິສຣາເອນ. ໃນພຣະທັມ ເອຊາຢາ41:8-9 ໄດ້ບັນທຶກໄວ້ຢ່າງແຈ່ມແຈ້ງວ່າ "ຜູ້ຮັບໃຊ້ " ແມ່ນຊາດອິສຣາເອນ. ເຖິງຢ່າງໃດກໍດີ ເມື່ອເອຊາຢາກ່າວເຖິງນິມິດກ່ຽວກັບຜູ້ຮັບໃຊ້ໃນບົດເພງທີສີ່ຂອງຜູ້ຮັບໃຊ້ນັ້ນ ລາວໄດ້ກ່າວເຖິງຜູ້ຮັບໃຊ້ຜູ້ດຽວ ຄືກ່າວເຖິງຈຳນວນນ້ອຍ ບໍ່ແມ່ນຜູ້ຮັບໃຊ້ຫລາຍຄົນທີ່ກ່າວເຖິງຈຳນວນຫລາຍ. ລາວໃຊ້ສັພນາມໃນຈຳນວນນ້ອຍ ເຊັ່ນ "ເຮົາຈະໃຫ້<u>ລາວ</u> ເຕັມໄປດ້ວຍພຣະວິນຍານຂອງເຮົາ <u>ລາວ</u> ຈະນຳຄວາມຍຸດຕິທັມມາສູ່ທຸກຊົນຊາດ" (42:1). ເອຊາຢາໃຊ້ສັພນາມຈຳນວນນ້ອຍຕລອດໃນພຣະທັມນີ້.

ຄວາມເຫັນທີສອງ ບາງຄົນເຫັນວ່າແມ່ນ ໄຊຣັດ ກະສັດຂອງເປີເຊັຽ. ພຣະອົງຊົງພະນາມວ່າ ໄຊຣັດຜູ້ຍິ່ງໃຫຍ່. ພຣະອົງໄດ້ຍຶດຄອງປະເທດບາບີໂລນໃນປີ 539 ກ່ອນຄຣິສຕະສັກຣາດ ແລະໄດ້ປ່ອຍໃຫ້ຊາວຢິວເປັນອິສຣະຈາກອຳນາດຂອງບາບີໂລນ. ຊື່ຂອງພຣະອົງໄດ້ປາກົດໃນພຣະທັມ ເອຊາຢາ 44:28-45:1). ພຣະຜູ້ເປັນເຈົ້າໃຫ້ກະສັດໄຊຣັດເປັນ "ຜູ້ປົກຄອງ" ແລະພຣະອົງຖືກ "ເລືອກ" ຫລື "ຫົດສົງ". ພຣະອົງມີລັກສະນະບາງຢ່າງເຫມືອນກັບຜູ້ຮັບໃຊ້ ແຕ່ວ່າມີຫລາຍຕອນພຣະອົງບໍ່ເຂົ້າກັບລັກສະນະຂອງບຸກຄົນໃນພຣະຄັມພີເຫມືອນດັ່ງພຣະເຢຊູ. ກະສັດໄຊຣັດໄດ້ຊ່ອຍກູ້ເອົາ

ຊາດອິສຣາເອນແຕ່ວ່າ ພຣະອົງບໍ່ແມ່ນພຣະເມຊີອາທີ່ສັນຍາໄວ້ຕາມຜູ້ປະກາດພຣະທັມ ເອຊາຢາໄດ້ເຫັນໃນນິມິດເພື່ອຈະນໍາຄວາມຫວັງມາສູ່ຊົນຊາດອິສຣາເອນ.

ຄວາມເຫັນທີສາມ ຄຣິສຕຽນເຫັນວ່າບົດເພງຂອງຜູ້ຮັບໃຊ້ໄດ້ທໍານວາຍກ່ຽວກັບພຣະເຢຊູ. ມີແຕ່ພຣະຄຣິດເທົ່ານັ້ນທີ່ເຫັນໄດ້ແຈ່ມແຈ້ງວ່າເປັນຜູ້ສໍາເຣັດຕາມລັກສະນະທັງຫມົດທີ່ກ່າວໄວ້. ບໍ່ມີຜູ້ໃດຫລືຄົນກຸ່ມໃດ (ເຊັ່ນຕົວຢ່າງຊາດອິສຣາເອນ) ກ້າອ້າງວ່າຕົນເປັນຜູ້ທີ່ກ່າວໄວ້ໃນຄໍາທໍານວາຍ.

ພຣະຜູ້ເປັນເຈົ້າຊົງມີຄວາມຍິນດີກັບຜູ້ຮັບໃຊ້ຂອງພຣະອົງ. ພຣະອົງຊົງພໍພຣະທັຍກັບລັກສະນະແລະພາຣະກິດຂອງຜູ້ທີ່ພຣະອົງ " ຊົງເລືອກ " (42:1) ເຫມືອນກັບມະນຸດມີຄວາມຍິນດີກັບລູກຂອງພວກເຂົາ. ເພາະວ່າພຣະເມຊີອາມີຄວາມໃກ້ສິດກັບພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຊົງອູ້ມຊູພຣະອົງໄວ້. ອໍານາດແລະຄວາມສາມາດຂອງຜູ້ຮັບໃຊ້ແມ່ນມາຈາກພຣະວິນຍານຂອງພຣະຜູ້ເປັນເຈົ້າ.

ໃຫ້ສັງເກດລັກສະນະຂອງຜູ້ຮັບໃຊ້ທີ່ໄດ້ບັນລະຍາຍໃນພຣະທັມເອຊາຢາດັ່ງນີ້:

<u>ອັນທີນຶ່ງ, ຜູ້ຮັບໃຊ້ທໍາພາຣະກິດຢູ່ງຽບໆແລະບໍ່ຕ້ອງຮ້ອງປ່າວທົ່ວທົ່ວເມືອງ (42:2)</u>. ພຣະຄັມພີບາງສະບັບໃຊ້ຄໍາວ່າ "ຈະບໍ່ຮ້ອງ ຫລືເປັ່ງສຽງອອກໄປ ຫລືຈະບໍ່ປ່າວປະກາດຕາມຖນົນຫົນທາງ". ສັງເກດວ່າ <u>ຈະບໍ່</u> ສາມເທື່ອ ລາວໄດ້ກະທໍາສິ່ງກົງກັນຂ້າມກັບຜູ້ນໍາຝ່າຍໂລກທີ່ອວດອົ່ງທະນົງຕົວ. ຕາມປົກກະຕິແລ້ວ ຜູ້ໄດ້ຮັບຊັຍຊະນະຈະຕ້ອງບັງຄັບໃຫ້ຄົນອື່ນຮັບເອົາແນວທາງຂອງຕົນດ້ວຍການໂຄສະນາປ່າວປະກາດແຫ່ໄປທົ່ວບ້ານທົ່ວເມືອງ. ແຕ່ກົງກັນຂ້າມພຣະເມຊີອາຂອງພຣະຜູ້ເປັນເຈົ້າດໍາເນີນພາຣະກິດຢູ່ງຽບໆແລະບໍ່ໄດ້ໂຄສນໃຫ້ຄົນເຫັນ.

ແນ່ນອນ ຜູ້ທີ່ໄດ້ຟັງຜູ້ປະກາດພຣະທັມ ເອຊາຢາ ເມື່ອໄດ້ຍິນແລ້ວຈະກ່າວວ່າ ບໍ່ເປັນຕາຫນ້າເຊື່ອໃນຄໍາເວົ້າດັ່ງກ່າວ. ພຣະເມຊີອາຈະຊັກຊວນໃຫ້ຄົນເຫັນຄວາມສາມາດຂອງພຣະອົງໄດ້ຢ່າງໃດ ຖ້າບໍ່ໃຊ້ຄໍາເວົ້າທີ່ເຕັມໄປດ້ວຍພະລັງອໍານາດເພື່ອເອົາຊະນະຄົນທັງຫລາຍ? ພວກເຮົາຮູ້ດີວ່າ ພຣະເຢຊູຊົງສໍາເຣັດຕາມຄໍາທໍານວາຍຂອງເອຊາຢາໃນຂໍ້ຄວາມດັ່ງກ່າວນີ້. ບໍຣິເວັນການຮັບໃຊ້ແລະປ່າວປະກາດຂອງພຣະເຢຊູມີພຽງປະມານແປດສິບກິໂລແມັດຊື່ງຢູ່ໃນມຸມອັນນ້ອຍໆຂອງໂລກ. ແຕ່ຂ່າວປະເສີດຂອງພຣະອົງໄດ້ແຜ່ອອກໄປສູ່ໂລກພາຍນອກໃນສັດຕະວັດທີນຶ່ງ.

<u>ອັນທີສອງ, ຜູ້ຮັບໃຊ້ຖືກພິຈາຣະນາວ່າເປັນຄົນອ່ອນແອ (42:3)</u>. ສອງຄໍາທີ່ວ່າ "ບໍ່" ໄດ້ບັນລະຍາຍເຖິງລັກສະນະຂອງພຣະເມຊີອາ. " ຕົ້ນໄມ້ອໍ້ທີ່ບອມແລ້ວເພິ່ນບໍ່ເຮັດໃຫ້ຂາດ" ມີຄວາມຫມາຍວ່າ ພຣະອົງຈະບໍ່ຊໍ້າຜູ້ທີ່ບອມຊໍ້າແລ້ວ. "ຕະກຽງໃກ້ຈະມອດແລ້ວ" ມີຄວາມຫມາຍວ່າ ຈວນຈະຕາຍແລ້ວ. ແສງຈວນຈະມອດ ມີພຽງແຕ່ແສງອັນນ້ອຍທີ່ຈະເກີດເປັນຄວັນ ແຕ່ພຣະເມຊີອາຈະບໍ່ມອດ. ພຣະອົງຈະບໍ່ເອົາປຽບເອົາລັດຜູ້ທີ່ຖືກຫນີບເຕັງ.

<u>ອັນທີສາມ, ຜູ້ຮັບໃຊ້ຍຶດຫມັ້ນໃນຄວາມຕັ້ງໃຈຂອງລາວ (42:4)</u>. ສອງຄໍາທີ່ວ່າ "ບໍ່" ອີກໄດ້ຊີ້ໃຫ້ເຫັນວ່າພາຣະກິດຂອງຜູ້ຮັບໃຊ້ນັ້ນເປັນພາຣະກິດທີ່ຍາກຫລາຍ. ຜູ້ປະກາດພຣະທັມໄດ້ສເນີໃຫ້ເຫັນວ່າພະລັງຂອງພຣະເມຊີອາຈະຍືນຄົງຢູ່ຕໍ່ສູ້ກັບອຸປສັກຕ່າງໆ. ໃນທີ່ສຸດ ຂໍ້ທີ 4 ໄດ້ໃຫ້ຄວາມຫມັ້ນໃຈແກ່ຜູ້ຟັງວ່າຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຈະດໍາເນີນພາຣະກິດຂອງລາວຈົນເຖິງທີ່ສໍາເຣັດຢ່າງແນ່ນອນ.

ແປກໃຈບໍ່ ຕາມຂໍ້ຄວາມຕ່າງໆທີ່ກ່າວມານີ້ ມີແຕ່ພຣະເຢຊູເທົ່ານັ້ນຈະສໍາເຣັດໄດ້ຕາມຄໍາທໍານວາຍຂອງຜູ້ປະກາດພຣະທັມເອຊາຢາ?

ຜູ້ຮັບໃຊ້ເປັນແສງສວ່າງໄປເຖິງປະຊາຊາດ (49:1-6)
ບົດທີສອງຈາກ "ເພງຂອງຜູ້ຮັບໃຊ້" ຜູ້ຮັບໃຊ້ໄດ້ກ່າວເປັນເພງ. ເພງບົດນີ້ເປັນຄຳພະຍານຂອງພຣະເມຊີອາທີ່ກ່ຽວກັບຊີວິດຂອງພຣະອົງເອງ. ພຣະອົງໄດ້ຊົງຮັບເອົາແລະເປັນພຣະປະສົງຂອງພຣະອົງ ຕາມທີ່ໄດ້ຖືກຊົງຮ້ອງ ຈາກອົງພຣະຜູ້ເປັນເຈົ້າເພື່ອໃຫ້ມາເປັນພຣະເມຊີອາ. ເປັນເຫມືອນກັບຊີວິດຂອງ ເຢເຣມີຢາ (ເຢເຣມີຢາ 1:5) ແລະອັຄສາວົກໂປໂລ (ຄາລາເຕັຽ 1:15), ມີຄວາມຮູ້ສຶກວ່າການຊົງຮ້ອງໃຫ້ມາຮັບໃຊ້ໃນຂະນະທີ່ຍັງຢູ່ໃນຄັນມາດາຂອງພຣະອົງ (ເອຊາຢາ 49:1).

ຫລາຍໆວັກໃນພຣະທັມດັ່ງກ່າວໄດ້ເຈາະຈົງໃສ່ບຸກຄົນໃດຄົນນຶ່ງ. ໃນຂໍ້ທີນຶ່ງໄດ້ກ່າວວ່າ "ຢູ່ໃນທ້ອງແມ່" ຈຶ່ງເປັນການຍາກທີ່ຈະອ້າງອີງໃສ່ຄຳວ່າ ຊາດອິສຣາເອນໃຫ້ເປັນຜູ້ຮັບໃຊ້ໄດ້.

ໃນຂໍ້ທີ 3 ໄດ້ກ່າວວ່າ "ຊາດອິສຣາເອນຄືຜູ້ຮັບໃຊ້ຂອງເຮົາ" (49:3), ແຕ່ພວກເຮົາຈະຕ້ອງສຶກສາຫມົດທັງບົດຂອງພຣະທັມຕອນນີ້. ຖ້າຫາກວ່າອິສຣາເອນເປັນຜູ້ຮັບໃຊ້ກໍຖືກ. ຕາມຄວາມຈິງແລ້ວ ອິສຣາເອນໄດ້ໄຖ່ເອົາ "ຢາໂຄບ" ໃຫ້ກັບຄືນມາຫາພຣະຜູ້ເປັນເຈົ້າ. ໃນທົ່ວພຣະຄັມພີ "ອິສຣາເອນ" ແລະ "ຢາໂຄບ" ນັ້ນເປັນເອກກະລັກອັນດຽວກັນຈະອ້າງອີງໃສ່ຊົນຊາດຫລືບຸກຄົນກໍຕາມ.

ຕໍ່ມາ ໃນພຣະທັມຕອນນີ້ ຜູ້ຮັບໃຊ້ໄດ້ກ່າວເຖິງຄວາມສັມພັນລະຫວ່າງລາວກັບພຣະຜູ້ເປັນເຈົ້າ. ໃນຂໍ້ທີ 3 ພຣະຜູ້ເປັນເຈົ້າຊົງວ່າ "ເພາະເຈົ້ານີ້ແຫລະປະຊາຊົນທັງຫລາຍຈຶ່ງຈະຍົກຍໍສັລະເສີນເຮົາ" (49:3). ພຣະຜູ້ເປັນເຈົ້າຊົງສັນຍາວ່າພຣະອົງຈະສະແດງຄວາມຮຸ່ງເຮືອງຂອງພຣະອົງໃນຜູ້ຮັບໃຊ້, ພຣະເມຊີອາ. ອັຄສາວົກໂປໂລໄດ້ໃຊ້ຄຳເວົ້າທີ່ສະທ້ອນໃນຄຳເວົ້າຈາກເອຊາຢາ ເມື່ອລາວຂຽນໄປຫາຄຣິສຕະຈັກຂອງໂກໂລຊາຍດ້ວຍຂໍ້ຄວາມວ່າ "ເພາະວ່າພຣະບິດາຊົງພໍພຣະທັຍ ທີ່ຈະໃຫ້ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະບຸດຢ່າງເຕັມບໍຣິບູນ" (ໂກໂລຊາຍ 1:19).

ຂໍ້ຄວາມສຳຄັນຂອງ "ເພງຜູ້ຮັບໃຊ້" ແມ່ນເອຊາຢາ 49:6. ພຣະຜູ້ເປັນເຈົ້າຈະໃຫ້ພະລັງແກ່ພຣະເມຊີອາບໍ່ພຽງແຕ່ຈະທ້ອນໂຮມເອົາປະຊາຊາດອິສຣາເອນເທົ່ານັ້ນ. ພຣະອົງມີແຜນການອັນໃຫຍ່ໄປກວ່ານັ້ນ. ເຖິງຢ່າງໃດກໍຕາມຢ່າໄດ້ໃຫ້ພວກເຮົາເບິ່ງຂ້າມອິສຣາເອນໄປ. ອິສຣາເອນບໍ່ພຽງແຕ່ເສັຽຊັຍໃນສນາມຮົບເທົ່ານັ້ນ, ແຕ່ປະຊາຊົນໄດ້ແຕກກະຈັດກະຈາຍໄປທົ່ວທຸກທົ່ນທຸກແຫ່ງ. ຊາວເຮັບເຣີຫລາຍຄົນໄດ້ແຕ່ງງານກັບຄົນຕ່າງຊາດແລະປະຕິບັດຕາມຮີດຄອງປະເພນີຂອງຄົນຊາດອື່ນ. ຮີດຄອງປະເພນີຂອງເຮັບເຣີໄດ້ເສື່ອມສູນໄປ. ອານາຈັກພາກເຫນືອໄດ້ເສັຽເອກກະລັກການເປັນຊາດອິສຣາເອນໄປແລ້ວ ແລະຊົນຊາດຂອງເຂົາໄດ້ເປັນຄົນຕ່າງດ້າວທ້າວຕ່າງແດນຈາກພຣະຜູ້ເປັນເຈົ້າ. ໃນຂະນະດຽວກັນປະຊາຊົນຈາກອານາຈັກພາກໃຕ້ຖືກນຳໄປເປັນຊະເລີຍຢູ່ໃນປະເທດບາບີໂລນ. ພຣະຄຣິດຈະທ້ອນໂຮມອິສຣາເອນໄດ້ຢ່າງໃດ?

ໃຫ້ຈຳໄວ້ວ່າພາຣະກິດຂອງພຣະເມຊີອານັ້ນ ແມ່ນເພື່ອມະນຸດທຸກໆຄົນ ບໍ່ແມ່ນເພື່ອແຕ່ຊາວຢິວເທົ່ານັ້ນ. ຜູ້ຮັບໃຊ້ຈະຕ້ອງ "ເປັນແຈ້ງແກ່ຊົນຊາດທັງຫລາຍ" (49:6). ພຣະອົງຈະຕ້ອງນຳພວກເຂົາອອກມາຈາກຄວາມມືດມົວໃນສາສນາຕ່າງໆ ເພື່ອໃຫ້ມາພົບກັບແສງສວ່າງຂອງພຣະເຈົ້າ. ພຣະອົງຈະນຳພວກເຂົາອອກຈາກຄວາມມືດມົວໃນປຣັຊຍາຕ່າງເພື່ອໃຫ້ພວກເຂົາພົບກັບຄວາມຈິງ. ຄວາມລອດພົ້ນທີ່ເອຊາຢາໄດ້ປະກາດໄປນັ້ນແມ່ນສຳລັບມະນຸດທຸກໆຄົນ.

ອິສຣາເອນໄດ້ເບິ່ງຂ້າມໃນຄວາມຈິງ. ແນ່ນອນ ຄວາມຈິງໄດ້ກາຍເປັນ "ສິ່ງສະດຸດ" ສຳລັບຊາວຢິວ. ເພາະວ່າຊາວອິສຣາເອນໄດ້ປະຕິເສດຂ່າວປະເສີດໂດຍທາງຄວາມເຊື່ອສຳລັບທຸກໆຄົນ ພວກເຂົາມີໃຈແຂງກະດ້າງໄປພໍປານນຶ່ງ

ຈົນພຣະຜູ້ເປັນເຈົ້າໄດ້ນຳຄົນຕ່າງຊາດມາສູ່ຄວາມລອດພົ້ນໂດຍທາງຄວາມເຊື່ອ (ໂຣມ 11:25).

ຜູ້ຮັບໃຊ້ເປັນຜູ້ເຊື່ອຟັງ (50:4-11)
ໃນພຣະທັມຕອນນີ້ ຜູ້ຮັບໃຊ້ຈະຕ້ອງປະຕິບັດຕາມການມອບໝາຍທີ່ພຣະຜູ້ເປັນເຈົ້າໄດ້ມອບໃຫ້ແກ່ລາວ. ພຣະທັມເອຊາຢາ ບົດທີ 40-66 ເປັນພຣະທັມທີ່ໃຫ້ຄວາມຫວັງ ແລະຄວາມໝັ້ນໃຈຫລາຍຂຶ້ນເມື່ອສົມທຽບກັບບົດທີ 1-39. ຜູ້ຮັບໃຊ້ຂອງພຣະຜູ້ເປັນເຈົ້າຈະໄດ້ຮັບທົນຄວາມທຸກ ແຕ່ລາວຈະເປັນຜູ້ໃຫ້ຄວາມເລົ້າໂລມໃຈແກ່ຜູ້ທີ່ໄດ້ຮັບຄວາມທົນທຸກດ້ວຍກັນ. ແຕ່ເບິ່ງຄືກັບວ່າເປັນໄປບໍ່ໄດ້ ແຕ່ນັ້ນເປັນຄວາມຈິງ. ຜູ້ທີ່ຖືກຂົ່ມເຫັງແລະໄດ້ຮັບຄວາມເຈັບປວດຈະໄປໃຫ້ຄວາມເລົ້າໂລມໃຈ ແລະຊ່ວຍເຫລືອອິສຣາເອນທີ່ກຳລັງໄດ້ຮັບຄວາມທົນທຸກຈາກການເປັນຊະເລີຍໃນປະເທດບາບີໂລນໄດ້ຢ່າງໃດ?

ຜູ້ປະກາດພຣະທັມ ເອຊາຢາໄດ້ທຳນວາຍໄວ້ວ່າ ພຣະຜູ້ເປັນເຈົ້າຈະປະທານພະລັງທຸກຢ່າງໃຫ້ຜູ້ຮັບໃຊ້ຂອງພຣະອົງເພື່ອລາວຈະມີພະລັງໄປສັ່ງສອນ, ໃຫ້ຄຳເລົ້າໂລມແລະຊ່ວຍເຫລືອອິສຣາເອນ. ໃນຂະນະດຽວກັນພຣະຜູ້ເປັນເຈົ້າຈະປະທານພະລັງໃຫ້ຜູ້ຮັບໃຊ້ຂອງພຣະອົງ ເພື່ອລາວຈະໄດ້ຢືນຢັດຕໍ່ຄວາມກໍ່ກວນຈາກສັດຕູຂອງລາວ.

ໃນບົດທີ 50:4 ຜູ້ຮັບໃຊ້ຊຶ່ງເປັນພຣະເມຊີອາເປັນຜູ້ໄດ້ຮັບການສັ່ງສອນແລະເປັນຜູ້ໃຫ້ຄຳເລົ້າໂລມອີກດ້ວຍ. ພຣະອົງຊົງເປັນຜູ້ໃຫ້ຄວາມຊ່ວຍເຫລືອແກ່ຜູ້ທີ່ອ່ອນແຮງແລະຫາບພາຣະໜັກ. ຜູ້ຮັບໃຊ້ຊຶ່ງເປັນພຣະເມຊີອາຈະຮັບຟັງຄຳຊີ້ນຳຂອງພຣະຜູ້ເປັນເຈົ້າ. ພຣະອົງຈະນຳທຸກສິ່ງທີ່ຮັບມາຈາກພຣະຜູ້ເປັນເຈົ້າໄປຊີ້ແນະອິສຣາເອນໃນການສູ້ທົນຕໍ່ຄວາມທຸກຍາກທີ່ຖືກກົດຂີ່ຂົ່ມເຫງ.

ຕາມຄວາມເຂົ້າໃຈແລ້ວ ເປັນພາຣະຂອງຜູ້ຮັບໃຊ້ໃນທຸກຍຸກທຸກສມັຍ. ພວກເຮົາຈະສັງເກດເຫັນໄດ້ໃນພຣະຄຣິດພຣະອົງຊົງປະທານຄວາມຫວັງ, ການຊ່ວຍເຫລືອ, ແລະການຊີ້ແນະນຳ ເພື່ອໃຫ້ພວກເຮົາສູ້ທົນຕໍ່ກິຈການຂອງມານແລະການຫລອກລໍ້ນາງປະການນັ້ນ. ພຣະເຢຊູຊົງສະດັບຟັງພຣະຜູ້ເປັນເຈົ້າຢູ່ຕລອດເວລາ. ພຣະອົງຊົງຊີ້ແນະນຳພວກເຮົາໃຫ້ໄດ້ຮັບຊັຍຊະນະໃນທ້າມກາງຄວາມອ່ອນເພັຽຂອງພວກເຮົາ.

ພຣະເມຊີອາຊົງເຊື່ອຟັງພຣະຜູ້ເປັນເຈົ້າໃນຂະນະທີ່ພຣະອົງຖືກກົດຂີ່ຂົ່ມເຫງຈາກຄົນອື່ນ (50:6-9). ດ້ວຍເຫດອັນໃດອັນນຶ່ງ ຊາວອິສຣາເອນເບິ່ງຂ້າມຄຳທຳນວາຍກ່ຽວກັບພຣະເມຊີອາທີ່<u>ຖືກຂົ່ມເຫງ</u>. ແມ້ແຕ່ກະທັ້ງ ສາວົກຂອງ ພຣະເຢຊູກໍຍັງບໍ່ສາມາດຈະຮັບຮູ້ວ່າພຣະເມຊີອາແທ້ຈະຕ້ອງຖືກຂົ່ມເຫັງ ແລະໄດ້ຮັບຄວາມທົນທຸກທໍຣະມານ (ໃຫ້ອ່ານມາຣະໂກ 8:31-33).

ພຣະເຢຊູໄດ້ສຳເຣັດຕາມຄຳທຳນວາຍຢ່າງສົມບູນ. ດ້ວຍການເຊື່ອຟັງ ຜູ້ຮັບໃຊ້ຊົງບໍຣິສຸດໃນຂໍ້ກ່າວຫາ. ພຣະອົງມີຄວາມໝັ້ນໃຈ. " ຂ້ອຍຫລໍ່ຫລອມຕົນເອງຂຶ້ນ ເພື່ອທົນທານຕໍ່ເຂົາ " (50:7). ການຕັດສິນໃຈຂອງພຣະອົງນັ້ນມາຈາກຄວາມໃກ້ຊິດທີ່ມີສາຍສັມພັນກັບພຣະຜູ້ເປັນເຈົ້າ. ເມື່ອຖືກທົດສອບພຣະອົງໄດ້ຮັບການຊ່ວຍເຫລືອຈາກພຣະຜູ້ເປັນເຈົ້າ.

ຂໍ້ທີ10 ເປັນຂໍ້ຄວາມສຳຄັນຄຳເວົ້າຂອງຜູ້ຮັບໃຊ້. ພຣະເມຊີອາໃຫ້ຄຳປຶກສາຊີ້ນຳແກ່ຜູ້ທີ່ເດີນໃນທ້າມກາງຄວາມມືດ. ຜູ້ທີ່ໄວ້ວາງໃຈເຊື່ອທຸກຄົນເຄີຍເດີນຢູ່ໃນຄວາມມືດ. ຖ້າຜູ້ໃດບໍ່ເຄີຍ ຜູ້ນັ້ນຈະໄດ້ຮັບປະສົບການດັ່ງກ່າວແນ່ນອນ ບໍ່ມື້ໃດກໍມື້ນຶ່ງ. ໃນຖານະເປັນຜູ້ທີ່ໄວ້ວາງໃຈເຊື່ອ ພວກເຮົາອາດຈະມີປະສົບການໃນຄວາມທຸກຍາກລຳບາກ ຊຶ່ງເປັນປະສົບການທີ່ບໍ່ມີໃຜຕ້ອງການ. ມັນອາດຈະເກີດຂຶ້ນໄດ້ ໃນການປົກຄອງ, ຄອບຄົວ, ເພື່ອນຝູງ, ຜູ້ທຳງານຮ່ວມກັນ, ຄົນ

ຂ້າງບ້ານ, ຄຣິສຕະຈັກ, ແລະບ່ອນອື່ນໆກໍໄດ້.

ບໍ່ວ່າຄວາມທຸກຍາກລຳບາກຈະມີຢູ່ໃນກໍຣະນີໃດກໍຕາມ ຜູ້ຮັບໃຊ້ຊຶ່ງເປັນພຣະເມຊີອາໄດ້ໜູນໃຈຜູ້ທີ່ມີຄວາມເຊື່ອໃຫ້ຊອກຫາຄວາມເລົ້າໂລມແລະພະລັງຈາກພຣະຜູ້ເປັນເຈົ້າ. ພຣະຄຣິດຊົງເປັນແບບຢ່າງໃຫ້ພວກເຮົາ. ເຖິງແມ່ນວ່າ ຜູ້ຮັບໃຊ້ທີ່ຖືກຂົ່ມເຫັງ ຫລືໄດ້ຮັບຄວາມທໍຣະມານ ຖືກເຂົາກ່າວຫາ ແລະຖືກຖົ່ມນໍ້າລາຍໃສ່ ພຣະອົງກໍຊົງສັດຊື່ຢືນຢັດຢູ່ດ້ວຍພະລັງທີ່ໄດ້ຮັບມາຈາກອົງພຣະຜູ້ເປັນເຈົ້າ.

<u>ຄຳຖາມ</u>

1. ທ່ານຄິດວ່າເອຊາຢາຜູ້ປະກາດພຣະທັມເອງ ເຂົ້າໃຈໃນພຣະທັມກ່ຽວກັບຜູ້ຮັບໃຊ້ທີ່ໄດ້ຮັບຄວາມທົນທຸກທໍຣະມານຫລາຍປານໃດ?
2. ທ່ານມີເຫດຜົນອັນໃດທີ່ບໍ່ຮັບຮູ້ວ່າ ຊາດອິສຣາເອນ ຫລືກະສັດໄຊຣັດ ຜູ້ຍິ່ງໃຫຍ່ເປັນ "ຜູ້ຮັບໃຊ້ທີ່ໄດ້ຮັບຄວາມທົນທຸກທໍຣະມານ?
3. ທ່ານຄິດວ່າມີທາງໃດແດ່ ທີ່ພຣະເຢຊູ, ພຣະເມຊີອາ ຊົງນຳຄວາມຍຸດຕິທັມແລະຄວາມລອດພົ້ນມາສູ່ໂລກມະນຸດ?
4. ທ່ານເຄີຍຖືກຂົ່ມເຫັງຍ້ອນຄວາມເຊື່ອໃນພຣະຄຣິດບໍ່? ທ່ານຮູ້ສຶກວ່າພຣະຜູ້ເປັນເຈົ້າຊົງມີການພົວພັນກັບທ່ານຢ່າງໃດ?
5. ທ່ານຄິດວ່າ ຄຣິສຕຽນທຸກຄົນໄດ້ຮັບການຊົງເອີ້ນຈາກພຣະຜູ້ເປັນເຈົ້າບໍ? ເປັນຫຍັງທ່ານຈຶ່ງຄິດຢ່າງນັ້ນ?

# ບົດຮຽນທີ 7
# ຖືກປົ່ມປົວໃຫ້ດີຍ້ອນການຕີບຕີທີ່ທ່ານຮັບເອົາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເອຊາຢາ 53:1-12
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ເອຊາຢາ 52:13-- 53:12
ຈຸດສຳຄັນຂອງບົດຮຽນນີ້: ພຣະເຈົ້າຊົງປະທານຄວາມລອດພົ້ນແກ່ມະນຸດຜ່ານພຣະເຢຊູຄຣິດຜູ້ຮັບໃຊ້ຜູ້ທີ່ໄດ້ທົນທຸກຕໍ່ຄວາມເຈັບປວດນາໆຊະນິດ.
ຄຳຖາມເພື່ອການສຳຫລວດ: ພຣະເຈົ້າຊົງກະທຳສິ່ງທີ່ກົງກັນຂ້າມກັບຄວາມເຂົ້າໃຈຂອງມະນຸດຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຕອບຮັບພຣະຄຸນຂອງພຣະເຈົ້າໂດຍການເຊື່ອໃນພຣະຄຣິດຜູ້ຮັບໃຊ້ຜູ້ທີ່ໄດ້ທົນທຸກຕໍ່ຄວາມເຈັບປວດ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

## ຄຳນຳ

ພຣະເຢຊູຄຣິດຄືຜູ້ຮັບໃຊ້ຜູ້ທົນທຸກຕໍ່ຄວາມເຈັບປວດທີ່ພວກເຮົາໄດ້ພົບຢູ່ໃນພຣະທັມເອຊາຢາ 53. ພຣະອົງຊົງທົນທຸກຕໍ່ຄວາມເຈັບປວດແລະໄດ້ສິ້ນພຣະຊົນເພື່ອຄວາມຜິດບາບຂອງພວກເຮົາ. ພຣະອົງໄດ້ຊົງເປັນເຄື່ອງໄຖ່ອັນບໍຣິບູນສຳລັບຄວາມຜິດບາບແລະຄວາມທໍຣະຍົດທັງໝົດຂອງພວກເຮົາ. ໃນພຣະທັມເອຊາຢາ 52:13--53:13 ທີ່ຈະສຶກສາຕໍ່ໄປນີ້, ພຣະເຈົ້າໄດ້ຊົງເປີດເຜີຍລັກສະນະແລະວຽກງານຂອງ ພຣະເມສີອາ (ຜູ້ຮັບໃຊ້) ຜູ້ທີ່ພຣະອົງໄດ້ຊົງສັນຍາໄວ້.

### ເປັນເຣື່ອງທີ່ເຫລືອເຊື່ອ (53:1)

ພຣະທັມຂອງພຣະເຈົ້າສຳລັບຊົນຊາດອິສຣາເອັນໃນເອຊາຢາ 53 ເປັນເຣື່ອງທີ່ໜ້າເຫລືອເຊື່ອ. ຄົນທັງຫລາຍໃນສມັຍນັ້ນຄິດບໍ່ເຖິງວ່າພຣະຜູ້ໂຜດຂອງເຂົາເຈົ້າຈະລົງມາໃນສະພາບຂອງຜູ້ຮັບໃຊ້. ທຸກຄົນຄິດວ່າພຣະຜູ້ໂຜດຈະເປັນກະສັດຜູ້ຍິ່ງໃຫຍ່. ຫລາຍຄົນພາກັນເຍາະເຍີ້ຍຜູ້ປະກາດພຣະທັມເອຊາຢາ. ເອຊາຢາຂຽນຄວາມຮູ້ສຶກຂອງທ່ານໃນຕອນນີ້ວ່າ "ຜູ້ໃດແດ່ໄດ້ເຊື່ອ... ເຣື່ອງທີ່ເຮົາລາຍງານດຽວນີ້?" ຄຳຕອບໃນຕອນນີ້ກໍຄືວ່າ: ບໍ່ມີໃຜຍອມເຊື່ອ!
ນັບວ່າເປັນເຣື່ອງທີ່ໜ້າເສົ້າສລົດໃຈທີ່ປະຊາຊົນທັງຫລາຍບໍ່ຍອມເຊື່ອ ແລະເມີນເສີຍຕໍ່ພຣະທັມທີ່ມາຈາກພຣະເຈົ້າ. ໃນສມັຍປັດຈຸບັນນີ້ ພວກເຮົາກໍໄດ້ພົບເຫັນວ່າມີຄົນຈຳນວນຫລວງຫລາຍທີ່ເມີນເສີຍຫລືບໍ່ຍອມເຊື່ອເຣື່ອງຂ່າວປະເສີດຂອງພຣະເຢຊູຄຣິດ. ພຣະເຈົ້າໄດ້ເປີດເຜີຍກັບຊາວອິສຣາເອັນເຣື່ອງແຜນການໄຖ່ຂອງພຣະອົງສຳລັບພວກເຂົາແລະຄົນທຸກໆຊາດ. ແຕ່ໄພ່ພົນຂອງພຣະເຈົ້າໄດ້ປະຕິເສດແຜນການນັ້ນ.

## <u>ເປັນຜູ້ຮັບໃຊ້ທີ່ເຫລືອເຊື່ອ (53:2-3)</u>

ຜູ້ຮັບໃຊ້ທີ່ພຣະເຈົ້າໄດ້ສົ່ງມາເພື່ອຈະໂຜດອິສຣາເອັນບໍ່ມີລັກສນະທີ່ທຸກຄົນສແວງຫາ. ຊາວອິສຣາເອັນຊອກຫາພຣະຜູ້ໂຜດທີ່ມີຮູບຫ່າງດີ, ມີຄຸນວຸທິເຣື່ອງການເປັນຜູ້ນຳ, ມີຄວາມສລຽວສລາດ, ແລະເປັນແມ່ທັບຜູ້ຊ່ຽວຊານ. ແຕ່ກົງກັນຂ້າມ, ເອຊາຢາໄດ້ສເນີແນະຜູ້ຮັບໃຊ້ທີ່ໂຊກຮ້າຍ, ໝົດຫວັງ, ແລະມີໜ້າເສົ້າ. "ຜູ້ຮັບໃຊ້ບໍ່ມີທ່າທາງຜ່າເຜີຍແລະສງ່າງາມໃດໆ... ໃນຕົວທ່ານນັ້ນບໍ່ມີຫຍັງພໍຈະດູດດຶງຈິດໃຈ" (ຂໍ້ 2).

ດັ່ງນັ້ນ, ຜູ້ຮັບໃຊ້ຜູ້ທີ່ຈະມາໂຜດມະນຸດກໍເລີຍຖືກທຸກຄົນປະຕິເສດ, ຖືກທຸກຄົນໝິ່ນປມາດ ແລະປະຖິ້ມ. ຄວາມທຸກໂສກໄດ້ກາຍເປັນເພື່ອນສນິດຂອງທ່ານ. ຊີວິດຂອງພຣະເຢຊູຄຣິດໄດ້ເປັນໄປຕາມຄຳທຳນວາຍຂອງເອຊາຢາໃນຕອນນີ້ທຸກໆຢ່າງ. ບໍ່ມີບັນພະບຸຣຸດ ຫລືຜູ້ປະກາດພຣະທັມຜູ້ໃດໃນປະວັດສາດຂອງຊາວອິສຣາເອັນທີ່ມີລັກສະນະທັງໝົດທີ່ຜູ້ປະກາດພຣະທັມໄດ້ຂຽນໄວ້ ນອກຈາກອົງພຣະເຢຊູຄຣິດ. ພຣະເຢຊູເປັນຜູ້ເຮັດໃຫ້ພຣະທັມໄດ້ສຳເຣັດ.

## <u>ຄວາມທົນທຸກອັນເຫລືອເຊື່ອຂອງຜູ້ຮັບໃຊ້ (53:4-6)</u>

ເວລາພວກເຮົາອ່ານພຣະທັມຂໍ້ 4 ແລະ 5, ພວກເຮົາຈະເຫັນວ່າພຣະເຈົ້າໄດ້ຖອກເທ ຄວາມທຸກ, ຄວາມເຈັບປວດ, ແລະຄວາມລຳບາກຕ່າງໆໃສ່ຜູ້ຮັບໃຊ້. ທ່ານອາດຈະຖາມຕົວເອງວ່າ, ມີໃຜແດ່ທີ່ຈະສາມາດຮັບເອົາຄວາມເຈັບປວດແລະຄວາມທຸກທໍຣະມານທັງໝົດເລົ່ານັ້ນໄດ້? ທີ່ຈິງແລ້ວບໍ່ມີມະນຸດຄົນໃດທີ່ຈະສາມາດຮັບໄດ້. ສະນັ້ນພຣະເຈົ້າຈຶ່ງໄດ້ລົງມາເກີດເປັນມະນຸດເພື່ອຈະເປັນເຄື່ອງຖວາຍບູຊາສຳລັບຄວາມຜິດບາບຂອງມະນຸດ.

ເອຊາຢາຂຽນວ່າ, ພຣະເຈົ້າໄດ້ເອົາ "ຄວາມທຸກທີ່ເປັນຂອງພວກເຮົາ" ແລະ "ຄວາມເຈັບປວດທີ່ພວກເຮົາສົມຄວນໄດ້ຮັບ"ຖິ້ມໃສ່ຜູ້ຮັບໃຊ້ຂອງພຣະອົງໝົດສິ້ນ. ບາງຄົນອາດຈະເວົ້າວ່າ, "ພຣະເຈົ້າຈະບໍ່ຊົງເຮັດໃຫ້ຜູ້ໃດຜູ້ນຶ່ງເຈັບປວດດອກ." ຄວາມຄິດນີ້ເປັນຄວາມຄິດຂອງຄົນໂງ່ແລະຜິດຕາມພຣະຄັມພີ. ໃນພຣະຄັມພີພວກເຮົາໄດ້ເຫັນພຣະເຈົ້າໄດ້ຊົງພິພາກສາແລະລົງໂທດທຸກຄົນທີ່ເຮັດຄວາມຜິດບາບ. ຢ່າລືມວ່າ ຄວາມຜິດບາບທຸກໆຢ່າງຈະຕ້ອງໄດ້ຮັບໂທດກັມແລະໂທດຂອງຄວາມບາບຄືຄວາມຕາຍ. ຜູ້ໃດຜູ້ນຶ່ງຈະຕ້ອງຕາຍເພື່ອຄວາມບາບນັ້ນ, ແຕ່ຈະຕ້ອງເປັນຜູ້ທີ່ບໍຣິສຸດ.

ພຣະທັມຂໍ້ 5 ບອກຢ່າງແຈ່ມແຈ້ງວ່າຜູ້ຮັບໃຊ້ໄດ້ຮັບເອົາຄວາມເຈັບປວດຕ່າງໆທີ່ເປັນຂອງພວກເຮົາ. ພຣະເຢຊູຄຣິດໄດ້ຕາຍເພື່ອຄວາມຜິດບາບຂອງມະນຸດທຸກໆຄົນແລະທຸກໆສມັຍ ແລະບໍ່ໄດ້ໝາຍຄວາມວ່າທຸກໆຄົນຈະໄດ້ຮັບຄວາມລອດພົ້ນ. ຜູ້ທີ່ເຊື່ອແລະຮັບເອົາພຣະຄຣິດເທົ່ານັ້ນຈະໄດ້ພົ້ນ. ຂ່າວປະເສີດເຣື່ອງຄວາມພົ້ນມີໄວ້ສຳລັບທຸກໆຄົນ. ພຣະເຢຊູໄດ້ຮັບໂທດແທນພວກແກະທີ່ໄດ້ເສັຽໄປທັງໝົດ (ຂໍ້ 6). ພວກເຮົາຈະຕ້ອງອອກໄປບອກຄົນທັງຫລາຍໃຫ້ຮູ້.

## <u>ການມິດງຽບແລະການຕາຍອັນເຫລືອເຊື່ອຂອງຜູ້ຮັບໃຊ້ (53:7-9)</u>

ຜູ້ຮັບໃຊ້ "ບໍ່ເຄີຍເອີ່ຍຈາແມ່ນແຕ່ຄຳດຽວ" ໃນຂະນະທີ່ທ່ານຖືກທາລຸນ. ທ່ານໄດ້ທຳຕົນເໝືອນດັ່ງລູກແກະທີ່ຖືກນຳໄປ ຂ້າ (ຂໍ້ 7). ຜູ້ຮັບໃຊ້ບໍ່ໄດ້ສະແດງຄວາມຢ້ານກົວຕໍ່ຄວາມຕາຍທີ່ຈະມາເຖິງທ່ານ ເພາະທ່ານໄດ້ຮູ້ເຖິງຊາຕາກັມຂອງ ຕົນ ແລະໄດ້ຮູ້ເຖິງພຣະປະສົງຂອງອົງພຣະຜູ້ເປັນເຈົ້າໃນທຸກຢ່າງທີ່ເກີດຂຶ້ນ. ຜູ້ຮັບໃຊ້ທ່ານນີ້ຄືລູກແກະສຳລັບການ ຖວາຍບູຊາເພື່ອໃຫ້ແຜນການເພື່ອຄວາມລອດພົ້ນຂອງມະນຸດ ທີ່ພຣະເຈົ້າໄດ້ກຳນົດໄວ້ສຳເຣັດລົງ.

ພຣະເຢຊູຄຣິດບໍ່ເຄີຍໂຕ້ຕອບຂໍ້ຫາໃດໆໃນຂະນະທີ່ພຣະອົງຖືກມະນຸດພິພາກສາ ກ່ອນທີ່ຈະຖືກນຳໄປທີ່ໄມ້ກາງແຂນ. ພຣະອົງຮູ້ວ່າຂໍ້ກ່າວຫາທັງໝົດບໍ່ມີມູນຄວາມຈິງ (ມັດທາຍ 27:12). ພຣະອົງບໍ່ໄດ້ເວົ້າຫຍັງຕໍ່ໜ້າກະສັດເຮໂລດ

(ລູກາ 23:8-9). ຜູ້ປະກາດພຣະທັມ ເອຊາຢາໄດ້ທໍານວາຍໄວ້ຢ່າງຖືກຕ້ອງທຸກຢ່າງໃນເຣື່ອງນີ້. ໄມ້ກາງແຂນໄດ້ເຮັດໃຫ້ຫລາຍຄົນໃນອິສຣາເອັນ ສະດຸດໃຈ. ຫລາຍຄົນໃນປັດຈຸບັນຖືໄມ້ກາງແຂນເປັນເຄື່ອງເອ້. ແຕ່ໃນສມັຍຈັກພັດໂຣມ, ໄມ້ກາງແຂນເປັນສິ່ງທີ່ໜ້າອັບອາຍທີ່ສຸດ. ໃນຂໍ້ 9, ເອຊາຢາໄດ້ເວົ້າເຣື່ອງທີ່ເບິ່ງແລ້ວຄືວ່າຄັດແຍ້ງກັນ ແຕ່ວ່າເປັນຄວາມຈິງ; ເອຊາຢາບອກວ່າຜູ້ຮັບໃຊ້ຂອງພຣະເຈົ້າຈະຕາຍເໝືອນກັບຄົນຊົ່ວຊາມແລະຈະຕາຍເໝືອນກັບຄົນຮັ່ງມີ. ພວກເຮົາຮຽນຮູ້ໃນພຣະສັນຍາໃໝ່ວ່າພຣະເຢຊູໄດ້ຕາຍຢູ່ເທິງໄມ້ກາງແຂນລະຫວ່າງໂຈນສອງຄົນແລະໄດ້ຖືກນໍາໄປຝັງທີ່ອຸບໂມງຂອງໂຢເຊັບໄທອາລິມາທາຍຊຶ່ງເປັນຄົນຮັ່ງມີ (ມາຣະໂກ 15:43; ໂຢຮັນ 1:38).

<u>ລາງວັນອັນເຫລືອເຊື່ອສໍາລັບຜູ້ຮັບໃຊ້ (53: 10-12)</u>

ພຣະເຈົ້າຊົງຮັບຮູ້ການຕາຍຂອງຜູ້ຮັບໃຊ້ວ່າເປັນເຄື່ອງບູຊາທີ່ພຣະອົງຊົງພໍພຣະທັຍ. ພຣະພິໂຣດແລະໂທດກັມຕ່າງໆທີ່ພຣະອົງໄດ້ຈັດຕຽມໄວ້ສໍາລັບມະນຸດໄດ້ສູດສິ້ນລົງທີ່ການຕາຍຂອງຜູ້ຮັບໃຊ້. ພຣະພິໂຣດໄດ້ກາຍມາເປັນຄວາມຮັກແລະຄວາມພໍພຣະທັຍ. ພຣະເຈົ້າຊົງໃຫ້ຜູ້ຮັບໃຊ້ຂອງພຣະອົງໄດ້ເຕັມດ້ວຍຄວາມສຸກຊົມຊື່ນຍິນດີຊົ່ວຊີວິດ (ຂໍ້ 10). ພຣະອົງຈະຍົກຖານະຜູ້ຮັບໃຊ້ໃຫ້ຢູ່ "ທ່າມກາງຄົນໃຫຍ່ໂຕມີອໍານາດ" (ຂໍ້ 12). ໂປໂລໄດ້ຂຽນໄວ້ໃນ ຟີລິບປອຍ 2: 9-11 ວ່າ, "ດັ່ງນັ້ນແຫລະພຣະເຈົ້າຈຶ່ງຍົກພຣະອົງຂຶ້ນໃນສວັນທີ່ສູງສຸດມີກຽດໃຫຍ່ຍິ່ງ ແລະມອບແກ່ພຣະອົງນາມທີ່ຍິ່ງໃຫຍ່ກວ່ານາມອື່ນໃດທັງສິ້ນ..." ພຣະເຢຊູຄືຜູ້ຮັບໃຊ້ທີ່ຖືກທໍຣະມານແລະເຈັບປວດ. ພວກເຮົາຈະຕ້ອງເຊື່ອໃນເຣື່ອງທີ່ຫລາຍຄົນຄິດວ່າເຫລືອເຊື່ອ ເພື່ອພວກເຮົາຈະໄດ້ຮັບຄວາມລອດພົ້ນ.

<u>ຄໍາຖາມ:</u>

1. ທ່ານເຫັນວ່າຄໍາທໍານວາຍໃນພຣະທັມເອຊາຢານີ້ເຫລືອເຊື່ອບໍ່? ເປັນຫຍັງ?
2. ທ່ານຄິດວ່າພຣະເຢຊູຕາຍເພື່ອຄວາມຜິດບາບຂອງທຸກຄົນ ຫລືວ່າພຣະອົງຕາຍເພື່ອຜູ້ທີ່ເຊື່ອເທົ່ານັ້ນ? ທ່ານມີຂໍ້ມູນແນວໃດເພື່ອຈະສະແດງໃຫ້ເຫັນ?
3. ທ່ານຄິດວ່າພຣະເຢຊູໄດ້ຕາຍເພື່ອຄວາມບາບທັງໝົດທີ່ຜ່ານມາ, ຄວາມບາບໃນປັດຈຸບັນ, ແລະຄວາມບາບໃນອະນາຄົດບໍ່?
4. ຄໍາທໍານວາຍໂດຍລະອຽດໃນພຣະທັມເອຊາຢາ 53 ມີຄວາມໝາຍແນວໃດແດ່ສໍາລັບຕົວທ່ານ?
5. ພຣະທັມເອຊາຢາ 53 ໄດ້ສະແດງເຖິງພຣະພິໂຣດແລະຄວາມຍິນດີຂອງພຣະເຈົ້າແນວໃດ?

# ບົດຮຽນທີ 8
# ຊົງເອີ້ນໃຫ້ເຮັດວຽກທີ່ລຳບາກ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 1
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ເຢເຣມີຢາ 1
ຈຸດສຳຄັນຂອງບົດຮຽນນີ້: ບາງຄັ້ງພຣະເຈົ້າຊົງເອີ້ນພວກເຮົາໃຫ້ເຮັດໃນສິ່ງທີ່ຍາກລຳບາກ ໂດຍສັນຍາວ່າພຣະອົງຈະຢູ່ນຳເຮົາ ຖ້າພວກເຮົາສັດຊື່.
ຄຳຖາມເພື່ອການສຳຣວດ: ມີຫຍັງແດ່ທີ່ຍາກລຳບາກ ຊຶ່ງພຣະເຈົ້າຊົງເອີ້ນທ່ານໃຫ້ເຮັດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະເບິ່ງປະສົບການຂອງທ່ານເອງ ໃນຂະນະທີ່ກຳລັງຕອບຄຳເອີ້ນຂອງພຣະເຈົ້າ.

ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ຈັດຕຽມຄົນໃຫ້ເປັນຜູ້ນຳຮັບໃຊ້

## ຄຳນຳ

ພຣະເຈົ້າຊົງເອີ້ນແຕ່ລະຄົນຕາມແຜນການຂອງພຣະອົງ. ພຣະເຈົ້າບໍ່ໄດ້ຊົງເອີ້ນແຕ່ລະຄົນຕາມຄວາມເຂົ້າໃຈຂອງເຂົາ ເຈົ້າກ່ຽວກັບຄວາມສາມາດທີ່ເຂົາມີ. ພຣະອົງຊົງຈັດຕຽມ ແລະປົກປັກຫັກສາທຸກຄົນທີ່ພຣະອົງຊົງເອີ້ນ ໃນຂະນະທີ່ ພວກເຂົາຕິດຕາມການນຳພາຂອງພຣະອົງ.

## ໃນສມັຍຂອງເຢເຣມີຢາ (1:1-3)

ພຣະເຈົ້າຊົງເອີ້ນເຢເຣມີຢາໃຫ້ເປັນຜູ້ປະກາດພຣະທັມໃນປີ 627 (ກ່ອນ ຄ. ສ); ທ່ານໄດ້ຮັບໃຊ້ຕໍ່ໄປຈົນເຖິງເວລາທີ່ທ່ານໄດ້ໄປລີ້ພັຍຢູ່ປະເທດອີຢີບໃນປີ 584 (ກ່ອນ ຄ. ສ). ສາສນາໄດ້ເສື່ອມໂຊມລົງພາຍໃຕ້ການປົກຄອງຂອງກະສັດມານາເຊດຊຶ່ງເປັນກະສັດຂອງປະເທດຢູດາລະຫວ່າງປີ 687-642 (ກ່ອນ ຄ. ສ). ສາສນາໃນສມັຍນັ້ນມີການປະປົນກັນຢ່າງບໍ່ເປັນຣະບຽບ ໂດຍສເພາະແມ່ນຄວາມເຊື່ອເຣື່ອງທັມມະຊາດຂອງຊາວການາອານ, ສາສນາບາອານຂອງພຣະຣາຊິນີ ເຢຊາແບນ, ສາສນາປອມຂອງບາເບໂລນ, ແລະອື່ນໆ. ນອກນັ້ນ, ກະສັດມານາເຊດຍັງໄດ້ລົບລ້າງພວກຜູ້ປະກາດພຣະທັມທີ່ບໍ່ເຫັນພ້ອມໃນແນວທາງທີ່ຊົ່ວຊ້າຂອງພຣະອົງ.

ເຢເຣມີຢາມີຄວາມຫ່ວງໃຍເມື່ອໄດ້ເຫັນປະຊາຊົນພາກັນປະຖິ້ມ ແນວທາງຂອງພຣະເຈົ້າ. ຫລາຍຢ່າງໄດ້ເລີ້ມປ່ຽນແປງຫລັງຈາກທີ່ກະສັດ ໂຢຊີອາຂຶ້ນຄອງບັນລັງ. ແຕ່ການປ່ຽນແປງນີ້ເປັນພຽງເຣື່ອງພາຍນອກ ເພາະຈິດໃຈຂອງຄົນບໍ່ໄດ້ມີຫຍັງປ່ຽນແປງ. ຜູ້ນຳທາງສາສນາພາກັນເອົາໃຈໃສ່ເຣື່ອງຣະບຽບການ ແຕ່ບໍ່ໄດ້ເນັ້ນເຣື່ອງການໃຊ້ພຣະທັມເພື່ອປ່ຽນແປງຊີວິດ. ການປ່ຽນແປງຜູ້ນຳປະເທດແຕ່ລະເທື່ອເຮັດໃຫ້ເຢເຣມີຢາ ມີຄວາມຕ້ອງຕິຫລາຍໆຂຶ້ນເພາະໄດ້ເຫັນປະຊາຊົນພາກັນໜີຈາກພຣະເຈົ້າ. ການນຳສາສນາໄປປະສົມກັບຄວາມເປັນຊາດນິຍົມໄດ້ສ້າງຄວາມບໍ່ພໍໃຈເປັນອັນມາກໃຫ້ກັບຜູ້ປະກາດພຣະທັມເຢເຣມີຢາ.

ໃນສະຫະຣັຖອະເມຣິກາ, ຄວາມຮັກຊາດໄດ້ເພີ່ມທະວີຂຶ້ນໃນປັດຈຸບັນ. ພັຍຮ້າຍເກີດຂຶ້ນພາຍໃນປະເທດເຮັດໃຫ້ຄົນພາກັນສແວງຫາພຣະເຈົ້າແລະຈຳນວນຄົນທີ່ໄປໂບດກໍໄດ້ເພີ້ມຂຶ້ນ. ເວລາທຸກຢ່າງຄືນສູ່ສະພາບປົກຕິ, ຫລາຍຄົນກໍເມີນເສີຍເຣື່ອງພຣະເຈົ້າ ແລະເຣື່ອງຄວາມຮັກຊາດກໍຄອຍຜ່ອນລົງໄປຕາມໆກັນ. ຫລາຍຄົນໃນສມັຍສັຕວັດທີ 7 ກ່ອນຄຣິສຕະສັກຣາດ ບໍ່ຢາກໄດ້ຍິນຄຳຕິຕຽນຂອງເຢເຣມີຢາ; ຄົນໃນສມັຍປັດຈຸບັນກໍຄົງຈະມີຄວາມຮູ້ສຶກເຊັ່ນດຽວກັນ.

ຄົນໃນສມັຍຂອງເຢເຣມີຢາມີການແບ່ງຊັ້ນກັນຢ່າງເຫັນແຈ້ງ. ຄົນຮັ່ງມີຈະມີອຳນາດແຕ່ຂາດຄວາມຮູ້ສຶກຕົວ, ມີຊັບສິນແຕ່ຂາດຄວາມເອັນດູຄົນອື່ນ, ແລະມີຄວາມໂລບມາກໂລພາໂດຍບໍ່ມີຂອບເຂດ. ການມົວເມົາເຣື່ອງເພດຫລືເຣື່ອງວັດຖຸສິ່ງຂອງຈະເຮັດໃຫ້ມະນຸດໄດ້ເຫັນຜິດເປັນຖືກ ແລະຈະທຳລາຍຄົນອື່ນໆເພື່ອຈະໄດ້ໃຫ້ສົມໃຈຂອງຕົນ.

<u>ພຣະເຈົ້າຊົງຮູ້ເຫັນ (1:4-5)</u>

ພຣະເຈົ້າຊົງເອີ້ນເຢເຣມີຢາ ກ່ອນທີ່ເຂົາຈະມາເກີດເປັນມະນຸດ. ພຣະເຈົ້າຊົງກ່າວວ່າ, "ເຮົາເລືອກເຈົ້າໄວ້ກ່ອນເຮົາໄດ້ໃຫ້ຊີວິດແກ່ເຈົ້າ" (ຂໍ້ 5). ພຣະເຈົ້າຊົງຫລໍ່ຫລອມເຢເຣມີຢາເໝືອນຊ່າງປັ້ນໝໍ້ທີ່ກຳລັງປັ້ນດິນໃຫ້ເປັນຮູບ. ພຣະອົງໄດ້ແຕ່ງຕັ້ງເຂົາໃຫ້ນຳພຣະທັມໄປບອກກັບປະຊາຊາດທັງຫລາຍ. ການເອີ້ນຂອງພຣະເຈົ້າເລີ້ມດ້ວຍການໃຫ້ບຸກຄົນໄດ້ມີຄວາມສັມພັນກັບພຣະອົງ. ພຣະເຈົ້າຈະຕຽມເຂົາໄວ້ເພື່ອຕ້ອນຮັບສະຖານະການຕ່າງໆໃນອະນາຄົດ. ພຣະອົງຈະຊົງປະທານສາຣະພັດຢ່າງທີ່ຈຳເປັນຕົງຕາມເວລາທຸກໆຄັ້ງ. ເຢເຣມີຢາໄດ້ເຫັນຄວາມຍິ່ງໃຫຍ່ຂອງພຣະເຈົ້າໃນຊີວິດເຂົາ. <u>ພວກເຮົາຈະບໍ່ເຂົ້າໃຈວ່າພຣະເຈົ້າຄື "ຜູ້ທີ່" ພວກເຮົາປາຖນາ ຈົນກວ່າພຣະເຈົ້າຄື "ຜູ້ດຽວ" ທີ່ພວກເຮົາມີ.</u>

ການຖືກເອີ້ນໃຫ້ "ເປັນຜູ້ປະກາດພຣະທັມແກ່ຊົນຊາດທັງຫລາຍ" ບໍ່ໄດ້ໝາຍຄວາມວ່າເຢເຣມີຢາຈະມີທຸກຢ່າງພຽງພໍ ສຳລັບຕົວເອງແລະການຮັບໃຊ້. ເຢເຣມີຢາບໍ່ໄດ້ມີຄວາມສະດວກເໝືອນກັບທ່ານບິນລີ ກຣາແຮມໃນສມັຍນີ້. ສິ່ງເຫລົ່ານີ້ ໄດ້ເຕືອນພວກເຮົາວ່າ ພຣະຄຳຂອງພຣະເຈົ້າສາມາດນຳຄວາມຫວັງມາໃຫ້ທຸກໆຄົນ. ເຢເຣມີຢາໄດ້ປະກາດພຣະທັມ ຂອງພຣະເຈົ້າຢ່າງສັດຊື່ ແລະທ່ານໄດ້ເວົ້າເຖິງເຣື່ອງທີ່ຈຳເປັນສຳລັບມະນຸດທຸກຄົນ.

<u>ຈຸດອ່ອນຂອງມະນຸດ (1:6-8)</u>

ເຢເຣມີຢາຮູ້ສຶກໃນຄວາມບໍ່ຕຽມພ້ອມຂອງຕົວເອງເພາະທ່ານເອງກໍຍັງໜຸ່ມນ້ອຍຢູ່ໃນເວລາທີ່ພຣະເຈົ້າຊົງເອີ້ນ (ຂໍ້ 6-7). ທ່ານອາດຈະມີອາຍຸໃນລາວ 20 ກວ່າປີ. ຕາມປະເພນີໃນສມັຍນັ້ນ, ຄົນໜຸ່ມຈະນັ່ງຟັງແລະໃຫ້ຜູ້ທີ່ມີອາຍຸສູງແລ້ວເປັນຄົນເວົ້າ. ຄຳຕອບຂອງເຢເຣມີຢາທີ່ວ່າ, "ຂ້າພະອົງຍັງໜຸ່ມເກີນໄປທີ່ຈະກ່າວຕໍ່ໜ້າມະຫາຊົນ" ມີສ່ວນຄ້າຍຄືຄຳຕອບຂອງໂມເຊ ເມື່ອທ່ານຖືກພຣະເຈົ້າຊົງເອີ້ນໃຫ້ເປັນຜູ້ຮັບໃຊ້ (ອພຍ 3:11,13;14:1,10,13).

ພຣະເຈົ້າຊົງຮູ້ເຫັນຄວາມອ່ອນແອ, ຄວາມລະອາຍ, ຄວາມຂີ້ອາຍ, ແລະຄວາມໜຸ່ມໃນເຢເຣມີຢາ ແຕ່ພຣະອົງມີພຣະປະສົງທີ່ຈະໃຊ້ເຂົາໃຫ້ເປັນຜູ້ປະກາດພຣະທັມ. ບັນຫາຂອງເຢເຣມີຢາຈະໃຫຍ່ຫລືນ້ອຍນັ້ນບໍ່ໄດ້ຢູ່ທີ່ປະສົບການຫລືຄວາມຮູ້ສຶກຕ່ຳຕ້ອຍຂອງເຂົາ ເພາະບັນຫາສຳຄັນຄືການຖືກເອີ້ນຈາກພຣະເຈົ້າ ແລະການຕັດສິນໃຈທີ່ຈະເຊື່ອຟັງ. ພຣະເຈົ້າສາມາດໃຊ້ທຸກຄົນທີ່ຕຽມພ້ອມຈະຕອບການຊົງເອີ້ນຂອງພຣະອົງ. ພຣະອົງບໍ່ໄດ້ຊົງສແວງຫາຄົນທີ່ມີຄວາມສາມາດ, ແຕ່ພຣະອົງຊົງຊອກຫາຜູ້ທີ່ຕຽມພ້ອມຈະເຊື່ອຟັງພຣະອົງ.

<u>ຄຳເຕືອນຂອງພຣະເຈົ້າ (1:9-16)</u>

ເມື່ອພຣະເຈົ້າໄດ້ຊົງເອີ້ນຜູ້ປະກາດພຣະທັມເອຊາຢາ ພຣະອົງໄດ້ຊົງຊຳຣະລ້າງທ່ານດ້ວຍຖ່ານໄຟແດງ. ໃນເວລາທີ່ພຣະເຈົ້າຊົງເອີ້ນເຢເຣມີຢາ, ພຣະອົງໄດ້ເຈີມເພິ່ນໂດຍການແຕະທີ່ປາກຂອງເພິ່ນ (ຂໍ້ 9). ການຊົງເອີ້ນເອຊາຢາປະ

ກອບດ້ວຍການທ້າທາຍໃຫ້ໄປຫາຄົນທີ່ຈະບໍ່ຟັງ, ບໍ່ເຫັນ, ແລະບໍ່ຮູ້ສຶກເຣື່ອງພຣະຄຳຂອງພຣະເຈົ້າໃນຊີວິດຂອງພວກເຂົາ. ການຊົງເອີ້ນເຢເຣມີຢາ ເປັນເຣື່ອງອັນມະຫາສານຊຶ່ງຈະມີທັງການທຳລາຍແລະການກໍ່ສ້າງ. ພຣະເຈົ້າຊົງກ່າວກັບເຢເຣມີຢາໃນຂໍ້ 10 ວ່າການຮັບໃຊ້ຂອງເພິ່ນຈະມີສ່ວນກ່ຽວກັບເຣື່ອງອະນາຄົດຂອງຊົນຊາດແລະອານາຈັກທັງຫລາຍ. ພຣະເຈົ້າຊົງແຕ່ງຕັ້ງເຢເຣມີຢາໃຫ້ເປັນຜູ້ອອກໄປຖອນຮາກ, ທຳລາຍ, ແລະໂຄ່ນລົ້ມ ໂຄງຮ່າງທີ່ຊົ່ວຮ້າຍທັງໝົດ ເພື່ອພຣະອົງຈະໄດ້ປູກສ້າງຈິດໃຈຄົນຂຶ້ນໃໝ່ແລະກໍ່ຕັ້ງການນະມັສການທີ່ຖືກຕ້ອງ. ການກັບໃຈທີ່ແທ້ຈິງຈະຊ່ວຍໃຫ້ທຸກຄົນໄດ້ເຫັນຣິດອຳນາດຂອງຂ່າວປະເສີດເຣື່ອງຄວາມລອດພົ້ນ.

ພຣະເຈົ້າຊົງໃຊ້ເຄື່ອງໝາຍຕ່າງໆເພື່ອຊ່ວຍໃຫ້ເຂົ້າໃຈຄວາມຈິງ. ເຢເຣມີຢາໄດ້ເຫັນ "ງ່າຂອງຕົ້ນໝາກບົກ" (ຂໍ້ 11). ອານາທິດເປັນຂົງເຂດທີ່ມີຕົ້ນໝາກບົກຢ່າງຫລວງຫລາຍ. ຕົ້ນໝາກບົກຈະເກີດໝາກໃນຣະດູໜາວ ຫລືພາກຕົ້ນຂອງຣະດູໃບໄມ້ປົ່ງ. ຄົນໃນສມັຍນັ້ນເອີ້ນຕົ້ນໝາກບົກວ່າ "ຕົ້ນໄມ້ປຸກ" ຫລື "ຜູ້ເຝົ້າຄອຍ" ເພາະເຂົາເຈົ້າຮູ້ວ່າເມືອໃດຕົ້ນບົກເລີ້ມອອກດອກ ອາກາດຮ້ອນກໍໃກ້ຈະມາເຖິງແລະກາງເວັນກໍຈະຍາວອອກ. ໃນຕອນນີ້ ເຢເຣມີຢາຄົງຈະຄິດເຖິງຄຳເຕືອນເຣື່ອງການພິພາກສາຂອງພຣະເຈົ້າທີ່ຜູ້ປະກາດພຣະທັມເອຊາຢາແລະມີກາໄດ້ບອກໄວ້ກ່ອນແລ້ວ. ຊົນຊາດອິສຣາເອັນມີໃຈກະດ້າງຕໍ່ພຣະຄຳຂອງພຣະເຈົ້າເໝືອນກັບແຜ່ນດິນທີ່ກຳລັງແຂງກະດ້າງເພາະອາກາດແລະລົມໜາວ. ໃນພຣະທັມຂໍ້ 12, ພຣະເຈົ້າຊົງກ່າວວ່າ "ເຮົາກຳລັງເຝົ້າຄອຍເບິ່ງໃຫ້ຖ້ອຍຄຳຂອງເຮົາກາຍເປັນຈິງ." ຜູ້ທີ່ສັດຊື່ຕໍ່ພຣະເຈົ້າພໍຈະເຂົ້າໃຈວ່າພຣະເຈົ້າບໍ່ໄດ້ຫລົງລືມພວກເຂົາເຖິງວ່າແຜ່ນດິນຈະເຕັມໄປດ້ວຍຄວາມຊົ່ວຮ້າຍ.

ເຄື່ອງໝາຍອັນທີສອງທີ່ເຢເຣມີຢາເຫັນຄື "ໝໍ້ໜ່ວຍນຶ່ງທີ່ກຳລັງຟົດ" (ຂໍ້ 13). ເຖິງວ່າປະເທດ ອີຢິບຈະເປັນປະເທດທີ່ເຂັ້ມແຂງໃນສມັຍນັ້ນ, ພຣະເຈົ້າສັນຍາວ່າຈະໃຫ້ໝໍ້ແກງຂອງພວກເຂົາເດືອດ ແລະຟົດຈົນລົ້ນປາກແລ້ວຈະນຳການພິພາກສາໃຫ້ມາເຖິງປະເທດຢູດາຜູ້ເປັນຊົນຊາດທໍຣະຍົດ. ພຣະເຈົ້າຈະບໍ່ເມີນເສີຍອີກຕໍ່ໄປໃນເຣື່ອງການໄຫວ້ພຣະທຽມ, ເຣື່ອງປຣັຊຍາອັນຊົ່ວຮ້າຍ, ແລະເຣື່ອງຄວາມເຫັນແກ່ຕົວໃນຊີວິດຂອງພວກເຂົາທັງຫລາຍ.

<u>ການຕຽມຕົວຂອງເຢເຣມີຢາ (1:17-19)</u>

ການປະກາດເຣື່ອງຄຳພິພາກສາຂອງພຣະເຈົ້າຕໍ່ຊົນຊາດຂອງຕົນເອງເປັນເຣື່ອງທີ່ລຳບາກສຳລັບເຢເຣມີຢາ. ຄຳເທສນາຂອງເພິ່ນໄດ້ເນັ້ນໃສ່ເຣື່ອງການແກ້ໄຂຄວາມຜິດພາດທີ່ປະຊາຊົນໄດ້ກະທຳ. ເຢເຣມີຢາໄດ້ປະຕິເສດການຖືສາສນາທີ່ບໍ່ມີພຣະເຈົ້າຢູ່ໃນໃຈ. ທ່ານໄດ້ປະຕິເສດຊົນຊາດທີ່ບອກວ່າຕົນເປັນໄພ່ພົນຂອງພຣະເຈົ້າແຕ່ປະພຶດຕົນເໝືອນຄົນບໍ່ຮູ້ພຣະເຈົ້າ. ໃນມາຣະໂກ 11: 15-18, ພວກເຮົາໄດ້ເຫັນພຣະເຢຊູຊົງຊຳລະລ້າງພຣະວິຫານ ເພາະຜູ້ນະມັສການໄດ້ພາກັນເຮັດພາຣະກິດທີ່ເຫັນວ່າເປັນການເຍາະເຍີ້ຍພຣະຜູ້ເປັນເຈົ້າ. ເຢເຣມີຢາແລະພຣະເຢຊູຄຣິດຕ່າງກໍໄດ້ຖືກຄົນທັງຫລາຍປະຕິເສດເພາະພວກເພິ່ນໄດ້ເທສນາໃນສິ່ງທີ່ຄົນບໍ່ມັກຟັງ . ການຖືກຄົນທັງຫລາຍປະຕິເສດເພາະພວກເຂົາບໍ່ຢາກໄດ້ຍິນຂ່າວສານທີ່ທ່ານມີ ເປັນການຍາກລຳບາກບໍ່ວ່າໃນສມັຍໃດ.

ພຣະເຈົ້າຊົງສັນຍາວ່າຈະຊ່ວຍຜູ້ຮັບໃຊ້ຂອງພຣະອົງໃຫ້ເຂັ້ມແຂງ. ວິທີການປົກປ້ອງຮັກສາຂອງພຣະອົງກໍແຕກຕ່າງກັນສຳລັບສ່ວນບຸກຄົນ. ພຣະເຈົ້າໄດ້ຊົງເຕືອນເຢເຣມີຢາໃຫ້ຕຽມຕົວເພື່ອການຕໍ່ຕ້ານທີ່ຈະມາເຖິງເພິ່ນ. ການຕໍ່ຕ້ານຈາກໄພ່ພົນຂອງພຣະເຈົ້າສາມາດສ້າງບັນຫາເທົ່າໆກັນກັບການຕໍ່ຕ້ານຈາກຄົນພາຍນອກ. ແຕ່ພຣະເຈົ້າຊົງສັນຍາວ່າຈະໃຫ້ເຢເຣມີຢາໄດ້ຢູ່ໃນຄວາມປອດພັຍຂອງເມືອງທີ່ມີຝາອ້ອມ, "ມີເສົາເປັນເຫລັກ, ແລະມີກຳແພງເປັນທອງ" (1: 18). ໃນສມັຍນີ້, ພຣະຜູ້ເປັນເຈົ້າໄດ້ໃຫ້ຄວາມປອດພັຍກັບຜູ້ທີ່ຕິດຕາມການຊົງເອີ້ນຂອງພຣະອົງໂດຍການຊົງປະທັບຢູ່ກັບພວກເຂົາສເມີ.

ໃນພຣະທັມຂໍ້ 19, ພຣະເຈົ້າຊົງກ່າວກັບເຢເຣມີຢາວ່າ "ເຮົາຢູ່ນຳເຈົ້າເພື່ອປົກປ້ອງຄຸ້ມຄອງເຈົ້າ" ຢູ່ສເມີ. ແນ່ນອນ, ໃນເວລາທີ່ເຢເຣມີຢາພົບກັບບັນຫາຫຍຸ້ງຍາກ ເພິ່ນຈະລະນຶກເຖິງພຣະສັນຍາແລະອາດຈະຖາມຢູ່ເລື້ອຍວ່າ, <u>ອີກດົນປານໃດພຣະອົງຈະມາຊ່ວຍຂ້ານ້ອຍ?</u> ໃນພຣະທັມເຢເຣມີຢາພວກເຮົາໄດ້ເຫັນວ່າຜູ້ປະກາດພຣະທັມເຢເຣມີຢາໄດ້ຕໍ່ສູ້ກັບພວກຄົນຫົວດື້ດຶງຊຶ່ງບໍ່ຍອມເຊື່ອຟັງ (11:8); ພວກຫັກຫລັງ (12:6); ພວກຕໍ່ສູ້ແລະປ້ອຍດ່າ (15:6); ພວກກົດຂີ່ຂົ່ມເຫງ (17:18); ພວກຫາເຣື່ອງ (18:18); ພວກຫຍໍ້ຫຍັນ, ສຽດສີ, ຫລອກລວງ, ແລະເວົ້າຂວັນກັນ (20:8,10); ແລະພວກປະສົງທຳລາຍຮ່າງກາຍ (38:6). ທຸກໆຄັ້ງທີ່ເພິ່ນພົບກັບບັນຫາ, ເຢເຣມີຢາຫລຽວຫາຜູ້ຊ່ວຍບໍ່ມີນອກຈາກພຣະສັນຍາຂອງພຣະຜູ້ເປັນເຈົ້າ.

ໃນສມັຍປັດຈຸບັນນີ້, ຜູ້ຮັບໃຊ້ຫລາຍໆຄົນກໍໄດ້ພົບພໍ້ບັນຫາຄ້າຍຄືກັນກັບຜູ້ປະກາດພຣະທັມເຢເຣມີຢາ. ຄຣິສຕະຈັກຫລາຍບ່ອນໄດ້ຕໍ່ສູ້ກັນເຣື່ອງຜົວພັນ, ເຣື່ອງເພງນະມັສການ, ແລະເຣື່ອງການແປພຣະຄັມພີບາງສະບັບ. ສະນັ້ນຜູ້ຮັບໃຊ້ ແຕ່ລະຄົນຈະຕ້ອງໄດ້ເພິ່ງການນຳພາຂອງພຣະເຈົ້າ ແລະເພິ່ງນິມິດໝາຍໃນການປະກາດພຣະທັມໃຫ້ກັບຄົນທັງຫລາຍ. ຄຣິສຕຽນທຸກໆຄົນຈະຕ້ອງປ່ອຍໃຫ້ພຣະເຈົ້າທຳງານໃນຈິດໃຈຂອງຕົນເພື່ອບໍ່ໃຫ້ຣິດນິຍົມຂອງຜູ້ໃດຜູ້ນຶ່ງຕ້ອງມາເປັນ ອຸປສັກຂອງການປະກາດພຣະທັມອັນຍິ່ງໃຫຍ່ຂອງພຣະເຈົ້າກັບຄົນທົ່ວໆໄປ.

<u>ຄຳຖາມ:</u>

1. ພຣະເຈົ້າເຄີຍໃຊ້ພຣະທັມບາງຂໍ້ເວົ້າກັບທ່ານເປັນທາງສ່ວນຕົວບໍ່? ຖ້າເຄີຍ, ມີຂໍ້ໃດແດ່? ພຣະເຈົ້າໄດ້ໃຊ້ພຣະທັມຂໍ້ນັ້ນໆກັບທ່ານແນວໃດ?
2. ທ່ານຄິດວ່າຄົນໃນສະຫະຣັຖໜີຈາກແນວທາງຂອງພຣະເຈົ້າເຣື່ອງໃດແດ່? ຄົນໃນຄຸ້ມບ້ານຂອງທ່ານໄດ້ປະຖິ້ມພຣະເຈົ້າບໍ່? ຄົນໃນຄຣິສຕະຈັກຂອງທ່ານໄດ້ປະຖິ້ມພຣະເຈົ້າບໍ່?
3. ທ່ານຄິດວ່າພຣະເຈົ້າມີແຜນສຳລັບຊີວິດຂອງທ່ານບໍ່? ຖ້າມີ,ທ່ານເຊື່ອໄດ້ແນວໃດ? ທ່ານມີຄວາມປະສົງແນວໃດ?
4. ທ່ານເຄີຍຄິດວ່າ ຄວາມຮູ້ສຶກບໍ່ພ້ອມພຽງຂອງຕົວເອງເຮັດໃຫ້ທ່ານບໍ່ສາມາດຕອບການຊົງເອີ້ນຂອງພຣະເຈົ້າບໍ່?
5. ພຣະເຈົ້າຊົງໃຊ້ ຕົ້ນບົກທີ່ກຳລັງເກີດດອກ ແລະໝໍ້ນໍ້າທີ່ກຳລັງຟົດເພື່ອເປັນເຄື່ອງໝາຍວ່າການພິພາກສາຂອງພຣະອົງຈະມາເຖິງປະເທດຢູດາ. ທ່ານໄດ້ເຫັນເຄື່ອງໝາຍແນວໃດແດ່ສຳລັບສະພາບການໃນປະເທດຂອງພວກເຮົາໃນປັດຈຸບັນນີ້?

# ບົດຮຽນທີ 9
# ເມື່ອເຊື່ອຜິດບ່ອນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 7:1-15

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ເຢເຣມີຢາ 7:1-15; 26:1-24

ຈຸດສຳຄັນຂອງບົດຮຽນນີ້: ຄົນທັງຫລາຍຫລອກລວງຕົວເອງວ່າໄດ້ຢູ່ທີ່ປອດພັຍແລ້ວ; ພວກເຂົາເຊື່ອວ່າພຣະເຈົ້າຈະຕ້ອງຊ່ວຍເຫລືອພວກຄົນເພາະພວກເຂົານະມັສການພຣະເຈົ້າ; ແຕ່ຄວາມຈິງແລ້ວພວກເຂົາບໍ່ໄດ້ດຳເນີນຊີ ວິດຕາມແນວທາງຂອງພຣະອົງເລີຍ.

ຄຳຖາມເພື່ອການສຳຣວດ: ທ່ານຄິດວ່າພຣະເຈົ້າຈະຕ້ອງເຮັດຫຍັງເພື່ອທ່ານແດ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອພິຈາຣະນາເບິ່ງວ່າຂ້ອຍອາດຈະຄິດວ່າພຣະເຈົ້າຈຳຕ້ອງເຮັດຫຍັງແດ່ໃຫ້ຂ້ອຍເມື່ອຂ້ອຍບອກວ່າຂ້ອຍໄດ້ເຊື່ອໃນພຣະອົງ.

ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນວ່າທຸກຄົນສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

## ຄຳນຳ

ຄວາມປອດພັຍຂອງພວກເຮົາກັບພຣະເຈົ້າເກີດມາຈາກຄວາມສັມພັນທີ່ເຮົາມີກັບພຣະອົງ. ພຣະອົງບໍ່ໄດ້ສັນຍາວ່າຊີວິດນີ້ຈະມີແຕ່ຄວາມສນຸກສນານ, ແຕ່ພຣະອົງຊົງສັນຍາວ່າພຣະອົງຈະຢູ່ນຳພວກເຮົາໃນທຸກຢ່າງທີ່ເກີດຂຶ້ນກັບເຮົາ. ຊີວິດຂອງຊາວອະເມຣິກັນໄດ້ປ່ຽນແປງຫລາຍສົມຄວນ ຫລັງຈາກທີ່ພວກກໍ່ການຮ້າຍໄດ້ໃຊ້ເຄື່ອງບິນໂດຍສານບິນເຂົ້າຊົນແລະທຳລາຍສູນການຄ້າຂອງໂລກທີ່ນະຄອນນີວຢອກໃນວັນທີ 11 ກັນຍາ ປີ 2001.  ສິ່ງທີ່ບໍ່ໄດ້ຄາດຝັນກໍເກີດຂຶ້ນໃນປະເທດມະຫາອຳນາດທີ່ທຸກຄົນຖືວ່າເປັນບ່ອນທີ່ປອດພັຍທີ່ສຸດໃນໂລກ. ຄວາມຢ້ານກົວໄດ້ກາຍເປັນພາກສ່ວນຂອງຊີວິດແຕ່ລະວັນ. ຫລາຍຄົນໄດ້ຖາມວ່າ, "ສະຫະຣັຖອາເມຣິກາເປັນປະເທດຄຣິສຕຽນ, ເປັນຫຍັງພຣະເຈົ້າບໍ່ປົກປັກຮັກສາພວກເຮົາ?" ຊາວອະເມຣິກັນພາກັນສແວງຫາຄວາມປອດພັຍແລະສແວງຫາຜູ້ທີ່ຈະປ້ອງກັນພວກເຂົາ.

ຄົນໃນສມັຍຂອງຜູ້ປະກາດພຣະທັມເຢເຣມີຢາກໍໄດ້ສແວງຫາຄວາມປອດພັຍ ແລະສແວງຫາຜູ້ປ້ອງກັນພວກເຂົາເຈົ້າເຊັ່ນດຽວກັບຊາວອະເມຣິກັນໃນສມັຍນີ້. ເຂົາເຈົ້າເຊື່ອວ່າພຣະເຈົ້າມີພາຣະໜ້າທີ່ໃນການປ້ອງກັນພວກເຂົາ. ພຣະທັມເຢເຣມີຢາໃນຕອນນີ້ໄດ້ເວົ້າເຖິງຄວາມນຶກຄິດຂອງຊົດຊາດອິສຣາເອັນ  ກ່ຽວກັບພາຣະໜ້າທີ່ຂອງພຣະເຈົ້າໃນການປົກປັກຮັກສາພວກເຂົາ.

ເບື້ອງຫລັງຂອງການເທສນາ (7: 1-15; 26: 1-24)

ພຣະທັມເຢເຣມີຢາ ບົດທີ 7 ເປັນຄຳເທສນາກ່ຽວກັບເຣື່ອງຄົນໃນສມັຍນັ້ນພາກັນຫ່າງເຫີນອອກຈາກພຣະເຈົ້າ  ແຕ່ໃນຂະນະດຽວກັນພວກເຂົາພາກັນຮຽກຮ້ອງໃຫ້ພຣະເຈົ້າປ້ອງກັນພວກຄົນ.  ພຣະທັມເຢເຣມີຢາ ບົດທີ 26 ແມ່ນຄຳ

ໂຕ້ຕອບຫລາຍໆຢ່າງຫລັງຈາກການເທສນາ. ເຢເຣມີຢາໄດ້ເທສນາບົດນີ້ໃນງານສລອງຂອງຣະດູໜາວເມື່ອປີ 609 (ກ່ອນ ຄ. ສ). ກະສັດຢາໂຮຍອາຮາດໄດ້ຖືກເນຣະເທດຫລັງຈາກທີ່ຂຶ້ນຄອງບັນລັງໄດ້ພຽງ 3 ເດືອນ. ກະສັດອາໂຮຍອາກີມໄດ້ຂຶ້ນຮັບຣາຊການແທນ. ເຂດຕາເວັນອອກກາງກຳລັງຢູ່ໃນພາວະສຸກເສີນ; ບາບີໂລເນັຽໄດ້ເຂົ້າຍຶດເອົາເຄືອຈັກພົບຂອງອາຊີເຣັຽ. ປະເທດຢູດາເກີດການຄົ້ນລົ້ມ ແລະປະຊາຊົນກໍເກີດມີຄວາມຢ້ານກົວ.

ພາວະສຸກເສີນເຮັດໃຫ້ປະຊາຊົນພາກັນເຊື່ອເຣື່ອງໂຊກລາງຫລາຍຂຶ້ນ. ຊາວເຮັບເຣີ ເຄີຍເຊື່ອວ່າຕາບໃດທີ່ພວກເຂົາເຈົ້າມີ "ຫີບຄຳໝັ້ນສັນຍາ" ຢູ່ທ່າມກາງພວກເຂົາ ບໍ່ມີຜູ້ໃດຈະທຳລາຍພວກເຂົາໄດ້ ແລະພວກເຂົາເຈົ້າຈະມີຄວາມປອດພັຍແລ້ວ. ໃນຕອນນີ້ ເຂົາເຈົ້າກໍມີພຣະວິຫານຢູ່ທ່າມກາງພວກເຂົາ ແລະທຸກຄົນກໍເຊື່ອວ່າພຣະຜູ້ເປັນເຈົ້າຊົງສະຖິດຢູ່ໃນວິຫານແຫ່ງນັ້ນ, ເພາະພວກຄົນເຄີຍໄດ້ຟັງພຣະທັມຄຳສອນຢູ່ໃນພຣະວິຫານ, ເຄີຍໄດ້ຮັບການອະພັຍໂທດຢູ່ໃນພຣະວິຫານ, ແລະເຄີຍໄດ້ເຫັນຜູ້ຕາງໜ້າພຣະເຈົ້າຢູ່ໃນພຣະວິຫານສເມີ. ສະນັ້ນທຸກຄົນຈຶ່ງຄິດວ່າພັຍອັນຕະລາຍຈະບໍ່ມາເຖິງພວກເຂົາແນ່ນອນ ເພາະພຣະເຈົ້າຊົງສະຖິດຢູ່ທ່າມກາງໄພ່ພົນຂອງພຣະອົງສເມີໄປ.

<u>ຄຳສັ່ງຂອງພຣະເຈົ້າ (7:1-2)</u>

ພຣະເຈົ້າຊົງສັ່ງຜູ້ປະກາດພຣະທັມເຢເຣມີຢາໃຫ້ໄປຢືນຢູ່ທີ່ປະຕູຂອງພຣະວິຫານ (ຂໍ້ 2) ເພື່ອປະກາດພຣະຄຳ. ເຢເຣມີຢາກໍໄດ້ໄປທີ່ປະຕູຂອງວິຫານບ່ອນທີ່ປະຊາຊົນກຳລັງນະມັສການ. ພຣະຜູ້ເປັນເຈົ້າໄດ້ຊົງອະນຸຍາດໃຫ້ເຢເຣມີຢາປະກາດເຣື່ອງຢ່າງດຽວຄື "ການປະຕິຮູບ."

<u>ພິທີການທີ່ໄຮ້ຄວາມໝາຍ (7:3-4)</u>

ຊາວເຮັບເຣີມີງານສລອງຫລາຍໆຢ່າງແຕ່ລະປີ. ງານສລອງໃນຣະດູໜາວເປັນງານທີ່ໜ້າເບິ່ງທີ່ສຸດ. ນັກຮ້ອງແລະນັກ ລຳພາກັນແຮ່ຕາມຫລັງກະສັດທີ່ກຳລັງເດີນເຂົ້າໄປຍັງພຣະວິຫານ. ປະໂລຫິດພາກັນຍ່າງເປັນແຖວ ແລະແກວ່ງເຕົ້າ ທູບໄປພ້ອມໆກັນ. ກຸ່ມນັກຮ້ອງກໍພາກັນຮ້ອງເພງວ່າ "ທີ່ນີ້ແມ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ ທີ່ນີ້ແມ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ ທີ່ນີ້ແມ່ນພຣະວິຫານຂອງພຣະຜູ້ເປັນເຈົ້າ" (7:4). ປະຊາຊົນທັງຫລາຍພາກັນຕາຍໃຈໃນພິທີການ ດັ່ງກ່າວ. ທຸກຄົນຄິດວ່າພວກເຂົາໄດ້ເຮັດໃນສິ່ງທີ່ພຣະເຈົ້າຊົງພໍພຣະທັຍ ແລະຄິດວ່າພຣະອົງຈຳເປັນຈະຕ້ອງປົກປັກ ຮັກສາພວກເຂົາ.

ມະນຸດຈະຫລອກລວງພຣະເຈົ້າດ້ວຍພິທີການຕ່າງໆກໍຄົງຈະເປັນໄປບໍ່ໄດ້. ພຣະເຈົ້າຈະບໍ່ໄດ້ຮັບກຽດຈາກພິທີການທີ່ຂາດການຖວາຍຕົວ ແລະພິທີການທີ່ເຮັດໄປຢ່າງລົມໆແລ້ງໆ. ພຣະເຈົ້າໄດ້ຊົງຕັດຜ່ານຜູ້ປະກາດພຣະທັມເອຊາຢາໃນກໍຣະນີທີ່ຄ້າຍຄືກັນນີ້ວ່າ "ປະຊາຊົນເຫລົ່ານີ້ອ້າງວ່ານະມັສການເຮົາ ແຕ່ຄຳເວົ້າຂອງພວກເຂົາໄຮ້ຄວາມໝາຍ ແລະຈິດໃຈຂອງເຂົາກໍສຸມຢູ່ທີ່ອື່ນ" (ເອຊາຢາ 29:13).

<u>ຄວາມຜິດບາດຖືກເປີດເຜີຍ (7:5-11)</u>

ເຢເຣມີຢາໄດ້ກ່າວເຣື່ອງຄວາມບາບຂອງປະຊາຊົນທັງຫລາຍວ່າ, "ຈົ່ງປ່ຽນທາງດຳເນີນຊີວິດແລະການກະທຳຂອງໝູ່ເຈົ້າສາ. ຈົ່ງປະຕິບັດຕໍ່ກັນຢ່າງຍຸຕິທັມ. ຈົ່ງເຊົາເອົາປຽບຄົນຕ່າງດ້າວ, ລູກກຳພ້າ, ແລະແມ່ໝ້າຍ. ຈົ່ງເຊົາການປະຫັດປະຫານຄົນທີ່ບໍ່ມີຄວາມຜິດຢູ່ໃນແຜ່ນດິນແດນນີ້. ຈົ່ງເຊົາຂາບໄຫວ້ພຣະອື່ນສາເພາະການກະທຳເຊັ່ນນັ້ນຈະເປັນການທຳລາຍໝູ່ເຈົ້າເອງ. ຖ້າໝູ່ເຈົ້າປ່ຽນແປງເຮົາຈະໃຫ້ໝູ່ເຈົ້າອາສັຍຢູ່ໃນດິນແດນນີ້" (7:5-7). ຄຳເທສນາຂອງເຢເຣມີຢາໄດ້ອີງໃສ່ພຣະບັນຍັດສິບປະການ ແລະກົດຂອງໂມເຊ ເພາະເຂົາເຊື່ອວ່າກົດເຫລົ່ານັ້ນຄືພຣະປະສົງຂອງ ພຣະຜູ້ເປັນເຈົ້າສຳລັບການດຳເນີນຊີວິດຂອງໄພ່ພົນຂອງພຣະອົງແລະ ຜູ້ທີ່ພຣະອົງໄດ້ຊົງເລືອກໄວ້.

ເຢເຣມີຢາເນັ້ນຄວາມສຳຄັນຂອງກົດໂມເຊແລະບັນຍັດສິບປະການ. ຜູ້ທີ່ລະເມີດກົດແລ້ວທຳທ່ານະມັສການພຣະເຈົ້າ

ເໝືອນກັບວ່າບໍ່ໄດ້ເຮັດຄວາມຜິດຫຍັງ ຜູ້ນັ້ນກໍເປັນຜູ້ລັກພຣະເຈົ້າ (7:11). ການຊື່ລັກບໍ່ໄດ້ໝາຍພຽງແຕ່ວ່າເຮົາບໍ່ໄດ້ຖວາຍໃຫ້ພຣະເຈົ້າຕາມພາກສ່ວນ. ທ່ານລັກພຣະເຈົ້າຖ້າທ່ານໄປນະມັສການພຣະເຈົ້າແບບບໍ່ບໍຣິສຸດ. ທ່ານລັກພຣະເຈົ້າເວລາໃດທ່ານບໍ່ໄດ້ມອບຫົວໃຈໃຫ້ພຣະເຈົ້າທັງໝົດ. ທ່ານລັກພຣະເຈົ້າເວລາທ່ານບໍ່ໄດ້ເຮັດຕາມກົດ ແຕ່ກັບໄປໂອ້ອວດວ່າຕົວເອງໄດ້ນັບຖືກົດຂອງພຣະເຈົ້າທຸກຂໍ້.

<u>ແກ້ຄວາມເຂົ້າໃຈຜິດ (7:12-15)</u>

ເຢເຣມີຢາຮູ້ວ່າປະຊາຊົນທັງຫລາຍກຳລັງຄິດວ່າ ຍ້ອນພິທີການທີ່ພວກເຂົາໄດ້ກະທຳພຣະເຈົ້າຈະຕ້ອງປົກປັກຮັກສາພວກເຂົາ. ໃນພຣະຄັມພີມີພຣະສັນຍາຂອງພຣະເຈົ້າຢ່າງຫລວງຫລາຍ; ພວກເຮົາຄວນທ່ອງຈຳໄວ້ແລະດຳເນີນຊີວິດເພື່ອໃຫ້ຄຳສັນຍາເຫລົ່ານັ້ນສຳເຣັດໃນຊີວິດ. ແຕ່ພຣະເຈົ້າບໍ່ໄດ້ຊົງສັນຍາວ່າຈະບໍ່ໃຫ້ພວກເຮົາພົບຄວາມຍາກລຳບາກ. ບັນພະບຸຣຸດໃນພຣະຄັມພີແຕ່ລະຄົນໄດ້ພົບກັບຄວາມຍາກລຳບາກ; ແມ່ນແຕ່ອົງພຣະເຢຊູເອງກໍຍັງໄດ້ພົບຄວາມລຳບາກ. ພຣະທັມໂຢບໄດ້ສອນພວກເຮົາວ່າຄວາມຍາກລຳບາກບໍ່ໄດ້ມາຈາກພຣະເຈົ້າ. ໂຣມ 8:28 ຍັງເຕືອນພວກເຮົາວ່າພຣະເຈົ້າສາມາດເຮັດໃຫ້ທຸກຢ່າງເປັນຜົນດີໃນຊີວິດຂອງຜູ້ທີ່ພຣະອົງຊົງເອີ້ນຕາມພຣະປະສົງຂອງພຣະອົງ. ຄວາມຍາກລຳບາກບໍ່ແມ່ນຜົນຂອງການບໍ່ເຊື່ອຟັງ. ພຣະຜູ້ເປັນເຈົ້າຊົງເຕືອນພວກເຮົາວ່າພຣະອົງຈະຊົງຢູ່ນຳພວກເຮົາເພື່ອປົກປ້ອງຄຸ້ມຄອງພວກເຮົາໃນທຸກໆຢ່າງທີ່ເຮົາຈະປະສົບໃນຊີວິດ (ເຢເຣມີຢາ 1:19; ມັດທາຍ 28:20; ເຮັບເຣີ 13:5).

ເຢເຣມີຢາສັ່ງປະຊາຊົນໃຫ້ພາກັນກັບໄປຍັງເມືອງຊີໂລ (7:12). ຊີໂລເປັນຄຳເຕືອນວ່າວິຫານອາດຈະຖືກທຳລາຍ. ຊີໂລເຄີຍເປັນສູນກາງສຳລັບນະມັສການໃນສມັຍຂອງໂຢຊວຍ(ໂຢຊວຍ 18:1).ປະຊາຊົນພາກັນເຊື່ອວ່າຫີບຄຳໝັ້ນສັນຍາຈະປົກປັກຮັກສາພວກເຂົາ ເຖິງເຂົາຈະປະພຶດຕົວແນວໃດກໍຕາມ. ໃນສມັຍທີ່ລູກຊາຍຜູ້ຊົ່ວຊ້າຂອງເອລີ ຊື່ໂຮຟະນີ ແລະ ຟີເນຮາ ເປັນປະໂລຫິດ, ພວກຟີລິສຕິນໄດ້ເຮັດເສິກຕໍ່ສູ້ຊົນຊາດອິສຣາເອັນ. ພວກເຂົາໄດ້ເອົາຊະນະຊາວອິສຣາເອັນ ແລະໄດ້ຍຶດເອົາຫີບຄຳໝັ້ນສັນຍາທີ່ໄດ້ເກັບຮັກສາໄວ້ທີ່ເມືອງຊີໂລ (1 ຊາມູເອນ 4). ເຢເຣມີຢາກ່າວເຖິງເມືອງຊີໂລ ເພາະເຂົາຢາກເຕືອນປະຊາຊົນວ່າ ພຣະເຈົ້າເຄີຍປະຕິເສດສະຖານທີ່ທີ່ພຣະອົງໄດ້ສະຖິດຢູ່ເພາະຄວາມຊົ່ວຊ້າສາມານຂອງໄພ່ພົນຂອງພຣະອົງ.

<u>ຜົນຂອງການເທສນາ (26:7-24)</u>

ປະຊາຊົນທັງຫລາຍບໍ່ມັກຖ້ອຍຄຳຂອງເຢເຣມີຢາ. ພວກເຂົາຫຸ້ມຈັບລາວແລະເວົ້າວ່າ, "ເຈົ້າຄວນຖືກຂ້າຍ້ອນຄວາມເວົ້າຂອງເຈົ້າ"(26:8). ໃນທ່າມກາງປະຊາຊົນທັງຫລາຍຍັງມີພວກປະໂລຫິດແລະຜູ້ປະກາດພຣະຄຳທີ່ເຄີຍບອກຄົນທັງຫລາຍວ່າຈະບໍ່ມີເຫດຮ້າຍສິ່ງໃດເກີດຂຶ້ນກັບພວກເຂົາ. ພວກເຂົາຄິດວ່າເຖິງພວກເຂົາຈະເຮັດບາບປານໃດກໍຕາມ ພຣະຜູ້ເປັນເຈົ້າຈະຕ້ອງປົກປັກຮັກສາເມືອງ ທີ່ພຣະວິຫານຂອງພຣະອົງໄດ້ຕັ້ງຢູ່. ຄົນທັງຫລາຍຕູ່ຫາວ່າເຢເຣມີຢາໄດ້ໃສ່ຮ້າຍເມືອງຂອງພວກເຂົາ.

ພວກປະໂລຫິດແລະຜູ້ປະກາດໄດ້ນຳເຢເຣມີຢາໄປຂຶ້ນສານຕໍ່ໜ້າພວກຜູ້ນຳ. ເຢເຣມີຢາກ່າວກັບພວກເຂົາທັງຫລາຍວ່າສິ່ງທີ່ລາວໄດ້ເວົ້ານັ້ນແມ່ນມາຈາກພຣະຜູ້ເປັນເຈົ້າ ແລະຖ້າພວກເຂົາສັງຫານລາວພວກເຂົາກໍຈະທຳຜິດຖານຂ້າຄົນບໍ່ມີຄວາມຜິດ(26:15). ຫລາຍໆຄົນເຄີຍຖືກຄະດີເພາະການເຮັດໃນສິ່ງທີ່ຖືກຕ້ອງ. ສະນັ້ນຄົນສ່ວນຫລາຍບໍ່ຢາກຈະເວົ້າຄວາມຈິງເພາະຢ້ານມີເຣື່ອງ; ຜົນສຸດທ້າຍໂລກກໍຈະເຕັມໄປດ້ວຍຄວາມອະທັມ. ຄຣິສຕຽນທີ່ເຊື່ອໃນພຣະທັມຂອງພຣະເຈົ້າຄວນຈະເວົ້າແຕ່ຄວາມຈິງ ເຖິງວ່າຄວາມຈິງນັ້ນຈະເຮັດໃຫ້ຄົນອື່ນໆບໍ່ນິຍົມຊົມຊອບພວກເຮົາ.

ເຢເຣມີຢາເກີດຄວາມສະບາຍໃຈເມື່ອເຂົາໄດ້ຍິນພວກຜູ້ນຳເວົ້າວ່າ, "ຊາຍຄົນນີ້ໄດ້ເວົ້າກັບພວກເຮົາໃນນາມຂອງພຣະຜູ້ເປັນເຈົ້າຂອງພວກເຮົາ; ລາວບໍ່ສົມຄວນຖືກສັງຫານ" (26:16). ເຖິ້າແກ່ຄົນນຶ່ງໄດ້ເວົ້າເຖິງຜູ້ປະກາດພຣະທັມມີກາ

(26:17) ແລະຄຳທຳນວາຍຂອງລາວເຣື່ອງການທຳລາຍເຢຣູຊາເລັມ (ມີກາ 3:12). ທ່ານໄດ້ເຕືອນປະຊາຊົນວ່າກະສັດເຮເຊກີຢາບໍ່ໄດ້ປະຫານຊີວິດມີກາ ແຕ່ພຣະອົງກັບໄດ້ຢຳເກງພຣະເຈົ້າເມື່ອໄດ້ຍິນການເຕືອນ. ພວກເຂົາຍັງໄດ້ເວົ້າເຖິງຊາຍອີກຜູ້ນຶ່ງທີ່ຊື່ວ່າອຸຣີຢາຊຶ່ງຖືກກະສັດຢາໂຮຍອາກີມປະຫານຊີວິດເພາະການທຳນວາຍຕໍ່ສູ້ເມືອງ. ພວກເຖົ້າແກ່ໄດ້ເວົ້າເຖິງເຣື່ອງດັ່ງກ່າວເພື່ອເປັນການປຽບທຽບໃຫ້ທຸກຄົນໄດ້ຮູ້ຄວາມແຕກຕ່າງກັນຣະຫວ່າງກະສັດເຮເຊກີຢາ ແລະກະສັດເຢໂຮຍອາກີມ ເມື່ອພວກເພິ່ນໄດ້ຍິນຄຳເຕືອນຂອງຜູ້ປະກາດພຣະທັມ.

ໃນທີ່ສຸດເຢເຣມີຢາກໍໄດ້ຮັບການປົດປ່ອຍແລະໄດ້ຢູ່ໃນຄວາມຄຸ້ມຄອງຂອງອາຣີກຳ (26:24). ບັນຫາສຳລັບເຢເຣມີຢາຍັງມີອີກຢ່າງຫລວງຫລາຍແຕ່ພຣະເຈົ້າຊົງຮັກສາຊີວິດຂອງເຂົາໄວ້. ເຢເຣມີຢາພົບຄວາມປອດພັຍຂອງເພິ່ນຢູ່ທີ່ຄວາມສັມພັນທີ່ມີກັບພຣະເຈົ້າ ແລະບໍ່ໄດ້ຢູ່ທີ່ສະຖານທີ່ນະມັສການ. ຄວາມປອດພັຍຂອງພວກເຮົາກໍເຊັ່ນດຽວກັນ; ພວກເຮົາຈະຕ້ອງຍອມຮັບວ່າຄວາມປອດພັຍຂອງພວກເຮົາບໍ່ໄດ້ຢູ່ທີ່ການປ້ອງກັນປະເທດ, ສະຖານທີ່ນະມັສການ, ພຣະຄັມພີ, ຫລືວິທີການຕ່າງໆ; ແຕ່ຄວາມປອດພັຍຂອງພວກເຮົາຢູ່ທີ່ຄວາມສັມພັນທີ່ເຮົາມີກັບພຣະເຢຊູຄຣິດ ແລະການດຳເນີນຊີວິດທີ່ບໍຣິສຸດເພື່ອພຣະອົງ. ພຣະເຢຊູເທົ່ານັ້ນທີ່ຈະສາມາດຊ່ວຍພວກເຮົາໄດ້ໃນເວລາຄັບຂັນ.

<u>ຄຳຖາມ:</u>

1. ມີການປະຕິຮູບແນວໃດແດ່ທີ່ພຣະເຈົ້າຢາກຈະເຫັນໃນຊີວິດຂອງທ່ານ?
2. ພິຈາຣະນາເບິ່ງຄຳກ່າວຫາໃນ ເຢເຣມີຢາ 7:5-9. ມີແນວໃດແດ່ທີ່ຖືກກັບຊີວິດຂອງທ່ານແລະການຮັບໃຊ້?
3. ທ່ານຮູ້ສຶກວ່າພຣະວິນຍານບໍຣິສຸດລົງໂທດທ່ານແນວໃດແດ່ສຳລັບຄວາມບາບໃນຊີວິດຂອງທ່ານ ເມື່ອທ່ານໄດ້ເມີນເສີຍຕໍ່ພຣະເຈົ້າເພື່ອຈະເຮັດຕາມໃຈຕົວເອງ?
4. ພວກເຮົາລັກພຣະເຈົ້າວິທີໃດແດ່?
5. ທ່ານຈະຊ່ວຍຄົນອື່ນໆໃຫ້ເຫັນຄວາມສັມພັນຣະຫວ່າງພຣະທັມແລະຊີວິດໄດ້ແນວໃດ ເມື່ອເວລາມີການຕໍ່ຕ້ານຄຳເທສນາ ຫລື ບົດຮຽນພຣະຄັມພີ?

# ບົດຮຽນທີ 10
# ຕັກເຕືອນເຈົ້າຊີວິດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 22:1-5, 13-17; 23:9-18

ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ເຢເຣມີຢາ 22:1--23:40

ຈຸດສຳຄັນຂອງບົດຮຽນນີ້: ຜູ້ນຳເປັນຜູ້ຮັບຜິດຊອບແລະເຫັນພ້ອມໃນການຊົງນຳຂອງອົງພຣະຜູ້ເປັນເຈົ້າ.

ຄຳຖາມເພື່ອການສຳຮວດ ພຣະເຈົ້າຊົງໃຫ້ທ່ານມີຄວາມເຊື່ອໃນການຮັບຜິດຊອບແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຈົ້າມີພຣະປະສົງໃຫ້ຜູ້ນຳທຸກຄົນເຂັ້ມແຂງ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂະຫຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້
- ເຫັນທຸກຄົນເປັນສິພຣະທັດຂອງອົງພຣະຜູ້ເປັນເຈົ້າ.
- ເສີມສ້າງຄອບຄົວໃຫ້ເຂັ້ມແຂງ.
- ຝຶກຫັດ, ສິດສອນໃຫ້ການເປັນຜູ້ຮັບໃຊ້

ຂ້າພະເຈົ້າມີໂອກາດໄປເບິ່ງລູກທີ່ປະຖົມສຶກສາໃກ້ບ້ານຂ້າພະເຈົ້າ, ຕາມປົກກະຕິຄຣູຈະແຕ່ງຜູ້ນຶ່ງເປັນຫົວໜ້ານຳແຖວນັກຮຽນພາຍໃນຫ້ອງນັ້ນກັບຄືນສູ່ຫ້ອງຮຽນຫລັງຈາກກິນເຂົ້າທ່ຽງ. ວັນນັ້ນມີນັກຮຽນຄົນນຶ່ງທີ່ຢືນຢູ່ເປັນຜູ້ສຸດທ້າຍຄິດແລະເວົ້າຂຶ້ນດ້ວຍສຽງດັງວ່າ "ຂ້ອຍເປັນຫົວໜ້າ" ພໍຄຣູໄດ້ຍິນກໍເອີ່ຍປາກວ່າ "ໃຫ້ເຈົ້າເປັນຫົວໜ້າທີ່ຍ່າງຕາມຫລັງ, ເບິ່ງບໍ່ໃຫ້ໃຜອອກນອກແຖວ" ວ່າແລ້ວເດັກຄົນນັ້ນກໍຮັບເອົາໜ້າທີ່ນັ້ນທັນທີ. ດ້ວຍເຫດນີ້ນັກຮຽນທັງໝົດຈຶ່ງຍ່າງໄປຮອດຫ້ອງຮຽນໂດຍບໍ່ມີໃຜຕົກເຮັ່ຽເສັຽຫາຍຈັກຄົນເລີຍ. ການເປັນຜູ້ນຳບາງຄັ້ງອາດຈຳຕ້ອງອອກໜ້າ ແລະບາງຄັ້ງຕ້ອງຢູ່ຂ້າງຫລັງເຫມືອນຄົນຢົວລ້ຽງແກະບາງຄັ້ງອອກໜ້າ ແລະບາງຄັ້ງຢູ່ຂ້າງຫລັງເພື່ອຄວາມແນ່ໃຈວ່າແກະທຸກຕົວຍັງຢູ່ດ້ວຍກັນ.

ເຢເຣມີຢາຕໍ່ໜ້າເຈົ້າຊີວິດ (22:1-5)

ຫລັງຈາກເຈົ້າຊີວິດເຢໂຮຍອາກິມເຈົ້າຊີວິດຄົນໃຫມ່ຂຶ້ນປົກຄອງບໍ່ນານເທົ່າໃນພຣະເຈົ້າກໍໃຊ້ເຢເຣມີຢາຜູ້ປະກາດພຣະທັມຂອງພຣະເຈົ້າໃຫ້ໄປຫາກະສັດເຢໂຮຍອາກິມກະສັດແຫ່ງຢູດາຜູ້ຊຶ່ງເປັນເຊື້ອສາຍຂອງດາວິດ. ເມື່ອໄປເຖິງແລ້ວເຢເຣມີຢາມີໜ້າທີ່ກ່າວສິ່ງທີ່ພຣະເຈົ້າໄດ້ຊົງບອກໃຫ້ເພິ່ນເວົ້າ. ໃນການໄປຂອງເຢເຣມີຄັ້ງນີ້ແນ່ນອນບໍ່ແມ່ນໄປຢ້ຽມຢາມເຫມືອນເຮົາທັງຫລາຍໄປຢ້ຽມຢາມຫມູ່ເພື່ອນຂອງເຮົາ, ແຕ່ເພິ່ນໄປເພື່ອໄປບອກສອນ, ຕັກເຕືອນເຈົ້າຊີວິດທີ່ໄດ້ເຮັດຜິດ.

ກ. ໃນການໄປຢ້ຽມຢາມຂອງເຮົາໃນທຸກວັນນີ້ໂດຍສະເພາະແມ່ນການຢ້ຽມຢາມສະມາຊິກໃນຄຣິສຕະຈັກຂອງພວກເຮົາ. ສ່ວນຫລາຍເຮົາຈະເຫັນເຈົ້າຂອງບ້ານມີນ້ຳເຢັນມາຕ້ອນຮັບ, ຫລືກາເຟຮ້ອນໆໃນຣະດູໜາວ ຫລື

ບາງຄັ້ງກໍມີຣອດພາເຂົ້າຕ້ອນຮັບອີກດ້ວຍ. ຈົນລາງຄົນໃນກຸ່ມຄຣິສຕຽນພວກເຮົາມັກຈະກັບຄືນໄປເຮືອນຫລັງນັ້ນ ແລະຢູ່ດົນນານເພາະຄາພາເຂົ້າສາມັກຄີ.

ຂ. ສ່ວນຜູ້ປະກາດພຣະທັມເຢເຣມີຢາເມື່ອໄປເຖິງເພິ່ນບໍ່ໄດ້ບອກວ່າ ເພິ່ນໄປເພື່ອອ້ອນວອນໃຫ້ເຈົ້າຊີວິດມີສຸຂະພາບແຂງແຮງ ຫລືໄປອວຍພຣະພອນໃຫ້ປະເທດຊາດບ້ານເມືອງຂອງເຈົ້າຊີວິດອົງນັ້ນຢູ່ເຢັນເປັນສຸຂ ແຕ່ເພິ່ນໄປເພື່ອກ່າວຕັກເຕືອນເຈົ້າຊີວິດໃຫ້ເປັນຄົນສັດຊື່ແລະແນະນຳດັ່ງນີ້;

1. ໃຫ້ປົກປ້ອງຜູ້ທີ່ຖືກສໍ້ໂກງຕົວະຍົວະ.
2. ຢ່າກົດຂີ່ຂົ່ມເຫັງຄົນຕ່າງດ້າວ ຣວມທັງເດັກກຳພ້າ, ຫລືແມ່ຫມ້າຍ.
3. ຢ່າຂ້າຄົນບໍ່ມີຄວາມຜິດ.

ຄ. ນີ້ແມ່ນຄຳເຕືອນຂອງພຣະເຈົ້າ(ບໍ່ແມ່ນຂູ່ໃຫ້ຢ້ານ) ຫາກເຈົ້າຊີວິດປະຕິບັດຕາມຄຳເຕືອນນີ້ເຊື້ອສາຍຂອງເພິ່ນຈະໄດ້ສືບຕໍ່ເປັນກະສັດຕໍ່ໄປ, ຫາກບໍ່ປະຕິບັດຕາມຄຳເຕືອນພຣະຣາຊວັງຈະລົ້ມລະລາຍ.

ງ. ເຢເຣມີຢາມີຄວາມຢ້ານເຈົ້າຊີວິດເພາະເຈົ້າຊີວິດເປັນຜູ້ມີອຳນາດ ແລະເປັນຜູ້ສັ່ງການຕ່າງໆເທົ່ານັ້ນ. ບໍ່ແມ່ນເປັນຮັບຄຳສັ່ງ. ແຕ່ເຢເຣມີຢາມີຄວາມຢຳເກງພຣະເຈົ້າຫລາຍກວ່າຢ້ານເຈົ້າຊີວິດ. ໃນຖານະທີ່ເຮົາທັງເປັນຜູ້ຮັບໃຊ້ພຣະເຈົ້າຈົ່ງເບິ່ງຕົວຢ່າງເຢເຣມີຢາ ແຕ່ເຮົາຄວນຣະມັດຣະວັງໃນການກ່າວເຕືອນຄົນທັງຫລາຍ ໂດຍໃຊ້ຄຳເວົ້າໃຫ້ເຫມາະສົມ.

<u>ເຢເຣມີຢາກ່າວເຣື່ອງເຈົ້າຊີວິດ</u> ( ຂຂ:13-17)

ທຸກຄົນເກີດມາໃນໂລກບໍ່ມີໃຜເຮັດຖືກຫມົດທຸກປະການ ສິ່ງສຳຄັນແມ່ນວ່າຫາກເຮົາເຮັດຜິດແລ້ວມີຄົນມາບອກນັ້ນເຮົາຈະຍອມຮັບຫລືບໍ່? ເຢເຣມີຢາ ກ່າວເຖິງເຈົ້າຊີວິດອົງກ່ອນມີຄວາມຊົມຊື່ນຍິນດີ ຊອບທັມທ່ຽງທັມ. ເພິ່ນໄດ້ຕັດສິນຄະດີການຢ່າງທ່ຽງທັມ. ເວລານີ້ເຈົ້າຊີວິດ ເຢໂຮຍອາກິມກໍເປັນລູກຂອງເຈົ້າຊີວິດອົງກ່ອນ ແຕ່ບໍ່ໄດ້ເຮັດຄືພໍ່ຂອງເພິ່ນ. ໃນບົດຮຽນນີ້ເຮົາເຫັນເຈົ້າຊີວິດ ເຢໂຮຍອາກິມ ເຮັດຜິດຢ່າງໃຫຍ່ຄື;

1: ສ້າງພຣະຣາຊວັງຂອງຕົນເອງຢ່າງກວ້າງຂວາງ ແລະສວຍງາມຢ່າງບໍ່ສັດຊື່ (ຂໍ້ 13ກ).
2. ເພິ່ນບໍ່ໄດ້ຈ່າຍຄ່າແຮງງານໃຫ້ກັບຄົນງານ (ຂໍ້ 13ຂ).
3. ເວົ້າຈາສຳຫາວ (ຂໍ້ 14).
4. ເພິ່ນບໍ່ເດີນຕາມທາງຂອງພໍ່ເພິ່ນທີ່ເປັນເຈົ້າຊີວິດອົງກ່ອນ (ຂໍ້ 15-16).
5. ເຢເຣມີຢາບອກເຈົ້າຊີວິດເຢໂຮຍອາກິມວ່າເພິ່ນເປັນເຈົ້າຊີວິດທີ່ເຫັນແກ່ປໂຍດສ່ວນຕົວ, ກົດຂີ່ຂົ່ມເຫັງ, ເຂັ່ນຂ້າຄົນບໍ່ມີຄວາມຜິດ (ຂໍ້ 17).

ທ່ານແລະຂ້າພະເຈົ້າຄົງບໍ່ແມ່ນເຈົ້າຊີວິດແນ່ນອນ ແຕ່ຫລາຍເທື່ອເຮົາກໍຄິດແລະເປັນຄືເຈົ້າຊີວິດ ຢາໂຮຍອາ ກິມ.
1. ເຮົາຄິດໃນໃຈວ່າຈະໃຫ້ເຮືອນຂອງເຮົາ ຫລືສິ່ງຂອງໃຊ້ໃນເຮືອນເຮົາມີຍີ່ຫໍ້ພ້ອມຣາຄາແພງກວ່າຄົນອື່ນໃນໂບດ.
2. ບາງຄັ້ງ ເຮົາໄດ້ຈ້າງໃຜຜູ້ນຶ່ງມາເຮັດສິ່ງໃດສິ່ງນຶ່ງໃນບ້ານເຮົາແຕ່ເຮົາຈ່າຍຄ່າແຮງຕໍ່າເກີນກວ່າທັມະດາ.
3. ເຮົາອາຈເວົ້າຢ່າງບໍ່ຖ່ອມຕົວຕໍ່ພຣະພັກພຣະເຈົ້າ.
4. ເຮົາບໍ່ໄດ້ປະຕິບັດຕາມຄຳສອນຈາກພຣະຄັມພີ.
5. ເຮົາອາຈເປັນຄົນເຫັນແກ່ປໂຍດສ່ວນຕົວ ໂດຍບໍ່ຄຳນຶງເຖິງຄວາມລຳບາກຜູ້ອື່ນ.

ວັນນີ້ບົດຮຽນນີ້ມາເຖິງພວກເຮົາແລ້ວ ເຮົາທັງຫລາຍສົມຄວນພິຈາຣະນາຕົວເອງ ຢ່າເຮັດຄືເຈົ້າຊີວິດ ອາໂຮຍຢາກິມເມື່ອຖືກຜູ້ຮັບໃຊ້ພຣະເຈົ້າມາຕັກເຕືອນເພິ່ນກໍບໍ່ຍອມກັບໃຈເລີຍ, ແຕ່ເພິ່ນໄດ້ແກ້ຕົວແນວນັ້ນແນວນີ້. ເຮົາທັງຫລາຍຈົ່ງຄິດວ່າເຢເຣມີຢາບໍ່ແມ່ນແຕ່ເຕືອນ ອາໂຮຍຢາກິມເທົ່ານັ້ນ ເພິ່ນຍັງເຕືອນເຮົາເຊັ່ນດຽວກັນ.

<u>ເຢເຣມີຢາກ່າວຜູ້ປະກາດຈອມປອມ </u>(ຂ3:9-18).

ເຢເຣມີຢາມີຄວາມສຳພັນໃກ້ຊິດກັບພຣະເຈົ້າເປັນປະການແຮກ ດັ່ງນັ້ນພະລັງໃນການປະກາດຕັກເຕືອນທີ່ພຣະເຈົ້າໃຊ້ໃຫ້ທ່ານໄປເວົ້າຈຶ່ງມີອຳນາດ. ທ່ານບໍ່ໄດ້ເວົ້າກັບເຈົ້າຊີວິດເພື່ອຊ່ອຍພາຣະກິດພຣະເຈົ້າແຕ່ຢ່າງໃດ. ເພາະພຣະເຈົ້າບໍ່ຕ້ອງການຄວາມຊ່ວຍເຫລືອຈາກຜູ້ໃດ. ເຢເຣມີຢາໄດ້ໃຊ້ຄຳເວົ້າທີ່ມາຈາກພຣະເຈົ້າໃຫ້ເຈົ້າຊີວິດຟັງ. ດັ່ງນັ້ນຄຳເວົ້າທຸກຄຳທີ່ອອກມາຈາກປາກຂອງເຢເຣມີຢາຈຶ່ງມີອຳນາດ.

ເຢເຣມີຢາເຫັນບັນດາປະຊາກອນຂອງພຣະເຈົ້າເຮັດຜິດຫລາຍປະການ ທ່ານຈຶ່ງກ່າວຕິຕຽນຜູ້ປະກາດພຣະທັມໃນເມືອງນັ້ນເພາະທ່ານຮູ້ດີວ່າການຜິດພາດເລົ່ານີ້ແມ່ນຄວາມຜິດຂອງຜູ້ປະກາດພຣະທັມຈອມປອມນີ້ເອງ. ພວກເຂົາພາກັນເວົ້າເອົາໃຈຜູ້ຟັງເພື່ອເຂົາຈະໄດ້ຮັບຄວາມນິຍົມຊົມຊອບ, ເຂົາກ່າວໃນນາມຂອງພຣະບາອານກໍວ່າດີ ດັ່ງນັ້ນ ຄົນໃນເມືອງນັ້ນຈຶ່ງກາຍເປັນຄົນຂາບໄຫວ້ພຣະເຈົ້າແລະພຣະບາອານດ້ວຍ. ເມື່ອປຽບທຽບໃສ່ເຢເຣມີຢາແລ້ວທ່ານ ເອງເປັນຄົນທີ່ບໍ່ມີຊື່ສຽງຫລືນິຍົມຈາກຜູ້ຟັງເພາະທ່ານໄດ້ກ່າວວ່າ ພວກປະຊາຊົນແລະຜູ້ປະກາດພຣະທັມເຮັດຜິດກັນຫມົດ. ເຫດຜົນສີ່ຢ່າງທີ່ເຢເຣມີຢາຕິຕຽນຜູ້ປະກາດພຣະທັມ;

1. ພວກເຂົາປະກາດພຣະທັມແຫ່ງຄວາມຈິງ ສ່ວນຕົວເຂົາບໍ່ປະຕິບັດຕາມຄວາມຈິງ.
2. ພວກເຂົາກ່າວພຣະທັມເພື່ອໃຫ້ຜູ້ຟັງຖືກໃຈ ໂດຍບໍ່ຕຳຫນິເມື່ອເຂົາເຮັດຜິດ.
3. ເຂົາກ່າວເລື້ອຍໆວ່າບໍ່ຈຳເປັນຕ້ອງປະຕິບັດຫມົດທຸກຢ່າງທີ່ພຣະເຈົ້າສັ່ງ.
4. ເຂົາສ້າງຊື່ສຽງຕົນເອງໂດຍໃຊ້ພຣະທັມພຣະເຈົ້າເຂົ້າແອບແຝງ.

ຂໍ້ 14 ເຢເຣມີຢາໄດ້ປຽບທຽບຄົນໃນເມືອງນີ້ໃສ່ເມືອງໂຊໂດມມີຄວາມຊົ່ວຊ້ຳກັນ (ປຖກ 19:23-24). ເຢເຣມີຢາໄດ້ກ່າວເຕືອນຜູ້ປະກາດພຣະທັມໂດຍປຽບທຽບພວກຜູ້ປະກາດພຣະທັມ ແລະພົລເມືອງໃນເມືອງນີ້ບໍ່ແຕກຕ່າງຫຍັງກັບຄົນໃນເມືອງໂຊໂດມ ແລະເມືອງໂກໂມຣາທີ່ພຣະເຈົ້າໄດ້ທຳລາຍມາແລ້ວເນື່ອງດ້ວຍຄວາມຊົ່ວຂອງພວກເຂົາ. ຄຳວ່າຫລິ້ນຊູ້ທີ່ເຢເຣມີຢາໄດ້ກ່າວຫມາຍເຖິງພວກເຂົາມີພຣະອື່ນຫລືເຂົາຂາບໄຫວ້ນະມັສການພຣະອື່ນນອກຈາກອົງພຣະຜູ້ເປັນເຈົ້າອົງທ່ຽງແທ້ ແລະນອກຈາກນັ້ນພວກເຂົາກໍມີການຫລິ້ນຊູ້ທາງເພດຊາຍຍິງອີກ. ດ້ວຍເຫດນີ້ເຢເຣມີ ຢາຈຶ່ງກ່າວຢ່າງແຂງແຮງຕໍ່ພວກຜູ້ປະກາດພຣະທັມໃນເມືອງນັ້ນ.

ຂໍ້ 15 ພວກຜູ້ປະກາດພຣະທັມແລະພວກເຈົ້ານາຍບໍ່ຍອມຮັບຄຳຕັກເຕືອນຂອງເຢເຣມີຢາ, ພວກເຂົາພໍໃຈທີ່ຈະ ດຳເນີນຕາມສິ່ງທີ່ເຂົາໄດ້ປະຕິບັດກັນມາ ດັ່ງນັ້ນເຢເຣມີຢາຈຶ່ງກ່າວແກ່ເຂົາໃນນາມອົງພຣະຜູ້ເປັນເຈົ້າວ່າ "ເຮົາຈະ ໃຫ້ເຂົາໄດ້ກິນພືດຂົມນາງຊະນິດແລະໃຫ້ນ້ຳພິດແກ່ເຂົາໄດ້ດື່ມ ເພາະພວກຜູ້ປະກາດພຣະທັມໃນກຸງເຢຣູຊາເລັມໄດ້ແຜ່ ຄວາມບໍ່ຢຳເກງພຣະເຈົ້າໄປ ທົ່ວປະເທດ"

ຂໍ້ 16-18 ເຢເຣມີຢາກ່າວຕໍ່ໄປວ່າ ພຣະຜູ້ເປັນເຈົ້າຊົງຣິດອຳນາດຍິ່ງໃຫຍ່ໄດ້ກ່າວແກ່ຊາວກຸງເຢຣູຊາເລັມວ່າ ຢ່າສູ່ຟັງພວກຜູ້ປະກາດພຣະຄັມເວົ້າ ພວກເຂົາໃຫ້ຫມູ່ເຈົ້າເຕັມໄປດ້ວຍຄວາມຫວັງອັນຈອມປອມ ພວກເຂົາບອກຫມູ່ເຈົ້າໃນສິ່ງທີ່ພວກເຂົາໄດ້ປັ້ນແຕ່ງຂຶ້ນມາເອງ ແຕ່ບໍ່ແມ່ນສິ່ງທີ່ເຮົາບອກ. ພຣະເຈົ້າເຕືອນຊາວເມືອງບໍ່ໃຫ້ຟັງພວກຜູ້ປະກາດພຣະທັມເຫລົ່ານັ້ນເພາະເຂົາກ່າວຢ່າງນຶ່ງເຂົາເຮັດຢ່າງນຶ່ງ ແລະພວກຜູ້ປະກາດພຣະທັມເຫລົ່ານັ້ນບໍ່ສາມາດຮັບປະກັນ ໃນເຣື່ອງຂອງພຣະເຈົ້າໄດ້ແຕ່ປະການໃດ.

<u>ຄຳຖາມ</u>

1. ທ່ານໄດ້ຊ່ອຍຄົນທີ່ບໍ່ສາມາດຊ່ອຍຕົນເອງຢ່າງໃດແດ່?

ຂ. ເມື່ອຄົນອື່ນຊ່ອຍທ່ານໃນດ້ານການງານຕ່າງໆທ່ານຄວນຈະເຮັດສິ່ງໃດຕອບແທນໃນເວລາອັນໃກ້ໆນີ້?

3. ການຢູ່ກິນແບບຕົວະຕົນເອງມີລັກສະນະແນວໃດ?

4. ທ່ານຈະຮູ້ໄດ້ແນວໃດວ່າແມ່ນພຣະທັມພຣະເຈົ້າທີ່ທ່ານໄດ້ຟັງແຕ່ລະວັນອາທິດ?

5. ທ່ານຈະເຮັດແນວໃດເພື່ອຈະຟັງແລະປະຕິບັດຕາມພຣະທັມພຣະເຈົ້າເລີ້ມແຕ່ມື້ນີ້ເປັນຕົ້ນໄປ?

# ບົດຮຽນທີ 11
# ຮັບໃຊ້ດ້ວຍໃຈກ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 37:1-17; 38:14-23

ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ເຢເຣມີຢາ 37:1--39:10

ຈຸດສຳຄັນຂອງບົດຮຽນນີ້: ໄວ້ວາງໃຈໃນການຊົງນຳຂອງອົງພຣະຜູ້ເປັນເຈົ້າ

ຄຳຖາມເພື່ອການສຳຫລວດ ເປັນຫຍັງຄົນທັງຫລາຍຈຶ່ງບໍ່ຍອມຮັບພຣະທັມພຣະເຈົ້າ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຫາທາງໃຫ້ເຮົາເປີດກວ້າງວາງໃຈໃນການຊົງນຳ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຊັກຊວນໄພ່ພົລຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້

ເປັນຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າຈຳເປັນຕ້ອງອົດທົນຕໍ່ຄວາມຍາກລຳບາກຕ່າງໆນາໆ, ເມື່ອຍາມຍາກລຳບາກເຮົາມັກຈະໄປປຶກສາກັບເພື່ອນຝູງ ແລະແນ່ນອນເພື່ອນຝູງຂອງເຮົາຈະມີຄຳແນະນຳຕ່າງໆ ແຕ່ຕ້ອງຄຳນຶງເຖິງວິທີທາງຂອງອົງພຣະຜູ້ເປັນເຈົ້າບໍ່ຄືວິທີທາງຂອງມະນຸດ ດັ່ງນັ້ນເຮົາຕ້ອງຣະມັດຣະວັງໃນການຫາທີ່ປຶກສາ. ໃນໂອກາດຕໍ່ໄປນີ້ເຮົາຈະຮຽນເຖິງກະສັດອົງນຶ່ງມີຂ້າຣາຊການເປັນທີ່ປຶກສາທີ່ຜິດແຕ່ເພິ່ນເຮັດຕາມ ສ່ວນທີ່ປຶກສາທີ່ຖືກຊຶ່ງເປັນຜູ້ຖືກສົ່ງມາຈາກອົງພຣະຜູ້ເປັນເຈົ້ານັ້ນ ເພິ່ນຊ້ຳບໍ່ເຮັດຕາມ.

ເລີ້ມຕົ້ນເຫດການ (37:1-5)

ຫລັງຈາກເຈົ້າຊີວິດອາໂຮຍຢອາກີມເສັຽຊີວິດໄປ ພວກຂ້າຣາຊະການແລະປະຊາຊົນກໍຍົກເຢໂຄນີຢາລູກຊາຍຂອງເຢໂຮຍອາກີມຂຶ້ນປົກຄອງຢູດາແທນພໍ່. ສ່ວນກະສັດເນບູກາເນັດຊາຜູ້ເປັນກະສັດແຫ່ງບາບີໂລນໄດ້ແຕ່ງ ຕັ້ງເຊເດກີຢາຂຶ້ນເປັນກະສັດແທນເຢໂຄນີຢາ, ແຕ່ກະສັດທີ່ຖືກແຕ່ງຕັ້ງຈາກເນບູກາເນັດຊາ ກັບຫັກຫລັງບໍ່ຟັງຄວາມເນບູກາເນັດຊາແລະພວກຂ້າຣາຊະການຂອງເພິ່ນ ພ້ອມທັງປະຊາຊົນທັງຫລາຍບໍ່ໄດ້ເຊື່ອຟັງພຣະຄຳຂອງອົງພຣະຜູ້ເປັນເຈົ້າແຕ່ປະການໃດ. ເພິ່ນບໍ່ຟັງສິ່ງທີ່ ເຢເຣມີຢາກ່າວໃນນາມຂອງພຣະເຈົ້າ ແຕ່ເພິ່ນຢາກໄດ້ພອນແລະການຄຸ້ມຄອງຂອງພຣະເຈົ້າເພິ່ນຈຶ່ງຂໍຮ້ອງໃຫ້ ເຢເຣມີຢາອ້ອນວອນເພື່ອເພິ່ນ ແຕ່ສ່ວນຈິດໃຈຂອງເພິ່ນນັ້ນມີຄວາມຂົມຂື່ນຕໍ່ ເຢເຣມີຢາ ເມື່ອເຢເຣມີຢາບອກຄວາມຈິງໃນສິ່ງທີ່ຈະເກີດຂຶ້ນ.

ກະສັດອົງໃໝ່ຊື່ ເຊເດກີຢາ ແປວ່າຂອງປະທານຈາກພຣະເຈົ້າ ແຕ່ຊີວິດຂອງເພິ່ນບໍ່ເໝາະສົມກັບຊື່ຂອງເພິ່ນເລີຍ. ຄົນເຮົາໃນສມັຍນີ້ກໍເຊັ່ນກັນ ຊື່ກັບການງານຂອງຄົນນັ້ນມັນຊ່າງໄກກັນແທ້ ບາງຄົນຊື່ດີ ແຕ່ລາວເປັນຄົນບໍ່ດີ, ບາງຄົນຊື່ຈ່ອຍ ແຕ່ວ່າຕຸ້ຍ, ບາງຄົນຊື່ຕຸ້ຍແຕ່ຕົວຜອມໆກໍມີຫລາຍ ດັ່ງນັ້ນຊື່ຂອງຄົນນັ້ນບໍ່ສຳຄັນດອກ ແຕ່ສິ່ງທີ່ສຳຄັນນັ້ນຢູ່ທີ່ໃຈຫາກເຊື່ອໃນພຣະເຈົ້າ, ແມ່ນແຕ່ຄົນຊື່ອ້າຍບາບກໍຍັງດີກວ່າຄົນຊື່ອ້າຍບຸນເມື່ອຈາກໂລກນີ້ໄປແລ້ວເພາະອ້າຍບາບຂຶ້ນໄປຢູ່ສວັນຊັ້ນຟ້າກັບພຣະເຈົ້າ ສ່ວນຜູ້ຊື່ອ້າຍບຸນກໍໄດ້ແຕ່ຊື່ເທົ່ານັ້ນ ໃນຕົວລາວບໍ່ມີບຸນພໍທີ່ຈະເຫັນສວັນຂອງພຣະເຈົ້າ.

ກະສັດເຊເດກີຢາ ແປວ່າຂອງປະທານຈາກພຣະເຈົ້າ ເປັນພຽງຊື່ທີ່ມະນຸດເຮົາໃສ່ເອງເທົ່ານັ້ນ ສ່ວນຂອງປະ

ທານຈາກພຣະເຈົ້າອັນແທ້ຈິງນັ້ນບໍ່ມີມະນຸດຄົນໃດສາມາດສັ່ງເອົາໄດ້. ໃນຂະນະທີ່ເຊເດກີຢາຖືກແຕ່ງຕັ້ງໃຫ້ເປັນກະສັດນັ້ນພຣະເຈົ້າໄດ້ໃຊ້ຜູ້ປະກາດພຣະທັມເຢເຣມີຢາໄປສັ່ງສອນເພິ່ນພ້ອມທັງຂ້າຣາຊການຂອງເພິ່ນ ແຕ່ບໍ່ມີໃຜຟັງສຽງຂອງເຢເຣມີຢາ ມີແຕ່ກະສັດຜູ້ດຽວໄດ້ຂໍໃຫ້ເຢເຣມີຢາ ອ້ອນວອນຂໍໃຫ້ພຣະເຈົ້າໄດ້ອວຍພອນເພື່ອປະເທດຊາດຂອງເພິ່ນ ທັ້ງໆທີ່ເພິ່ນເປັນຄົນບໍ່ຟັງຄວາມພຣະເຈົ້າ

ເຫດການໃນສມັຍນັ້ນຍັງລາມມາຈົນເຖິງພວກເຮົາທັງຫລາຍໃນເວລານີ້ ເຊັ່ນພວກຜູ້ຮັບໃຊ້ພຣະເຈົ້າໄດ້ປະກາດເຣື່ອງຂອງພຣະເຈົ້າຕາມໂບດ ແລະຕາມບ້ານເຮືອນຕລອດເຖິງທີ່ປະຊຸມຕ່າງໆ ເຮົາເຫັນວ່າຫລາຍຄົນມີວຽກຫລາຍຈົນບໍ່ມີເວລາເຂົ້ານະມັສການພຣະເຈົ້າ, ຫລາຍຄົນບໍ່ມີເວລາເຮັດພາຣະກິຈຂອງອົງພຣະຜູ້ເປັນເຈົ້າ ແຖມຍັງເວົ້າ ອີກວ່າ ເບິ່ງກ່ອນຫາກບໍ່ມີຫຍັງເຮັດກໍຈະມາຊ່ອຍດອກອາຈານເຮີຍ. ການທີ່ກ່າວດັ່ງນັ້ນໝາຍຄວາມວ່າເພິ່ນຈະຕ້ອງ ຊອກເຮັດແນວອື່ນກ່ອນຫາກເວລາເຫລືອຈະມາເຮັດວຽກພຣະເຈົ້າ ແຕ່ເມື່ອຄອບຄົວເພິ່ນມີບັນຫາກໍມັກຈະຂໍໃຫ້ອາຈານອ້ອນວອນເພື່ອແດ່.

<u>ນຳຂ່າວຈິງທີ່ບໍ່ໜ້າຟັງ</u> (37:6-17)

ນອກຈາກພຣະເຈົ້າບໍ່ອວຍພອນກະສັດທີ່ບໍ່ຟັງຄວາມແລ້ວ ພຣະອົງຊົງສັ່ງຂ່າວຮ້າຍຜ່ານເຢເຣມີຢາໃຫ້ໄປບອກ ກະສັດ ເຊເດກີຢາ ວ່າກອງທັບຂອງຟາຣາໂອທີ່ມາຊ່ອຍນັ້ນກຳລັງຈະຖອນຄືນ ເມື່ອພວກເຂົາຖອນຄືນແລ້ວພວກສັດຕຣູ ຄືຊາວບາບີໂລນຈະມາໂຈມຕີອີກ, ເມື່ອສັດຕຣູໂຈມຕີທ່ານກະຈະເສັຽຊັຍ ຄືພວກເຂົາຈະຍຶດເອົາເມືອງນີ້ແລະເຜົາໄຟ ຖິ້ມ. ເຖິງແມ່ນທ່ານສາມາດທຳລາຍກອງທັບຂອງຊາວບາບີໂລນໄດ້ຈົນເຂົາພ່າຍແພ້ໄປຍັງດິນແດນຂອງເຂົາ ສ່ວນຜູ້ ທີ່ຖືກບາດເຈັບທີ່ໄປບໍ່ໄດ້ກໍຈະລຸກຂຶ້ນຕໍ່ສູ້ເຜົາເມືອງນີ້ຖິ້ມ. ນີ້ແຫລະແມ່ນຂ່າວຮ້າຍທີ່ພຣະເຈົ້າສັ່ງໃຫ້ເຢເຣມີຢາໄປບອກ ກະສັດເຊເດກີຢາ.

ຕໍ່ມາກອງທັບຂອງສັດຕຣູ (ບາບີໂລນ) ໄດ້ຖອຍອອກຈາກນະຄອນເຢຣູຊາເລັມເພາະເຫັນກອງທັບຍິ່ງໃຫຍ່ຂອງກະສັດຟາຣາໂອເປັນກອງທັບຂອງເອຢິບທີ່ມາຊ່ອຍນັ້ນໄດ້ເຄື່ອນທີ່ເຂົ້າມາໃກ້ ຈຶ່ງເປັນເຫດໃຫ້ສັດຕຣູຕ້ອງລ້າຖອຍເມື່ອສັດຕຣູລ້າຖອຍໄປຄວາມສງົບກໍເກີດມີມາ ໃນຂະນະທີ່ບ້ານເມືອງມີຄວາມສງົບແລ້ວ ເຢເຣມີຢາກໍຢາກເຮັດກິຈການ ສ່ວນຕົວຄືຈະຕ້ອງໄປເມືອງ ອານາໂທດ (ໂຢຊວຍ 21:18) ຊຶ່ງຢູ່ທາງພາກຕາເວັນອອກສຽງເໜືອຂອງກຸງເຢຣູຊາເລັມປະມານສາມໄມ. ໃນຂະນະທີ່ເຢເຣມີຢາກຳລັງເດີນທາງນັ້ນທະຫານຍາມປ້ອມຄົນນຶ່ງກໍຈັບເພິ່ນໃນຂໍ້ກ່າວຫາວ່າໜີຕາມສັດຕຣູໄປ "ເຈົ້າກຳລັງໜີໄປຫາຊາວບາບີໂລນແມ່ນບໍ່?" (ຂໍ້ 13). ເຂົາກ່າວຫາເຢເຣມີຢາເພາະເພິ່ນໄດ້ນຳຂ່າວຮ້າຍມາບອກຕໍ່ພວກເຂົາ ແລະຂ່າວນັ້ນເປັນຂ່າວທີ່ເຂົາບໍ່ຢາກຟັງ.

ເມື່ອເຂົາຈັບເຢເຣມີຢາແລ້ວເຂົາກໍສົ່ງເພິ່ນໄປຫາພວກເຈົ້ານາຍທີ່ມີຄວາມຄຽດແຄ້ນຕັ້ງແຕ່ວັນທີ່ທ່ານໄດ້ນຳຂ່າວຮ້າຍມາພຸ້ນ, ພວກເຂົາໄດ້ຂ້ຽນຕີເພິ່ນແລະກັກຂັງເພິ່ນໄວ້ໃນຫ້ອງມືດໃຕ້ດິນທີ່ເຮືອນຂອງໂຢນາທານຜູ້ເປັນຣາຊເລຂາເປັນເວລາເຫິງນານ. ເມື່ອກະສັດເຊເດກີຢາໄດ້ຂ່າວເຣື່ອງນີ້ ຈຶ່ງສັ່ງໃຫ້ນຳຕົວມາຫາແລ້ວຖາມເຢເຣມີຢາທີ່ລັບລີ້ວ່າ ມີຖ້ອຍຄຳຫຍັງແດ່ທີ່ພຣະຜູ້ເປັນເຈົ້າຊົງບອກ?" (ຂໍ້ 17). ການທີ່ກະສັດເຊເດກີຢາຖາມດັ່ງນັ້ນກໍເພາະເພິ່ນຢ້ານຮູ້ວ່າ ມີຫຍັງຈະເກີດຂຶ້ນຕໍ່ໄປ ແລະໃນເວລາດຽວກັນເພິ່ນກໍ່ຢາກໃຫ້ຜູ້ອື່ນໄດ້ຍິນເຣື່ອງນີ້ດ້ວຍ. ເມື່ອເຮົາສັງເກດເບິ່ງຄັກແລ້ວເຮົາເຂົ້າໃຈວ່າກະສັດກໍມີຄວາມເຊື່ອໃນພຣະເຈົ້າຢູ່ ແຕ່ເພິ່ນຍັງເກງໃຈພວກຂ້າຣາຊການຂອງເພິ່ນທີ່ບໍ່ເຊື່ອໃນພຣະເຈົ້າ. ເຫດການແນວນີ້ກໍຍັງມີຈົນເທົ້າທຸກວັນນີ້ ຄືພວກເຈົ້ານາຍບາງຄົນກໍຢາກເຊື່ອພຣະເຈົ້າຢູ່ແຕ່ຢ້ານເສັຽໜ້າເສັຽຕາ ແລະຊື່ສຽງຈາກວົງສັງຄົມ ດ້ວຍເຫດນີ້ແຫລະພຣະເຢຊູຈຶ່ງກ່າວວ່າ "ຖ້າຜູ້ໃດຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນ ເສັຽແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ ແລ້ວຕິດຕາມເຮົາມາ" (ລູກາ 9:23).

<u>ກະສັດຊອກຫາທາງແກ້ຕົວ</u> (38:14-23)

ມີຊາວເອທິໂອເປັຽຜູ້ນຶ່ງຊື່ເອເບັດເມເລັກ ເປັນຄົນເຮັດການໃນພຣະຣາຊວັງຮູ້ຂ່າວວ່າເຢເຣມີຢາຖືກເຂົາຢ່ອນລົງນ້ຳສ້າງຂີ້ຕົມເປັນເວລາຫລາຍວັນແລ້ວແລະບໍ່ໄດ້ກິນຫຍັງເລີຍ. ດັ່ງນັ້ນເພິ່ນຈຶ່ງໄປທູນຕໍ່ກະສັດເຊເດກີຢາຊາບ ເມື່ອ

ຊາບແລ້ວພຣະອົງກໍສັ່ງໃຫ້ ເອເບັດເມເລັກນໍາພວກທະຫານຈໍານວນສາມສິບຄົນໄປດຶງເຢເຣມີຢາຂຶ້ນມາກ່ອນເພິ່ນຈະຕາຍ ດັ່ງນັ້ນເອເບັດເມເລັກຊາວເອທີໂອເປັຽຜູ້ນີ້ຈຶ່ງປະຕິບັດຕາມຄໍາສັ່ງຂອງກະສັດ. (38:7-13). ຕໍ່ຈາກນັ້ນມາເຢເຣມີຢາກໍຖືກກັກຂັງໃນບໍລິເວນເດີ່ນພຣະຣາຊວັງ.

ຊົງສັ່ງໃຫ້ ເຢເຣມີຢາເຂົ້າເຝົ້າເພື່ອຈະໄດ້ສອບຖາມເຣື່ອງທີ່ພຣະເຈົ້າຊົງສັ່ງເຢເຣມີຢາໃຫ້ມາບອກຍັງມີຫຍັງອີກແດ່? ຂ້າພະເຈົ້າພູມໃຈໃນການທີ່ກະສັດຊອກສແວງຫາຄໍາສັ່ງຂອງພຣະເຈົ້າກໍເທົ່າກັບວ່າເພິ່ນຊອກສແວງຫາຄວາມຈິງ ແຕ່ຄວາມຈິງບາງຄັ້ງຟັງແລ້ວກໍເຈັບດ້ວຍຫາກເຮົາຮັບຄວາມຈິງບໍ່ໄດ້. ໃນໂບດເຮົາກໍຄ້າຍຄືກະສັດອົງນີ້ແຫລະ ເມື່ອເຮົາເຂົ້າມາໃນໂບດຟັງຄໍາເທສນາຈາກສິດຍາພິບານ ຫລືອາຈານກໍລ້ວນແລ້ວແຕ່ຄວາມຈິງຊຶ່ງມາຈາກພຣະເຈົ້າທັງນັ້ນ. ບາງຄັ້ງຜູ້ນໍາການນະມັສການກ່າວວ່າ "ອາຈານ! ພຣະເຈົ້າມີພຣະປະສົງໃຫ້ອາຈານເວົ້າສິ່ງໃດກັບພວກເຮົາແລ້ວ ເຊີນອາຈານມາເວົ້າເລີຽ ພວກເຮົາພ້ອມທີ່ຈະຟັງ" ນີ້ເປັນຄໍາເວົ້າທີ່ໜ້າຟັງ ແຕ່ເມື່ອອາຈານເທສນາໄປແລ້ວຫລາຍຄົນກໍຄຽດໃຫ້ອາຈານ, ລາງຄົນບໍ່ຄຽດແຕ່ບໍ່ເຮັດຕາມຄໍາເທສນາປະການໃດ ມີຈໍານວນນ້ອຍຄົນທີ່ປະພຶດຕົນຕາມຄໍາເທສນາແລະໄດ້ຮັບພຣະພອນ.

ກະສັດເຊເດກີຢາເຊີນໃຫ້ເຢເຣມີຢາເວົ້າໃຫ້ເພິ່ນຟັງໃນສິ່ງທີ່ພຣະເຈົ້າຊົງສັ່ງ, ເພິ່ນຖາມວ່າ "ເຮົາຂໍຖາມເຈົ້າຂໍ້ນຶ່ງແລະບໍ່ຢາກໃຫ້ເຈົ້າປິດບັງສິ່ງໃດໄວ້" (ຂໍ້ 14). ເປັນຄໍາຖາມທີ່ຢາກຮູ້ຢາກເຫັນຄວາມຈິງແທ້, ແຕ່ຜູ້ປະກາດເຢເຣມີຢາຮູ້ດີວ່າ ຫາກເວົ້າຄວາມຈິງຕາມທີ່ພຣະເຈົ້າສັ່ງໃຫ້ເວົ້າເພິ່ນກໍຈະຖືກລົງໂທດເຖິງຕາຍ ຫາກເປັນການແນະນໍາຫລືຕັກເຕືອນເພິ່ນກໍຈະບໍ່ເຮັດຕາມຄໍາແນະນໍາ. ດັ່ງນັ້ນເພິ່ນຈຶ່ງທູນຕໍ່ກະສັດວ່າ "ຖ້າຂ້ານ້ອຍທູນຄວາມຈິງພຣະອົງກໍຈະລົງໂທດຂ້ານ້ອຍເຖິງຕາຍ ແຕ່ຖ້າຖວາຍຄໍາປຶກສາ ພຣະອົງຈະບໍ່ຮັບຟັງຂ້ານ້ອຍ" (ຂໍ້ 15). ຄໍາວ່າ "ບໍ່ຮັບຟັງ" ເຢເຣມີຢາໝາຍຄວາມວ່າບໍ່ເຮັດຕາມ.

ເມື່ອເປັນເຊັ່ນນັ້ນກະສັດເຊເດກີຢາຈຶ່ງຊົງສັນຍາຕໍ່ເຢເຣມີຢາເປັນຄວາມລັບວ່າ ພຣະຜູ້ເປັນເຈົ້າຜູ້ຊົງປະທານຊີວິດໃຫ້ເຮົາຊົງພຣະຊົນຢູ່ສັນໃດ ເຮົາຈະບໍ່ລົງໂທດເຈົ້າເຖິງຕາຍ ແລະຈະບໍ່ມອບເຈົ້າໄວ້ໃນກໍາມືຂອງຄົນທີ່ຢາກຈະຂ້າເຈົ້າສັນນັ້ນ" ເປັນຄໍາສັນຍາທີ່ຕໍ່ຮອງກັນ ຖ້າພຣະເຈົ້າບໍ່ໃຫ້ຂ້ອຍຕາຍ ຂ້ອຍຈະບໍ່ໃຫ້ເຈົ້າຕາຍ ຊຶ່ງມີຄວາມໝາຍ ວ່າຫາກເຢເຣມີຢາອ້ອນວອນຂໍໃຫ້ພຣະເຈົ້າໄວ້ຊີວິດຂອງກະສັດເຊເດກີຢາ ແລະເມື່ອພຣະເຈົ້າຊົງໄວ້ຊີວິດເພິ່ນໆກໍຈະໄວ້ຊີວິດຂອງເຢເຣມີຢາເຊັ່ນກັນ. ແຕ່ເຢເຣມີຢາໄດ້ແນະນໍາແລະເຕືອນກະສັດດັ່ງນີ້;

ກ. ໃຫ້ກະສັດຊົງຍອມແພ້ສົງຄາມຊີວິດຂອງເພິ່ນກໍຈະປອດພັຍ ພ້ອມທັງເມືອງກໍຈະບໍ່ຖືກທໍາລາຍຍັງບໍ່ເທົ່ານັ້ນພວກພຣະຣາຊະວົງຂອງກະສັດກໍຈະຢູ່ລອດ. (ຂໍ້ 17ຂ).

ຂ. ແຕ່ຖ້າບໍ່ຍອມແພ້ ເມືອງນີ້ຈະຖືກຊາວບາບີໂລນຍຶດເອົາເຂົາຈະເຜົາຜານມັນໃຫ້ພິນາດ ແລະກະສັດກໍໜີບໍ່ພົ້ນ (ຂໍ້ 18).

ເມື່ອກະສັດໄດ້ຍິນຄໍາແນະນໍາແລະຄໍາເຕືອນແລ້ວພຣະອົງກໍຫາທາງແກ້ຕົວຕ່າງໆນາໆ ຈົນເຢເຣມີຢາໄດ້ຂໍຮ້ອງເພິ່ນໃຫ້ເຊື່ອຟັງພຣະດໍາຣັດຂອງພຣະຜູ້ເປັນເຈົ້າ "ພຣະອົງຈະບໍ່ຖືກມອບໃຫ້ເຂົາດອກ ຂ້ານ້ອຍຂໍໃຫ້ພຣະອົງຊົງເຊື່ອຟັງ ພຣະດໍາຣັດຂອງອົງພຣະຜູ້ເປັນເຈົ້າ" (ຂໍ້ 20ກ). ເມື່ອມາເຖິງຕອນນີ້ເຮົາເຫັນໄດ້ຊັດແຈ້ງແລ້ວວ່າເຖິງແມ່ນເຢເຣມີຢາບອກຄວາມຈິງເພິ່ນກໍຈະຂ້າເຢເຣມີຢາແຕ່ກະສັດສັນຍາຈະບໍ່ຂ້າ ແລະເຢເຣມີຢາກ່າວວ່າຖ້າເປັນການແນະນໍາເພິ່ນກໍຈະບໍ່ຟັງຊຶ່ງແປວ່າບໍ່ເຮັດຕາມຄໍາແນະນໍາ ຄໍາເວົ້າຂອງເຢເຣມີຢານັ້ນຖືກຕ້ອງທຸກປະການ ແລະຖືກຈົນເຖິງຄົນສມັຍນີ້ ຫາກເຮົາເວົ້າຄວາມຈິງສິ່ງທີ່ພຣະເຈົ້າບອກໃຫ້ເວົ້າເພິ່ນກໍຊັງເຮົາຊໍ້າ ຄັນຫາກເຮົາບໍ່ເວົ້າບາງຄົນຂໍໃຫ້ເວົ້າແຕ່ບໍ່ ເຮັດຕາມທີ່ເຮົາບອກເຕືອນຈັກຢ່າງ.

<u>ຄໍາຖາມ:</u>

1. ເຈົ້າຊີວິດອົງໃຫມ່ມີຊື່ວ່າ ເຊເດກີຢາ ແປວ່າຫຍັງ? ເພື່ອຈະໃຫ້ຊື່ຂອງຄົນເຫມາະກັບຄວາມໝາຍເຮົາຈະເຮັດແນວໃດ?

໒. ທ່ານຈື່ໄດ້ບໍ່ຄັ້ງນຶ່ງພຣະເຈົ້າສັ່ງທ່ານເຮັດແຕ່ທ່ານບໍ່ໄດ້ເຮັດ?

3. ທ່ານຄິດແນວໃດກັບກະສັດເຊເດກີຢາ ຢາກຟັງສິ່ງທີ່ພຣະເຈົ້າກ່າວແຕ່ບໍ່ປະຕິບັດຕາມ?.

4. ຖານະທີ່ທ່ານເປັນຄຣິສຕຽນມາໂບດທຸກວັນທິດເພື່ອນະມັສການແລະຟັງສິ່ງທີ່ພຣະເຈົ້າເວົ້າກັບທ່ານຜ່ານນັກເທດ ຫລືສິດຍາພິບານ ເມື່ອຟັງແລ້ວທ່ານຄິດແນວໃດກັບອາຈານ?

5. ທ່ານເປັນຄົນແກ້ຕົວຄືກະສັດ ເຊເດກີຢາບໍ່? ຫາກບໍ່ເປັນແນວນັ້ນມື້ໃດທ່ານຈະປະຕິບັດຕາມພຣະເຈົ້າເວົ້າກັບທ່ານ?

# ບົດຮຽນທີ 12
# ເມື່ອຍາມຍາກລຳບາກ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ເຢເຣມີຢາ 32:1-15.
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ເຢເຣມີຢາ 32.
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ່ວ່າເຖິງແມ່ນຍາມລຳບາກພຣະເຈົ້າກໍຢູ່ນຳ.
ຄຳຖາມເພື່ອການສຳຣວດ ເຮົາມີຄວາມຫວັງອັນໃດໃນຍາມຍາກ.
ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ອຍໃຫ້ເຮົາເຂົ້າໃຈວ່າພຣະເຈົ້າຊົງເປັນຜູ້ຊ່ອຍ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້

ທ່ານອາດຈະແປກໃຈວ່າບົດຮຽນຂອງເຮົາຮຽນກັບຫລັງ ເພາະອາທິດແລ້ວພວກເຮົາຮຽນໃນເຢເຣມີຢາບົດ 37-38 ແລະ ອາທິດນີ້ພວກເຮົາກັບໄປບົດ 32. ຂ້າພະເຈົ້າຂໍອະທິບາຍວ່າປື້ມເຢເຣມີຢາບໍ່ໄດ້ລຽງລຳດັບບົດຕາມປົກກະຕິ ຊຶ່ງໝາຍຄວາມວ່າຕົວເລກຂອງບົດນັ້ນບໍ່ເປັນໄປຕາມລຳດັບ ດັ່ງນັ້ນຂ້າພະເຈົ້າຈຶ່ງນຳພາທ່ານໄປຮຽນບົດ 37-38 ກ່ອນເພື່ອເປັນການເຂົ້າໃນງ່າຍໃນບົດທີ 32 ທີ່ທ່ານກຳລັງຈະຮຽນຢູ່ໃນມື້ນີ້ເພາະບົດຄວາມຢູ່ທີ່ບົດ 37-38.

ເຫດການຕອນນີ້ໄດ້ ເກີດຂຶ້ນໃນຕອນບາບີໂລນຍຶດຄອງກຸງເຢຣູຊາເລັມ ໃນເວລາທີ່ເຢເຣມີຢາຖືກກັກຂັງໃນເດີ່ນພຣະຣາຊວັງ ແລະໃນເວລານັ້ນພີ່ນ້ອງຂອງເພີ່ນມາຢາມແລະຈ່າວຂາຍດິນນາຕອນທີ່ສັຕຣູຄອບຄອງໃຫ້ເພີ່ນ. ໂດຍການຊົງນຳຂອງອົງພຣະຜູ້ເປັນເຈົ້າເຢເຣມີຢາຈຶ່ງຊື້ນານີ້ໄວ້ໂດຍຫວັງວ່າໃນວັນນຶ່ງຂ້າງໜ້າພຣະເຈົ້າຈະນຳໄພ່ພົນຂອງພຣະອົງໃຫ້ກັບຄືນມາສ້າງກຸງເຢຣູຊາເລັມຂຶ້ນໃໝ່ແລະດິນຕອນນີ້ຈະເປັນປໂຍດໃນເວລານັ້ນ..

ເຢເຣມີຢາໃນຍາມຍາກ ( 32:1-5 )

ໃນຣາຊການປີທີສິບຂອງກະສັດເຊເດກີຢາແຫ່ງຢູດາ ຊຶ່ງກົງກັບຣາຊການທີສິບແປດຂອງກະສັດເນບູກາເນັດຊາປົກຄອງບາບີໂລເນັຽ. ດ້ວຍຄວາມຄຽດແຄ້ນຂອງກະສັດເນບູກາເນັດຊາທີ່ໄດ້ແຕ່ງຕັ້ງກະສັດເຊເດກີຢາຂຶ້ນເປັນກະສັດແລ້ວເຊເດກີກັບເນຣະຄູນຕໍ່ເນບູກາເນັດຊາ ຈຶ່ງເປັນຕົ້ນເຫດໃຫ້ເນດບູກາເນັດຊາສົ່ງກອງທັບບຸກໂຈມຕີຢູດາ.ໃນຂະນະທີ່ບຸກໂຈມຕີຢູດານັ້ນຜູ້ປະກາດພຣະທັມເຢເຣມີຢາຍັງເປັນຜູ້ຕ້ອງຫາຖາມຖືກກ່າວຫາວ່າປະກາດພຣະຄຳພຣະເຈົ້າເຣື່ອງຢູດາຈະພ່າຍແພ້ສົງຄາມແກ່ບາບີໂລນ, ພວກທະຫານໄດ້ຈັບເພີ່ນໃນເວລາທີ່ທະຫານບາບີໂລນຖອນທັບຄືນບາບີໂລເນັຽ. ເມື່ອເຫດການສງົບເຢເຣມີເອງກໍຄິດຈະອອກໄປເບິ່ງທີ່ດິນຂອງເພີ່ນທີ່ໄດ້ຊື້ໄວ້, ໃນຕອນທີ່ເພີ່ນກຳລັງຈະໄປນັ້ນທະຫານກໍຈັບເພີ່ນຖາມກ່າວຫາວ່າໜີຕາມສັດຕຣູບາບີໂລເນັຽ (37:13). ພວກເຂົາໄດ້ຈັບເພີ່ນສົ່ງ

ໄປຫາພວກເຈົ້ານາຍທີ່ຄຽດແຄ້ນຕໍ່ເພິ່ນຕາມທີ່ເຮົາໄດ້ຮຽນຜ່ານມາໃນອາທິດແລ້ວ. ຫລັງຈາກສືບສວນດຳເນີນຄະດີຜ່ານມາຫລາຍປະການແລ້ວ ເວລານີ້ເຢເຣມີຢາຍັງຖືກກັກຂັງໃນບໍຣິເວນພຣະຣາຊວັງຂອງກະສັດເຊເດກີຢາໂດຍມີທະຫານເຝົ້າຍາມຈັບຕາເບິ່ງຢູ່ບໍ່ໃຫ້ອອກຂອບເຂດເດີ່ນພຣະຣາຊວັງ.

ເຢເຣມີຢາຖືກສອບຖາມໂດຍກະສັດເຊເດກີຢາຫລາຍຄັ້ງຕໍ່ຫລາຍຫົນກ່ຽວກັບຄຳທຳນວາຍເຣື່ອງບ້ານເມືອງຂອງກະສັດເຊເດກີຢາ ເຖິງແມ່ນຈະຖາມເພິ່ນຈັກເທື່ອກໍຕາມເພິ່ນກໍຕອບຄວາມດຽວຄື ອົງພຣະຜູ້ເປັນເຈົ້າຈະປະປ່ອຍໃຫ້ກອງທັບບາບີໂລນເນັຽຍຶດເອົາເມືອງຂອງທ່ານ ແລະເຂົາກໍຈະເຜົາເມືອງນີ້ຖິ້ມສ່ວນຕົວກະສັດເຊເດກີຢາເຂົາກໍຈະຈັບເພິ່ນໄປຊ້ອງໜ້າກະສັດເນບູກາເນັດຊາ ດ້ວຍຄຳທຳນວາຍອັນບໍ່ປ່ຽນແປງນີ້ກະສັດຈຶ່ງຂັງເພິ່ນໄວ້ຕລອດມາ ນອກຈາກນັ້ນເຊເດກີຢາກໍຍັງສັ່ງໃຫ້ທະຫານສ້າງກຳແພງເມືອງໃຫ້ສູງແລະແຂງແຮງດີ ເພື່ອປ້ອງກັນສັດຕຣູບໍ່ໃຫ້ເຂົ້າເມືອງໄດ້, ດັ່ງນັ້ນພວກທະຫານບາບີໂລນຈຶ່ງລ້ອມເມືອງໄວ້ເປັນເວລາຫລາຍເດືອນເພາະບໍ່ສາມາດພັງກຳແພງເມືອງ ໄດ້ຈົນໃນທີ່ສຸດກອງທະຫານບາບີໂລເນັຽກໍຖອນທັບອອກໄປ. ໃນຂະນະທີ່ຢູດາຖືກລ້ອມຢູ່ນັ້ນເປັນຜົນສະທ້ອນໃຫ້ຕົວເມືອງຂາດເຂົ້າປາອາຫານເພາະບໍ່ສາມາດໄປທຳມາຫາກິນໄດ້.

<u>ຄວາມຫວັງມີດມົນ</u> (32:6-15)

ໂດຍການຊົງນຳຂອງອົງພຣະຜູ້ເປັນເຈົ້າເຢເຣມີຢາຈຶ່ງອົດທົນຕໍ່ເຫດການທັງປວງ, ທ່ານບໍ່ສາມາດອອກນອກບໍຣິເວນພຣະຣາຊວັງໄດ້ແຕ່ກະສັດອະນຸຍາດໃຫ້ຍາດພີ່ນ້ອງຢ້ຽມຍາມເພິ່ນໄດ້. ໃນເວລານັ້ນ ຮານາເມນລູກຊາຍຂອງຊານລຸມລູງເຢເຣມີຢາມາຢ້ຽມຢາມເຢເຣມີຢາ ແລະຂໍໃຫ້ເພິ່ນຊື້ນາຕອນນຶ່ງທີ່ດິນແດນເບັນຢາມິນ ເມືອງທານາທົດຊຶ່ງໃນເວລານີ້ທະຫານກຳລັງຄອບຄອງດິນຕອນນີ້ຢູ່. ກ່ອນອື່ນເຢເຣມີຢາອ້ອນວອນຂໍການຊົງນຳໃນການຊື້ຂາຍເສັຽກ່ອນ ດັ່ງນັ້ນຖານະທີ່ເຮົາເປັນຄຣິສຕຽນເຮົາຈຳຕ້ອງຮຽນເອົາແບບຢ່າງເຢເຣມີຢາ. ທ່ານເຊື່ອໃນການຊົງນຳຂອງອົງພຣະຜູ້ເປັນເຈົ້າຈຶ່ງຕົກລົງຊື້ນານັ້ນໄວ້ໃນຣາຄາສິບເຈັດຫລຽນ ພ້ອມບັນທຶກເປັນລາຍລັກອັກສອນເປັນທາງການທຸກຢ່າງ. ໜັງສືຊື້ຂາຍກັນນັ້ນເຢເຣມີຢາໄດ້ເຮັດໄວ້ສອງສະບັບຊຶ່ງໃບນຶ່ງປະທັບຕຣາແລະອີກໃບນຶ່ງບໍ່ປະທັບຕຣາ. ໜັງສືຊື້ຂາຍທັງສອງສະບັບແລະຕາດິນນີ້ໄດ້ໂອນໃຫ້ທ່ານບາຣຸກຊ້ອງໜ້າພວກພິຍານແລະໃຫ້ນຳເອົາໜັງສືນີ້ໄປເກັບໄວ້ໃນໄຫທີ່ປິດສນິດ. (ໄຫເປັນບ່ອນເກັບທີ່ປອດພັຍໃນສມັຍບູຮານ). ສິ່ງສຳຄັນທີ່ເຢເຣມີຢາໄດ້ເຮັດໜັງສືການຊື້ຂາຍນັ້ນເປັນບົດຮຽນທີ່ດີສຳລັບເຮົາທຸກຄົນຄື:

ກ. ທ່ານມີພິຍານໃນການຊື້ຂາຍ.
ຂ. ທ່ານເຮັດໜັງສືສອງສະບັບ. ຄືສບັບນຶ່ງປະທັບຕາແລະປິດຊອງໄວ້ ແລະອີກໃບນຶ່ງບໍ່ປະທັບຕຣາແລະບໍ່ປິດຊອງ.
ຄ. ທ່ານໂອນໃຫ້ທ່ານບາຣຸກຕໍ່ໜ້າພິຍານ ແລະສັ່ງໃຫ້ເກັບຮັກສາໄວ້ໃນບ່ອນປອກບໍ່ກັດ.

ຂ້າພະເຈົ້າຄິດວ່າບໍ່ມີໃຜດອກທີ່ຈະຊື້ດິນນາຕອນນີ້ຫາກບໍ່ແມ່ນພຣະເຈົ້າບັນດານໃຈໃຫ້ຊື້. ດິນຕອນນີ້ເຢເຣມີຢາເອງກໍບໍ່ຮູ້ວ່າມັນເປັນດິນທີ່ເຮັດຫຍັງໄດ້ແດ່ ແຖມຍັງຖືກຄອບຄອງໂດຍກອງທະຫານຂອງສັດຕຣູອີກ ພ້ອມກັນນັ້ນເຢເຣມີຢາເອງກໍຍັງຖືກກັກຂັງໄວ້ຢູ່ ບໍ່ຮູ້ວ່າຊີວິດຈະຍາວໄປຮອດໃສ. ຫາກຄິດຕາມຄວາມຄິດມະນຸດເຮົາແລ້ວເຮົາຄິດວ່າບໍ່ມີຫວັງຈະໄດ້ດິນນີ້ດອກ ນອກຈາກເສັຽເງິນຄ່າຊື້ໄປຊື່ໆ. ແຕ່ໃນບັ້ນປາຍບໍ່ເປັນດັ່ງຄວາມຄິດຂອງມນຸດ ເພາະວ່ານີ້ເປັນແຜນການໆຊົງໄຖ່ຂອງອົງພຣະຜູ້ເປັນເຈົ້າ, ພຣະເຈົ້າມີແຜນການດັ່ງນີ້:

ກ. ປະປ່ອຍໃຫ້ເຢເຣມີຢາຖືກກັກຂັງແລະຖືກຂົ່ມເຫັງ ເພື່ອຊ່ອຍຄົນທັງຫລາຍໃຫ້ໄດ້ພົ້ນ. ເຊັ່ນໂປໂລ

ຖືກັກຂັງຍັງນຳພາຄອບຄົວນາຍທັນມະໂຮງໃຫ້ເຊື່ອພຣະເຈົ້າ (ກຈກ 16:25:33).

ຂ. ຊົງສອນເຢເຣມີຢາໃຫ້ໄວ້ວາງໃຈການຊົງນຳ ແມ່ນແຕ່ໃນຍາມຍາກພຣະອົງກໍຢູ່ດ້ວຍ.

ຄ. ຊົງບັນດານໃຫ້ຊື້ທີ່ດິນເພື່ອແຜນການໃນອະນາຄົດ, ສ່ວນປັດຈຸບັນ

1. ຖືກກັກຂັງ ລໍຖ້າວັນຕາຍ.
2. ຊື້ທີ່ດິນທີ່ບໍ່ຮູ້ຈັກ.
3. ເປັນດິນຕອນທີ່ທະຫານສັດຕູຄອບຄອງ.

ເບິ່ງແລ້ວຄ້າຍຄືຫມົດຫວັງ ແລະເຮົາຄຶດວ່າເປັນໄປບໍ່ໄດ້, ແຕ່ທຸກຢ່າງເປັນໄປໄດ້ໃນພຣະນາມພຣະອົງເບິ່ງຊີວິດເຢເຣມີຢາບໍ່ແມ່ນຂອງງ່າຍດາຍທີ່ເຢເຣມີຢາຈະຕັດສິນໃຈຊື້ດິນນາທີ່ເປັນເຂດຂອງສັດຕູ ແຕ່ເມື່ອທ່ານໄວ້ວາງໃຈໃນການຊົງນຳຂອງພຣະເຈົ້າທ່ານກໍເຮັດໄດ້. ທຳນອງດຽວກັນບໍ່ແມ່ນຂອງງ່າຍທີ່ເດວິດເດັກລ້ຽງແກະຈະເຊື່ອວ່າເພິ່ນຈະກາຍເປັນກະສັດ ແຕ່ເມື່ອພຣະເຈົ້າຊົງນຳ ເພິ່ນກໍເປັນກະສັດໄດ້ (1ຊາມູເອນ 16:--31). ເຣື່ອງຂອງໂມເຊກໍຄືກັນ ເພິ່ນບໍ່ຄຶດວ່າເພິ່ນຈະສາມາດນຳອິສຣາເອນອອກເອຢິບໄດ້ ແຕ່ພຣະເຈົ້າຊົງໃຊ້ແລ້ວບໍ່ມີສິ່ງໃດທີ່ເປັນໄປບໍ່ໄດ້. ທຳນອງດຽວກັນມັນ ບໍ່ແມ່ນການງ່າຍທີ່ເຮົາທັງຫລາຍຈະເຊື່ອໄວ້ວາງໃຈໃນພຣະເຈົ້າທຸກຢ່າງ ເຖິງແມ່ນເຮົາຮູ້ວ່າທຸກສິ່ງເປັນໄປໄດ້ຫາກພຣະເຈົ້າພໍພຣະທັຍ ແຕ່ເຮົາບໍ່ໄດ້ເຮັດຕາມຄວາມເຂົ້າໃຈຂອງເຮົາ. ດັ່ງນັ້ນເຮົາຄວນຈະພິຈາຣະນາເບິ່ງປະວັດສາດ ໂດຍສະເພາະຢ່າງຍິ່ງຊີວິດຂອງເຢເຣມີຢາມີຄວາມລຳບາກຫລາຍປານໃດ?, ກະສັດເດວິດແລະໂມເຊເດເປັນຫຍັງຈຶ່ງສຳເຣັດ?, ຫາກເຮົາພິຈາຣະນາເບິ່ງແລ້ວມັນຈະຊ່ອຍໃຫ້ເຮົາປະຕິບັດຕາມຄຳສັ່ງຂອງພຣະເຈົ້າ ໄດ້ທຸກຢ່າງ ແລະພຣະພອນນັ້ນກໍຈະຕາມມາຈົນລົ້ນເຫລືອຈາກຕົວເຮົາໄປເຖິງຜູ້ອື່ນໄດ້.

ພຣະເຈົ້າໄດ້ຊົງສັນຍາໃຫ້ຄວາມຫວັງອີກໃນຂໍ້ 24-44. ແລະດິນນາທີ່ເຢເຣມີຢາໄດ້ຊື້ນັ້ນຈະມີຄຸນຄ່າ ພ້ອມທັງຣະບຽບວິທີການຊື້ຂາຍທີ່ເຢເຣມີຢາໄດ້ເຮັດນັ້ນຈະກາຍເປັນຕົວຢ່າງທີ່ດີຕລອດໄປ. ພຣະເຈົ້າຈະຊົງເຕົ້າໂຮມໄພ່ພົນຂອງພຣະອົງທີ່ແຕກກະຈາຍກັນໄປນັ້ນໃຫ້ໄດ້ກັບຄືນມາສ້າງເຢຣູຊາເລັມອີກຄັ້ງໃຫມ່. ພຣະເຈົ້າໄດ້ລົງໂທດເຂົາດ້ວຍຄວາມໂກດເຄືອງເຂົາແນວໃດ ພຣະອົງກໍຈະຊົງອວຍພອນເຂົາແນວນັ້ນ. ດິນດອນຕອນຫຍ້າທີ່ຖືກປະຮ້າງດ້ວຍເສິກ ສົງຄາມທີ່ເຕັມໄປດ້ວຍຊາກສົບແລະການເຜົາໄຫມ້ທີ່ບໍ່ມີໃຜຕ້ອງການກໍຈະຖືກປັບປຸງມີການຊື້ຂາຍກັນອີກ, ນີ້ຄືພຣະ ສັນຍາຂອງພຣະເຈົ້າໃຫ້ຄວາມຫວັງແກ່ ເຢເຣມີຢາ. ດັ່ງນັ້ນຄວາມເຊື່ອຂອງເຢເຣມີຢາທີ່ຊື້ດິນນາຕອນນັ້ນເປັນຜົນປໂຍດຫລາຍທີ່ສຸດໃນບັ້ນປາຍ.

<u>ຄຳຖາມ</u>

1. ເຢເຣມີຢາມີຄວາມລຳບາກອັນໃດແດ່?

2. ເປັນດ້ວຍເຫດໃດເຢເຣມີຢາຈຶ່ງຕັດສິນໃຈຊື້ດິນນາໃນເຂດຄອບຄອງຂອງສັດຕູ?

3. ການເຮັດຫນັງສືຊື້ຂາຍມີຄວາມສຳຄັນ ແລະສອນເຮົາຢ່າງໃດ?

4. ຊີວິດຂອງເຢເຣມີຢາໄດ້ໃຫ້ກຳລັງໃຈເຮົາຢ່າງໃດ ຫາກເຮົາຄຶດວ່າເຮົາລຳບາກໃນການຮັບໃຊ້?

5. ດ້ວຍຄວາມເຊື່ອແລະຄວາມໄວ້ວາງໃຈຂອງເຢເຣມີຢາທີ່ມີຕໍ່ອົງພຣະຜູ້ເປັນເຈົ້ານັ້ນບັ້ນປາຍເປັນແນວໃດ?

6. ຢ່າຄິດວ່າທ່ານມີບັນຫາໜັກເລີຍ, ບາງທີ່ບັນຫາທີ່ທ່ານມີອາດຈະເປັນທີ່ຖວາຍກຽດແດ່ພຣະເຈົ້າກໍໄດ້ຫາກທ່ານເຮັດຄືເຢເຣມີຢາ.

# ບົດຮຽນທີ 13
# ສົດຊື່ນຂຶ້ນໃຫມ່

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ເຢເຣມີຢາ 31:27-34

ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້: ເຢເຣມີຢາ 31:27-34

ຈຸດສໍາຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ່ວ່າຄວາມເຊື່ອໃນພຣະເຈົ້າເປັນທີ່ນທາງແຫ່ງຄວາມຫວັງ.

ຄໍາຖາມເພື່ອການສໍາຣວດ ຊີວິດເມື່ອຕົກຕໍ່າແລ້ວຈະຟື້ນຂຶ້ນໄດ້ແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ອຍໃຫ້ເຮົາເຂົ້າໃຈວ່າພຣະເຈົ້າຊົງໃຫ້ຄວາມຫວັງໃຫມ່.

ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ນໍາຂ່າວປະເສີດຂອງພຣະເຈົ້າໄປສູ່ທຸກຄົນທີ່ພົບເຫັນ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຊັກຊວນໄພ່ພົນຂອງອົງພຣະຜູ້ເປັນເຈົ້າໃຫ້ຖວາຍຕົວຮັບໃຊ້.

ຄວາມຫວັງໃຫມ່ຂອງອິສຣາເອນເຫມືອນຊາວນາຜູ້ນຶ່ງໄດ້ຫວ່ານແນວເຂົ້າປູກກະບຸງສຸດທ້າຍທີ່ມີຢູ່ລົງດິນ,ແນວເຂົ້າປູກກະບຸງນີ້ໄດ້ເກັບໄວ້ໃນຍາມອຶດຫິວ. ຊາວນາຜູ້ນີ້ລາວບໍ່ໄດ້ກິນເຂົ້າກະບຸງສຸດທ້າຍກ່ອນຫນ້າຣະດູນາມາເຖິງຄືກ່ອນຈະຮອດຣະດູເຮັດນານັ້ນ ລາວໄດ້ຫມົດເຂົ້າກິນກ່ອນ ແຕ່ລາວໄດ້ຈຶ່ງແນວເຂົ້າປູກໄວ້ໃນຣະດູເຮັດນາປີຕໍ່ໄປລາວຈໍາຕ້ອງອົດຫິວໄປຊົ່ວລະຍະນຶ່ງ. ສົມມຸດວ່າລາວໄດ້ເອົາເຂົ້າປູກກະບຸງສຸດທ້າຍນີ້ໄປກິນເສັຽລາວກໍຈະອີ່ມທ້ອງໄດ້ຢູ່ສອງຫລືສາມວັນເທົ່ານັ້ນ, ແຕ່ ດ້ວຍຄວາມອົດສົ້ນໄວ້ກິນຫວານຣະດູນາໃຫມ່ຈຶ່ງເຫັນຫມາກຜົນເກີນກວ່າກະບຸງສຸດທ້າຍ.

## ພັນທະສັນຍາເດີມ

ໄດ້ຊົງສັນຍາກັບອັບຣາຮາມໃນປະຖົມມະການບົດ 15 . ຈະເປັນແຜ່ນເຫລັກກ້າປົກປັກຮັກສາແລະປະທານບໍາເຫນັດ ໃຫ້ມີລູກເຕັມບ້ານ ມີຫລານເຕັມເມືອງຫລວງຫລາຍຄືກັບດວງດາວໃນທ້ອງຟ້າທີ່ບໍ່ມີໃຜສາມາດນັບໄດ້. ພຣະເຈົ້າໄດ້ຊົງມອບດິນແດນໃຫ້ແກ່ອັບຣາຮາມ. "ເຮົາຂໍມອບດິນແດນນີ້ໃຫ້ແກ່ເຊື້ອສາຍຂອງເຈົ້າ ຕັ້ງແຕ່ແມ່ນໍ້າເຂດແດນປະເທດເອຢິບ ຈົນເຖິງແມ່ນໍ້າໃຫຍ່ເອີຟຣາດ" (ປຖກ 15:21). ນັ້ນແມ່ນຄໍາສັນຍາທີ່ພຣະເຈົ້າມີໄວ້ກັບອັບຣາຮາມ ເພື່ອເລົ້າໂລມໃຈໂດຍໃຫ້ສັນຍາກ່ອນໃຫ້ມໍຣະດົກຕ່າງໆ. ແຕ່ອັບຣາຮາມກັບທູນພຣະເຈົ້າວ່າ "ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ພຣະອົງຢາກປະທານບໍາເຫນັດໃຫ້ຂ້ານ້ອຍເຮັດຫຍັງ? ເພາະຂ້ານ້ອຍບໍ່ມີລູກຜູ້ຈະສືບມໍຣະດົກຈາກຂ້ານ້ອຍ, (ຂ້ານ້ອຍມີ) ແຕ່ຜູ້ດຽວກໍຄື ເອລີເອເຊຊາວດາມັສ ພຣະອົງບໍ່ໄດ້ຊົງປະທານລູກໃຫ້ຂ້ານ້ອຍ ແລະຜູ້ນຶ່ງໃນຈໍານວນຂ້າໃຊ້ກໍຈະເປັນຜູ້ໄດ້ຮັບມໍຣະດົກຂອງຂ້ານ້ອຍ" ພຣະຜູ້ເປັນເຈົ້າຊົງຕອບອັບຣາຮາມວ່າ "ຂ້າໃຊ້ຜູ້ນີ້ຈະບໍ່ສືບມໍຣະດົກຂອງເຈົ້າດອກ ແມ່ນລູກຊາຍຂອງເຈົ້າຈະເປັນຜູ້ໄດ້ຮັບ (ປຖກ 15:2-4). ນອກຈາກພຣະເຈົ້າໄດ້ໂຜດປະທານລູກໃຫ້ກັບອັບຣາຮາມເມື່ອເພິ່ນທູນຕໍ່ພຣະເຈົ້າແລ້ວ ອັບຣາຮາມຍັງໄດ້ຊື່ວ່າເປັນບິດາແຫ່ງຄວາມເຊື່ອຈົນເຖິງທຸກ

ວັນ ນີ້, ເຮົາທັງຫລາຍກາຍເປັນລູກຂອງອັບຣາຮາມທາງຄວາມເຊື່ອຂອງພວກເຮົາ.

<u>ຄວາມຫວັງໃຫມ່,</u>( 31:27-32)

ເຢເຣມີຢາທຳນວາຍຂ່າວດີໃຫ້ແກ່ຊົນຊາດອິສຣາເອນ ແລະຊາວຢູດາໄດ້ຟັງດ້ວຍຄວາມອີ່ມໃຈ. ທ່ານກ່າວວ່າພຣະຜູ້ເປັນເຈົ້າຊົງກ່າວວ່າ "ເມື່ອເວລານັ້ນມາເຖິງ ເຮົາຈະເຮັດໃຫ້ປະເທດອິສຣາເອນແລະຢູດາ ເຕັມໄປດ້ວຍຄົນແລະສັດທັງຫລາຍ. ແຕ່ກ່ອນເຮົາໄດ້ເຝົ້າເບິ່ງເພື່ອທຳລາຍເຂົາ ຄືເພື່ອຖອນອອກເພື່ອເຮັດໃຫ້ລົ້ມລົງແລະນຳເຫດຮ້າຍສັນໃດ ດັ່ງນັ້ນເຮົາຈຶ່ງຈະເຝົ້າເບິ່ງເຂົາເພື່ອປູກຝັງແລະສ້າງຂື້ນສັນນັ້ນ" (31:27-28). ເມື່ອປະກາດຂ່າວດີແລ້ວ ປະຊາຊົນຕ່າງກໍມີຄວາມຊົມຊື່ນຍິນດີຂອບພຣະຄຸນພຣະເຈົ້າ ທີ່ຊົງອະພັຍຄວາມຜິດບາບຂອງພວກເຂົາໆຈະກັບຄືນບ້ານເກີດເມືອງນອນຂອງຕົນທີ່ໄດ້ປະຮ້າງໄປ ພວກເຂົາຈະກັບຄືນໄປສ້າງສາກຸງເຢຣູຊາເລັມຂື້ນໃຫມ່ໃຕ້ການນຳຂອງກະສັດອົງດຣວຄືກະສັດເດວິດ. ພຣະເຈົ້າຊົງກ່າວວ່າ "ເຮົາຈະໃຫ້ຫມູ່ເຈົ້າມີພວກຜູ້ປຶກສາທີ່ເຊື່ອຟັງເຮົາ ແລະເຂົາຈະປຶກສາຫມູ່ເຈົ້າດ້ວຍສະຕິປັນຍາແລະດ້ວຍຄວາມເຂົ້າໃຈ" (ເຢເຣມີຢາ 3:15). "ອິສຣະເອນຈະຮ່ວມກັບຢູດາ ແລະເຂົາຈະກັບຄືນມາຈາກການເປັນຊະເລີຍໃນຕ່າງຖິ່ນທາງທິດເຫນືອພ້ອມກັນ ແລະຈະຄືນມາຍັງດິນແດນທີ່ເຮົາໄດ້ມອບໃຫ້ບັນພະບຸຣຸດຂອງພວກເຂົາເປັນກຳມະສິດອັນຖາວອນ" (ເຢເຣມີຢາ 3:18).

ຂ່າວນີ້ຄ້າຍກັບວ່າຮຸ່ງອາຣຸນວັນໃຫມ່ຂອງອິສຣະເອນແລະຢູດາທີ່ໄດ້ຕົກເປັນຊະເລີຍເສິກ. ໃນຂະນະທີ່ເຂົາເປັນຊະເລີຍຢູ່ນັ້ນ ວັນ, ເດືອນ, ປີບໍ່ມີຄວາມຫມາຍຫຍັງສຳລັບເຂົາ, ມີກາງວັນກໍເຫມືອນກັບກາງຄືນເພາະຊີວິດຂາດຄວາມ ຫວັງ, ຂາດອະນາຄົດ. ແຕ່ເມື່ອເຂົາຮ້ອງອອກພຣະນາມພຣະເຈົ້າດ້ວຍໃຈຈຶ່ງຂໍຄວາມເມດຕາກະຣຸນາ, ຂໍອະພັຍຄວາມຜິດບາບຂອງເຂົາທີ່ໄດ້ກະທຳທີ່ຜ່ານມາ ພຣະອົງກໍບໍ່ເສີຍຊາແລະມີພຣະທັຍສົງສານເຂົາ. ບັດນີ້ພຣະເຈົ້າຊົງເມຕາພວກເຂົາ, ຊົງເອີ້ນເຂົາກັບຄືນມາຍັງບ້ານເຮືອນ ແລະດິນດອນຕອນຫຍ້າຂອງເຂົາທີ່ໄດ້ປະຖິ້ມໄປຍ້ອນເສິກສົງຄາມ ໃນການກັບຄືນມາຄັ້ງນີ້ພຣະອົງໄດ້ສັນຍາວ່າ "ເປັນກຳມະ ສິດອັນຖາວອນ". ພຣະເຈົ້າໄດ້ໃຫ້ອິສຣະເອນແລະຢູດາມີຄວາມຫວັງໃຫມ່ ພ້ອມທັງສັນຍາຈະເບິ່ງແຍງດູແລໃຫ້ສົມພຣະອົງໄດ້ລົງໂທດເຂົາມາແລ້ວ. ແລະພຣະເຈົ້າກໍຈະໂຜດ ປະທານໃຫ້ເຂົາມີຜູ້ປຶກສາທີ່ເຊື່ອຟັງພຣະອົງ.

"ເມື່ອເວລານັ້ນມາເຖິງ ປະຊາຊົນຈະບໍ່ກ່າວຕໍ່ໄປອີກວ່າ ພໍ່ກິນຫມາກອະງຸ່ນດິບ ແຕ່ລູກເຂັດແຂ້ວ" (ເຢເຣມີຢາ 31:29). ພາສາລາວອາດຈະເວົ້າໄດ້ວ່າເປັນຄຳສຸພາສິດຊຶ່ງມີຄວາມຫມາຍຄວາມວ່າຄົນໃນສມັຍກ່ອນເຮັດບາບບາບນັ້ນກັບ ມາສນອງຄົນສມັຍນີ້, ດັ່ງນັ້ນພຣະເຈົ້າຈຶ່ງກ່າວຕໍ່ໄປວ່າ ແຕ່ວ່າໃຜກໍຕາມທີ່ກິນຫມາກອະງຸ່ນດິບຈະຕ້ອງເຂັດແຂ້ວ ແລະທຸກຄົນທີ່ເຮັດບາບຈະຕ້ອງຕາຍຍ້ອນຄວາມບາບ (ເຢເຣມີຢາ 31:30). ເມື່ອເວລານັ້ນມາເຖິງມີຄວາມຫມາຍ ວ່າ: ເມື່ອເວລາປະຊາຊົນກັບມາສ້າງເຢຣູຊາເລັມຂື້ນໃຫມ່ ຜູ້ໃດເຮັດບາບຜູ້ນັ້ນຈະຕ້ອງຮັບໂທດ.

<u>ພຣະສັນຍາໃຫມ່</u> (31:31-34)

ເຢເຣມີຢາກ່າວສົມທຽບໃນຣະວ່າງພຣະສັນຍາເດີມແລະພຣະສັນຍາໃຫມ່ບໍ່ເຫມືອນກັນ. "ເມື່ອເວລານັ້ນມາເຖິງເຮົາຈະໃຫ້ຄຳຫມັ້ນສັນຍາໃຫມ່ແກ່ປະຊາຊົນອິສຣາເອນແລະຢູດາ ຄຳຫມັ້ນສັນຍານີ້ຈະບໍ່ເຫມືອນທີ່ເຮົາໃຫ້ບັນພະບຸຣຸດຂອງເຂົາຄາວຈູງມືເຂົາອອກຈາກເອຢິບ. ເຖິງແມ່ນເຮົາເປັນພຣະຜູ້ເປັນເຈົ້າຂອງເຂົາ ເຂົາກໍບໍ່ສັດຊື່ຕໍ່ຄຳຫມັ້ນ ສັນຍາທີ່ເຮົາໄດ້ໃຫ້" (ຂໍ້ 31-32). ພຣະເຈົ້າໄດ້ໃຫ້ສັນຍາດ້ວຍພຣະກຽດຂອງພຣະອົງ ເພື່ອຜູກສຳພັນອັນໃກ້ຊິດກັບໄພ່ພົນຂອງພຣະອົງ. ເພາະວ່າພຣະສັນຍາທີ່ພຣະອົງຊົງຂຽນທີ່ກະດານຫີນທີ່ພູເຂົາຊີນາຍນັ້ນພວກເຂົາບໍ່ສາ

ມາດປະຕິບັດໄດ້ທຸກປະການ, ໃນຄຳສັນຍາໃໝ່ນີ້ພຣະອົງຈະບໍ່ຂຽນໃສ່ກະດານຫີນ ຫລືສິ່ງໃດໆ ແຕ່ພຣະອົງຈະຊົງຂຽນໄວ້ໃນໃຈເຂົາທຸກຄົນ. "ເຮົາຈະໃຫ້ຄຳຫມັ້ນສັນຍາແກ່ປະຊາຊົນອິສຣາເອນດັ່ງນີ້ ຄືເຮົາຈະບັນຈຸພຣະຄຳຂອງເຮົາໄວ້ໃນໃຈຂອງເຂົາ ເຮົາຈະເປັນພຣະເຈົ້າຂອງເຂົາ ແລະເຂົາຈະເປັນໄພ່ພົນຂອງເຮົາ" (ຂໍ້ 33).

ກ. ພຣະສັນຍາໃໝ່ຂຽນໄວ້ໃນໃຈ (ບໍ່ແມ່ນຂຽນໃສ່ຫີນຄືບັນຍັດສິບປະການ.

ຂ. ເປັນພຣະເຈົ້າຂອງເຂົາ (ໝາຍຄວາມວ່າເປັນຜູ້ປົກປ້ອງຄຸ້ມຄອງ, ລ້ຽງດູເບິ່ງແຍງ).

ຄ. ເປັນໄພ່ພົນຂອງເຮົາ (ໝາຍຄວາມວ່າເປັນເໝືອນລູກ, ຮັກກັນເໝືອນພໍ່ກັບລູກ)

ສມັຍກະສັດເດວິດເຮັດຜິດບາບເພິ່ນໄດ້ອ້ອນວອນຂໍອະພັຍດັ່ງນີ້: ຂໍຊົງຊຳຮະລ້າງຄວາມຊົ່ວຂອງຂ້ານ້ອຍໃຫ້ ສູນສິ້ນໄປ ແລະທຳໃຫ້ຂ້ານ້ອຍຂາວສະອາດຈາກຄວາມຜິດຂອງຂ້ານ້ອຍ ຂ້ານ້ອຍຍອມຮັບເອົາຄວາມຜິດຂ້ານ້ອຍຮູ້ຈັກຄວາມຜິດຂອງຂ້ານ້ອຍຕລອດມາ ຂ້ານ້ອຍໄດ້ເຮັດຜິດຕໍ່ສູ້ພຣະອົງເທົ່ານັ້ນ.ພຣະເຈົ້າຂາ ຂໍຊົງສ້າງຈິດໃຈຂ້ານ້ອຍໃຫ້ບໍຣິສຸດ ຂໍພຣະອົງຊົງສວມຈິດວິນຍານທີ່ສັດຊື່ໃຫ້ແກ່ຂ້ານ້ອຍ ຂໍຢ່າໄລ່ຂ້ານ້ອຍອອກຈາກພຣະພັກພຣະອົງ ແລະຢ່າຖອນພຣະວິນຍານບໍຣິສຸດຂອງພຣະອົງໄປຈາກຂ້ານ້ອຍ ຂໍຊົງປະທານຄວາມປິຕິຍິນດີອີກ ຄືຄວາມຍິນດີທີ່ມາຈາກຄວາມຊ່ວຍໃຫ້ພົ້ນຂອງພຣະອົງ ແລະຂໍຊົງກະທຳໃຫ້ຈິດໃຈຂອງຂ້ານ້ອຍເຊື່ອຟັງ".( ເພງສັຣເສີນ 51).

ເນື່ອງຈາກຄວາມທຸກຍາກລຳບາກເລີ້ມແຕ່ເນບູກາເນັດຊາໄດ້ແຕ່ຕັ້ງເຊເດກີຢາຂຶ້ນເປັນກະສັດຂອງຢູດາ ປະເທດຊາດບ້ານເມືອງມີແຕ່ຄວາມວຸ້ນວາຍນຳເສິກສົງຄາມພາຍນອກ ແລະສົງຄາມພາຍໃນຕລອດມາຈົນບ້ານເມືອງໄດ້ແຕກຫັກສລາຍກາຍເປັນຂີ້ເຖົ່າໄຟ ຍ້ອນພວກຜູ້ປົກຄອງບໍ່ດີກິນແຮງປະຊາຊົນ ແລະຍັງເປັນຜູ້ປົກຄອງທີ່ບໍ່ມີຄວາມເຊື່ອໃນພຣະເຈົ້າ ເຖິງແມ່ນພະເຈົ້າໄດ້ສົ່ງເຢເຣມີຢາມາບອກເຕືອນກະສັດກໍບໍ່ຟັງສຽງ ດັ່ງນັ້ນພຣະເຈົ້າຈຶ່ງປະປ່ອຍໃຫ້ສັດຕຣູເຂົ້າມາຣຸກຮານບ້ານເມືອງ. ພວກສັດຕຣູໄດ້ຈູດບ້ານເຜົາເມືອງແລະພວກປະຊາຊົນຖືກຈັບໄປເປັນຊະເລີຍທີ່ບາບີໂລນ ເມື່ອເວລາເຂົາມີຄວາມທຸກຍາກລຳບາກເຂົາຈຶ່ງພາກັນເອີ້ນຫາພຣະເຈົ້າ ແລະດຽວນີ້ພວກເຂົາຮູ້ຈັກພຣະເຈົ້າດີ ດັ່ງນັ້ນພຣະເຈົ້າຈຶ່ງກ່າວວ່າ ພຣະເຈົ້າຊາວອິສຣາເອນໃຜໆກໍຮູ້ຈັກພຣະອົງ. ເພື່ອນບ້ານບໍ່ຈຳເປັນຕ້ອງສັ່ງສອນ ຫລືແນະນຳໃຫ້ຮູ້ຈັກເຄົາຣົບຢຳເກງພຣະເຈົ້າ, ເພາະເຂົາທັງຫມົດຮູ້ຈັກພຣະອົງແລ້ວ.

ພຣະອົງຊົງສັນຍາອີກວ່າຈະອະພັຍບາບແກ່ເຂົາ ແລະຈະບໍ່ຈຳຄວາມຜິດຂອງເຂົາອີກດ້ວຍ. "ຕໍ່ໄປຈະບໍ່ມີໃຜໃນພວກເຂົາສອນເພື່ອນບ້ານແລະພີ່ນ້ອງຂອງຕົນວ່າຈົ່ງຮູ້ຈັກພຣະຜູ້ເປັນເຈົ້າ ເພາະວ່າເຂົາທັງຫມົດຕັ້ງແຕ່ຜູ້ນ້ອຍທີ່ສຸດເຖິງຜູ້ໃຫຍ່ທີ່ສຸດຈະຮູ້ຈັກເຮົາ ເຮົາຈະອະພັຍບາບແກ່ເຂົາ ແລະບໍ່ຈົດຈຳຄວາມຜິດຂອງເຂົາອີກຕໍ່ໄປ" (ຂໍ້ 34).

ກ. ອະພັຍບາບ (ໝາຍຄວາມວ່າຍົກເລີກຄວາມຜິດບາບທີ່ໄດ້ກະທຳ)

ຂ. ບໍ່ຈົດຈຳຄວາມຜິດ (ໝາຍຄວາມວ່າລຶບລ້າງບັນຊີ)

<u>ຄຳຖາມ</u>

1. ເມື່ອຊີວິດມີບັນຫາທ່ານຄິດວ່າມີພຣະເຈົ້າຢູ່ຄຽງຂ້າງທ່ານບໍ່?

2. ທ່ານຄິດວ່າພຣະເຈົ້າຊົງນຳພາຊີວິດປະຈຳວັນທ່ານດ້ວຍສິ່ງໃດ?

3. ທ່ານຮູ້ສຶກວ່າພຣະຄຸນພຣະເຈົ້າມີແນວໃດຕໍ່ທ່ານ?

4. ເມື່ອມີຄວາມຜິດພາດໃນຊີວິດ ຫລືມີບັນຫາທ່ານມັກຈະຖິ້ມໃສ່ຜູ້ອື່ນບໍ່? (ເປັນນຳ.......ນັ້ນແຫລະ).

5. ທ່ານຄິດວ່າມີຄວາມບາບບາງຢ່າງໃນຕົວທ່ານທີ່ພຣະເຈົ້າຈະບໍ່ລືບລ້າງບໍ່? ຢ່າລືມວ່າພຣະເຈົ້າສັນຍາຈະລຶບລ້າງ.

6. ວັນນີ້ທ່ານມີສິ່ງໃດຈະສາຣະພາບຕໍ່ພຣະເຈົ້າບໍ່? ຫາກເຮົາສາຣະພາບພຣະອົງກໍຈະໃຫ້ຄວາມຫວັງໃໝ່ແກ່ເຮົາ ເໝືອນຊົງໃຫ້ຊາວອິສຣາເອນແລະຊາວຢູດານັ້ນ.